# ແຜນຈັດສັນ

## ການນຳໃຊ້ທີ່ດິນ

ບ້ານໂນນສະວ່າງ, ບ້ານເມືອງໂຮງ ແລະ ບ້ານນາຈານໃຫຍ່ – ການຄຸ້ມຄອງຈັດສັນທີ່ດິນ ແລະ ການປະເມີນການພັດທະນາທີ່ສົມບູນແບບ ເພື່ອການວາງແຜນແບບຍືນຍົງ.

## ບົດລາຍງານ ວິຊາການ



ຈັດຕັ້ງປະຕິບັດໂດຍ

ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫລວງພະບາງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ

## "ບ້ານໂນນສະຫວ່າງ" ເມືອງ ຊົນນະບູລີ ແຂວງ ສະຫວັນນະເຂດ




# ກະກຽມໂດຍ:

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງຊົນນະບູລີ

ກັນຍາ 2025

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ
ເຈົ້າເມືອງໆ ຊົນນະບູລີ

ເລກທີ.517....../ຊນລ
ເມືອງຊົນນະບູລີ, ວັນທີ.2...10...2025

# ຂໍ້ຕົກລົງ
## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້
## ແຜນຈັດສັນການນຳໃຊ້ທີ່ດິນບ້ານ ໂນນສະຫວ່າງ, ເມືອງຊົນນະບູລີ, ແຂວງ ສະຫວັນນະເຂດ

- ອີງຕາມ ກົດໝາຍ ວ່າດ້ວຍ ປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກທີ IV ໝວດທີ 4, ມາດຕາ 40 ຂໍ້ທີ 7;
- ອີງຕາມ ກົດໝາຍ ວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານໂນນສະຫວ່າງ, ເມືອງຊົນນະບູລີ, ແຂວງສະຫວັນນະເຂດ ສະບັບເດືອນ ກັນຍາ 2025;
- ອີງຕາມ ໜັງສືສະເໜີ ຂອງ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງຊົນນະບູລີ, ສະບັບເລກທີ 188 /ຫຊສ.ຊນລ, ວັນທີ 30 ກັນຍາ 2025.

## ເຈົ້າເມືອງຊົນນະບູລີ ຕົກລົງ:

ມາດຕາ 1 ຮັບຮອງ ແລະ ປະກາດໃຊ້ ແຜນຈັດສັນການນຳໃຊ້ທີ່ດິນ ຂອງ ບ້ານໂນນສະຫວ່າງ, ເມືອງຊົນນະບູລີ, ແຂວງສະຫວັນນະເຂດ ສະບັບເດືອນ ກັນຍາ 2025.

ມາດຕາ 2 ມອບໃຫ້ຫ້ອງການທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຊີ້ນຳການຈັດຕັ້ງປະຕິບັດໄປຕາມແຜນທີ່ກຳນົດໄວ້ ແລະ ແຜນສະບັບນີ້ເປັນນິຕິກຳຄຸ້ມຄອງເພື່ອຮັບປະກັນສິດໃນການນຳໃຊ້ໃນອານາຄົດ.

ມາດຕາ 3 ອົງການປົກຄອງບ້ານ, ກຸ່ມບ້ານ ແລະ ປະຊາຊົນບັນດາເຜົ່າຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ, ການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ແຜນການດັ່ງກ່າວໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ມີຄວາມຮັບປະ ກັນ ທາງດ້ານການປົກປັກຮັກສາສະພາບແວດລ້ອມ, ລະບົບນິເວດກະສິກຳ ແລະ ປ່າໄມ້, ທຸກການປ່ຽນ ແປງ ຫຼື ການຫັນປ່ຽນປະເພດການນຳໃຊ້ທີ່ດິນຈະຕ້ອງໄດ້ຜ່ານການພິຈາລະນາ ແລະ ອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງຕາມລະບຽບກົດໝາຍກຳນົດ.

ມາດຕາ 4 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮກ. ເຈົ້າເມືອງຊົນນະບູລີ

ແຂວງສະຫວັນນະເຂດ ★ ເຈົ້າເມືອງ ເມືອງຊົນນະບູລີ ★

ສຸບິນ ຫຼວງດ້ວງ
Soubinh LUANGDUANG

# ຄຳນຳ

ເພື່ອຈັດຕັ້ງຜັນຂະຫຍາຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທີ່ດິນສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມີຖຸນາ 2019, ມະຕິຂອງ ສະພາແຫ່ງຊາດ ເລກທີ 098/ສພຊ, ລົງວັນທີ 28 ມີຖຸນາ 2018 ວ່າດ້ວຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030. ພ້ອມທັງເປັນການຈັດຕັ້ງປະຕິບັດຄູ່ມືແນະນຳກ່ຽວກັບການສ້າງແຜນຈັດສັນທີ່ດິນຂັ້ນບ້ານ ສະບັບປີ 2022 ແລະ ເປັນບ່ອນອີງໃນການຄຸ້ມຄອງ ແລະ ຕິດ ຕາມກວດກາ ວຽກງານຈັດສັນທີ່ດິນຂັ້ນບ້ານໃຫ້ມີປະສິດທິພາບ, ປະສິດທິຜົນ ແນໃສ່ຄຸ້ມຄອງ, ປົກປັກຮັກສາ, ພັດທະ ນາ ແລະ ນຳໃຊ້ທີ່ດິນ ລວມທັງປົກປັກຮັກສາສິ່ງແວດລ້ອມ, ພ້ອມທັງເຮັດໃຫ້ທີ່ດິນມີມູນຄ່າ ເພີ່ມຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ.

ແຜນຈັດສັນການນຳໃຊ້ທີ່ດິນ ສະບັບນີ້ ຈະເປັນເອກະພສານພື້ນຖານສຳຄັນ ປະກອບດ້ວຍ 7 ພາກ ແລະ ສ້າງຂຶ້ນບົນພື້ນຖານຄວາມຮຽກຮ້ອງຕ້ອງການທາງດ້ານວິຊາການໃນການສ້າງແຜນທີ່ການນຳໃຊ້ທີ່ດິນຂັ້ນບ້ານຂຶ້ນ ຊຶ່ງໃນນັ້ນລວມມີ ຫຼັກການ, ວິທີການທີ່ຈຳເປັນ ຊຶ່ງມີບາດກ້າວ ແລະ ຂັ້ນຕອນໃນການສຳຫຼວດ, ການຈັດແບ່ງເຂດທີ່ດິນ, ການຈັດປະເພດທີ່ດິນໃນພາກປະຕິບັດຕົວຈິງ ແລະ ໃຫ້ຖືກຕ້ອງຕາມເນື້ອໃນຂອງກົດໝາຍ, ດຳລັດ ແລະ ລະບຽບການ ຕ່າງໆ ທີ່ພົວພັນກັບວຽກງານດັ່ງກ່າວນີ້ ໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ມີປະສິດທິຜົນສູງ ຂຶ້ນເລື້ອຍໆ. ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ ຈະມີການທົບທວນ ແລະ ປັບປຸງແຕ່ລະໄລຍະ ເພື່ອລາຍງານສະພາບບັນຫາຂອງການນຳໃຊ້ທີ່ດິນໃນປະຈຸບັນ ແລະ ທ່າອ່ຽງໃນອານາຄົດໃຫ້ສັງຄົມ ແລະ ພາກສ່ວນກ່ຽວຂ້ອງຮັບຮູ້ໂດຍຮວບຮວມເອົາຜົນການສຳຫຼວດ, ເກັບກຳຂໍ້ມູນການນຳໃຊ້ທີ່ດິນ ແລະ ສັງລວມເອົາບົດລາຍງານຕ່າງໆຂອງພາກສ່ວນທີ່ກ່ຽວຂ້ອງ.

ຕາງໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບຸລີ ແຂວງສະຫວັນນະເຂດ ຂໍສະແດງຄວາມຂອບໃຈເປັນຢ່າງຍິ່ງມາຍັງຄະນະຮັບຜິດຊອບ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ສຸມເຫື່ອແຮງ, ສະຕິປັນຍາ ແລະ ຄວາມເປັນເຈົ້າການປະກອບສ່ວນໃນການແບ່ງປັນຄວາມຮູ້ ແລະ ຂໍ້ມູນຂ່າວສານໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນ ສະບັບນີ້. ພິເສດຂໍສະແດງຄວາມຂອບໃຈ ມາຍັງ ກົມຊັບພະຍາກອນນ້ຳ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ອົງການປົກຄອງເມືອງຊົນນະບຸລີ ພາຍໃຕ້ ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບເວດ (IWRM-EbA Project) ທີ່ໄດ້ຮັບການສະໜັບສະໜູນຈາກ ກອງທຶນສິ່ງແວດລ້ອມໂລກ (GEF) ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ທີ່ໄດ້ປະກອບສ່ວນດ້ານວິຊາການ ແລະ ທຶນຮອນເຂົ້າໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນສະບັບນີ້ ແລະ ຫວັງຢ່າງຍິ່ງວ່າບັນດາທ່ານຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດແຜນດັ່ງກ່າວນີ້ໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ.

ທີ່ ເມືອງຊົນນະບຸລີ, ວັນທີ 29 ກັນຍາ2025

**ຫົວໜ້າຫ້ອງການ**

ພູດິງ ວົງດາຣາສິນ

# ສັງລວມຫຍໍ້

ບ້ານໂນນສະຫວ່າງ ເປັນບ້ານໃຈກາງເມືອງ ຕັ້ງຢູ່ໃຈກາງເມືອງ, ມີລະດັບຄວາມສູງທຽບໃສ່ລະດັບໜ້ານໍ້າທະເລ 169 ແມັດ ສະພາບພູມສັນຖານເປັນເຂດຫຼຸບໂນນສະຫຼັບຊັບຊ້ອນພື້ນທີ່ຮາບພຽງ ໃນການປຸກສ້າງທີ່ຢູ່ອາໃສຂອງປະຊາຊົນ ມີສະພາບອາກາດຮ້ອນຊຸ່ມ, ມີເນື້ອທີ່ທັງໝົດ 1,308,48 ເຮັກຕາ, ເປັນເຂດພື້ນທີ່ຮາບພຽງເປັນສ່ວນຫຼາຍກວມເອົາ 85 ເປີເຊັນ ແລະ ມີເປັນເຂດປ່າໂຄກ 15 ເປີເຊັນ, ມີເຂດຄຸ້ມຄອງຕິດກັບ 5 ບ້ານດັ່ງນີ້: ທິດເໜືອຕິດກັບບ້ານຊຽງຮົ່ມ, ເມືອງຊົນນະບູລີ, ແຂວງສະຫວັນນະເຂດ, ທິດໃຕ້ຕິດກັບບ້ານໂນນຄູ້ ແລະ ບ້ານໂພນດີ, ເມືອງຊົນນະບູລີ, ແຂວງສະຫວັນນະເຂດ, ທິດຕາເວັນອອກຕິດກັບບ້ານກະແຕບ, ເມືອງຊົນນະບູລີ, ແຂວງສະຫວັນນເຂດ, ທິດຕາເວັນຕົກຕິດກັບບ້ານດອນ, ເມືອງຊົນນະບູລີ, ແຂວງສະຫວັນນເຂດ.

ບ້ານ ໂນນສະຫວ່າງ ມີພົນລະເມືອງທັງໝົດ 1,077 ຄົນ, ຍິງ 537 ຄົນ, ມີ 172 ຫລັງຄາເຮືອນ,ມີ 146 ຄອບຄົວ. ເປັນບ້ານຊົນເຜົ່າ ບຣູ ມີຮີດຄອງປະເພນີ ແລະ ການນັບຖື ຜີ (ຜີສະວັ), ມີບຸນປະເພນີຄື: ລະບຶມ. ຊາວບ້ານປະກອບອາຊີບກະສິກໍາເປັນຕົ້ນຕໍຄື: ແມ່ນຍຶດຖືເອົາການເຮັດນາ, ປູກພືດ ແລະ ສໍາຮອງລົງມາແມ່ນລ້ຽງສັດ ແລະ ອື່ນໆ. ແຫຼ່ງລາຍຮັບຕົ້ນຕໍຂອງປະຊາຊົນພາຍໃນບ້ານແມ່ນມາຈາກ 2 ແຫຼ່ງລາຍຮັບຕົ້ນຕໍຄື: ມາຈາກການເຮັດນາ ແລະ ສໍາຮອງລົງມາແມ່ນມາຈາກການຫາເຄື່ອງປ່າຂອງດົງ ແລະ ອື່ນໆ.

ແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານ ບ້ານໂນນສະຫວ່າງ ປະກອບມີ 7 ປະເພດການນໍາໃຊ້ຫຼັກ ຊຶ່ງປະກອບມີດັ່ງນີ້: ເຂດທີ່ດິນກະສິກໍາ ມີປະມານ 580.22 ເຮັກຕາ ກວມເອົາ 44.34% (ໃນນີ້ ນາ, ນາສາມາດເຮັດນາແຊງ, ດິນກະສິກໍາທົ່ວໄປ, ເຂດສົ່ງເສີມການລ້ຽງສັດແບບເປັນຟາມ, ເຂດກໍ່ສ້າງຊົນລະປະທານ ແລະ ໜອງປາ), ເຂດດິນປຸກສ້າງ ມີເນື້ອທີ່ 189.26 ເຮັກຕາ ກວມເອົາ 14.46% (ໃນນີ້, ມີດິນປຸກສ້າງບຸກຄົນ, ຫ້ອງການລັດ, ຕະຫຼາດ, ຫ້ອງການບ້ານ, ໂຮງໝໍເມືອງ, ໂຮງຮຽນ ແລະ ດິນແຮ່ຂະຫຍາຍປຸກສ້າງ), ທີ່ດິນວັດທະນະທໍາ ມີເນື້ອທີ່ 4.93 ເຮັກຕາ ກວມເອົາ 0.38% (ໃນນີ້, ມີວັດ, ໂບດ ແລະ ປ່າຊ້າ), ເຂດດິນ ປກສ-ປກຊ ມີເນື້ອທີ່ 5.23 ເຮັກຕາ ກວມເອົາ 041.% (ໃນນີ້ມີ ຫ້ອງການ ປກສ, ຫ້ອງການ ປກຊ ແລະ ສະໜາມຍິງປືນ), ເຂດດິນປ່າໄມ້ ມີເນື້ອທີ່ 492.81 ເຮັກຕາ ກວມເອົາ 37.66% (ໃນນີ້ມີ ປ່າຊົມໃຊ້, ປ່າປ້ອງກັນຫ້ວຍ/ຮ່ອງ, ປ່າປ້ອງກັນຫ້ວຍຂີ, ປ່າປ້ອງກັນຫ້ວຍຊິມ, ປ່າປ້ອງກັນຫ້ວຍຕະໂງນ ແລະ ປ່າປ້ອງກັນຄອງຊົນລະປະທານ), ທີ່ດິນໂຍທາທິການ ແລະ ຂົນສົ່ງ ມີເນື້ອທີ່ 21.28 ເຮັກຕາ. ກວມເອົາ 1.43% (ໃນນີ້, ເສັ້ນທາງປູຢາງ, ທາງດິນແດງ, ເສັ້ນທາງຈະຕັດໃໝ່ ແລະ ຄິວລົດໂດຍສານ) ແລະ ທີ່ດິນບໍລິເວນນໍ້າ ມີເນື້ອທີ່ 14.73 ເຮັກຕາ ກວມເອົາ 1.13% (ໃນນີ້, ຫ້ວຍ/ຮ່ອງ, ຫ້ວຍຂີ, ຫ້ວຍຕະໂງນ, ຫ້ວຍນາກອງແພງ, ຫ້ວຍຊິມ, ໜອງປາແຫວ ແລະ ໜອງຮັບນໍ້າ).

ພາຍຫຼັງຖືກຮັບຮອງ ແລະ ປະກາດນໍາໃຊ້ແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານດັ່ງກ່າວ ຈະໄດ້ລິ່ເລີ່ມວຽກການຕິດຕາມ-ກວດກາ ຄວາມຖືກຕ້ອງເໝາະສົມຕາມແຜນຈັດສັນທີ່ວາງໄວ້. ເຊິ່ງພາກສ່ວນຮັບຜິດຊອບຫຼັກແມ່ນຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມເມືອງ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ ຮ່ວມກັບຄະນະກໍາມະການອະນຸລັກຂັ້ນບ້ານ ເຊິ່ງຈະໄດ້ມີແບບແຜນໃນການເຄື່ອນໄຫວກວດກາ ແລະ ລາດຕະເວນໃນເຂດເປົ້າໝາຍ ຫຼື ພື້ນທີ່ມີຄວາມສໍາຄັນໃນວຽກງານອະນຸລັກ ເຊັ່ນ: ເຂດວັງສະຫງວນສັດນໍ້າ, ເຂດປ່າໄມ້ຫວງຫ້າມເດັດຂາດ ແລະ ເຂດອື່ນໆທີ່ມີການຕິດຕັ້ງຫຼັກໝາຍບອກຂອບເຂດຫວງຫ້າມ. ນອກຈາກນັ້ນ, ຍັງກວມລວມໄປເຖິງການກວດກາການນໍາໃຊ້ເຄື່ອງມືແບບດັບສູນໃນການຫາ ການລ່າສັດນໍ້າ - ສັດປ່າ ແລະ ການກະທໍາທີ່ເປັນການສູນເສຍຕໍ່ສະພາບແວດລ້ອມຫຼາຍເກີນໄປ ເປັນຕົ້ນ.

## ສາລະບານ


ຄຳນຳ……………………………………………………………………………..………i

ສັງລວມຫຍໍ້.......................................................................................................................ii

I. ຈຸດປະສົງ ແລະ ລະດັບຄາດໝາຍ.......................................................................................1

1.1 ຈຸດປະສົງ .......................................................................................................................1

1.2 ລະດັບຄາດໝາຍ..............................................................................................................1

1.3 ຂັ້ນຕອນໃນການຈັດຕັ້ງປະຕິບັດ ...................................................................................2

1.4 ວິທີການໃນການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Program ຕ່າງໆເຂົ້າຊ່ວຍ...............................2

II. ສະພາບລວມຂອງບ້ານ.....................................................................................................3

2.1 ປະຫວັດຄວາມເປັນມາຂອງບ້ານ .....................................................................................3

2.2 ທີ່ຕັ້ງພູມສັນຖານ..............................................................................................................3

2.3 ດ້ານການປົກຄອງ..............................................................................................................3

2.4 ດ້ານເສດຖະກິດ-ສັງຄົມ.......................................................................................................3

2.5 ດ້ານວັດທະນະທຳ ແລະ ຮີດຄອງປະເພນີ............................................................................3

III. ສະພາບການນຳໃຊ້ທີ່ດິນປະຈຸບັນ ........................................................................................4

3.1 ການກຳນົດຈຸດທີ່ຕັ້ງຂອງບ້ານ..............................................................................................4

3.2 ເຂດຄຸ້ມຄອງຂອງບ້ານ.........................................................................................................4

3.3 ການນຳໃຊ້ທີ່ດິນໃນປະຈຸບັນຂອງບ້ານ ...................................................................................8

IV. ການຈັດສັນການນຳໃຊ້ທີ່ດິນ..............................................................................................10

4.1 ການກຳນົດເຂດທີ່ດິນຂອງບ້ານ ໂນນສະຫວ່າງ.......................................................................10

4.1.1 ເຂດທີ່ດິນອະນຸລັກ .......................................................................................................10

4.1.2 ເຂດທີ່ດິນນຳໃຊ້ນຳ.......................................................................................................10

4.1.3 ຄວາມຮັບຮູ້ໂດຍລວມໃນການສຳຫຼວດຈັດສັນທີ່ດິນ ...........................................................11

4.2 ການກຳນົດປະເພດທີ່ດິນຂອງບ້ານ .....................................................................................12

V. ທ່າແຮງໃນການພັດທະນາທີ່ດິນ.........................................................................................16

5.1 ທ່າແຮງໃນການພັດທະນາທີ່ດິນຂອງບ້ານ.............................................................................16

5.2 ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານໂນນສະຫວ່າງ............................................16

VI. ລະບຽບການໃລະບຽບໃນການຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ ..........................17

6.1 ການຄຸ້ມຄອງ ທີ່ດິນກະສິກຳ ..............................................................................................17

6.2 ການຄຸ້ມຄອງທີ່ດິນປຸກສ້າງ ...............................................................................................17

6.3 ການຄຸ້ມຄອງ ທີ່ດິນວັດທະນາທຳ.........................................................................................17

6.4 ການຄຸ້ມຄອງທີ່ດິນປ້ອງກັນຊາດປ້ອງກັນຄວາມສະຫງົບ ...........................................................17

6.5 ການຄຸ້ມຄອງ ທີ່ດິນປ່າໄມ້..................................................................................................17

6.6 ການຄຸ້ມຄອງ ທີ່ດິນໂຍທາທິການ ແລະ ຂົນສົ່ງ........ 18
6.7 ການຄຸ້ມຄອງ ທີ່ດິນບໍລິເວນນໍ້າ........ 18
VII. ການຫັນປ່ຽນປະເພດທີ່ດິນ........ 18
VIII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ........ 18
8.1. ການຈັດຕັ້ງ........ 18
8.2. ບຸກຄະລາກອນ........ 18
8.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ........ 19
8.4. ຂອບເຂດສິດ........ 19
8.5. ລະບອບແບບແຜນວິທີເຮັດວຽກ........ 19
8.6. ການຕິດຕາມກວດກາ........ 20
ເອກະສານອ້າງອີງ........ 21

# ສາລະບານຕາຕະລາງ

ຕາຕະລາງທີ 1 ສະແດງດ້ານສາດສະໜາ......3
ຕາຕະລາງທີ 2 ຄ່າພັດກັດ ບ້ານ ຊຽງຣົ່ມ ເມືອງຊົນນະບູລີ ແຂວງສະຫວັນນະເຂດ......4
ຕາຕະລາງທີ 3 ຄ່າພັດກັດ ບ້ານກອງປະທຸມວັນ ເມືອງຊົນນະບູລີ ແຂວງສະຫວັນນະເຂດ......4
ຕາຕະລາງທີ 4 ຄ່າພັດກັດ ບ້ານ ໂນນຄູ້ ເມືອງຊົນນະບູລີ ແຂວງ ສະຫວັນນະເຂດ......5
ຕາຕະລາງທີ 5 ຄ່າພັດກັດ ບ້ານບ້ານຄຳປາແໜ ເມືອງຊົນນະບູລີ ແຂວງສະຫວັນນເຂດ ......5
ຕາຕະລາງທີ 6 ຄ່າພັດກັດ ບ້ານກະຫລາງ ເມືອງຈຳພອນ ແຂວງສະຫວັນນະເຂດ......6
ຕາຕະລາງທີ 7 ສັງລວມປະເພດການນຳໃຊ້ທີ່ດິນປະຈຸບັນ ບ້ານໂນນສະຫວ່າງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ ......9
ຕາຕະລາງທີ 8 ສັງລວມປະເພດການຈັດສັນທີ່ດິນບ້ານໂນນສະຫວ່າງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ.14
ຕາຕະລາງທີ 9 ສົມທຽບລະຫວ່າງເນື້ອທີ່ການນຳໃຊ້ດິນປະຈຸບັນ ແລະ ເນື້ອທີ່ຂອງແຜນຈັດສັນ......16

# ສາລະບານຮູບພາບ

ຮູບທີ 1 ແຜນທີ່ຂອບເຂດຄຸ້ມຄອງບ້ານໂນນສະຫວ່າງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ ......................7
ຮູບທີ 2 ແຜນທີ່ການນໍາໃຊ້ທີ່ດິນປະຈຸບັນ ບ້ານໂນນສະຫວ່າງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ ..........10
ຮູບທີ 3 ແຜນທີ່ຈັດສັນການນໍາໃຊ້ທີ່ດິນ ບ້ານໂນນສະຫວ່າງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ ............15

## I. ຈຸດປະສົງ ແລະ ລະດັບຄາດໝາຍ

### 1.1 ຈຸດປະສົງ

- ຈຸດປະສົງຂອງການສຳຫຼວດວາງແຜນຈັດສັນ ແລະ ການນຳໃຊ້ທີ່ດິນ ແມ່ນປັດໃຈຫຼັກທີ່ສຳຄັນໃນລະບົບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ທັງນີ້ກໍ່ເພື່ອເຮັດໃຫ້ການວາງແຜນຈັດສັນ ແລະ ການວາງແຜນການນຳໃຊ້ທີ່ດິນໃຫ້ມີການປະສົມປະສານຢ່າງກົມກຽວໂດຍພື້ນຖານກັບສະພາບຂອງພື້ນທີ່ໃນແຕ່ລະບ່ອນ ແລະ ໃຫ້ມີຄວາມດຸ່ນດ່ຽງຂອງຊັບພະຍາກອນທຳມະຊາດ, ພ້ອມດຽວກັນກໍ່ຕ້ອງໃຫ້ສອດຄ່ອງກັບທິດທາງແຜນການພັດທະນາເສດຖະກິດ-ສັງຄົມຂອງແຕ່ລະເຂດ.
- ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາທີດິນ ແລະ ຊັບພະຍາກອນທຳມະຊາດອື່ນໆໃຫ້ມີຄວາມຍືນຍົງໂດຍຕິດພັນກັບການພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ເພື່ອກຳນົດພື້ນທີ່, ເຂດທີ່ເປັນທ່າແຮງກ່ຽວກັບເປົ້າໝາຍໃນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດອື່ນໆ ແນໃສ່ເຮັດໃຫ້ທີດິນໄດ້ຮັບການພັດທະນາແບບຍືນຍົງ, ເຮັດໃຫ້ທີ່ດິນ ແລະຊັບພະຍາກອນທຳມະຊາດສາມາດນຳຜົນປະໂຫຍດສູງສຸດ.
- ເພື່ອຫລຸດຜ່ອນການຈັບຈອງທີ່ດິນ, ການບຸກລຸກທີດິນ ແລະ ປ່າໄມ້ແບບຊະຊາຍ, ການສວຍໂອກາດໂອນເອົາທີ່ດິນຂອງລັດມາເປັນທີ່ດິນສ່ວນບຸກຄົນແລະການອະນຸຍາດໃຫ້ເຊົ່າຫຼືສຳປະທານທີ່ດິນຂອງລັດທີ່ມີເນື້ອທີ່ກ້ວາງຂວາງ ແລະ ຍາວນານ.
- ເພື່ອຈັດສັນ,ຈັດແບ່ງເຂດ,ຈັດແບ່ງປະເພດທີ່ດິນ ແລະສ້າງແຜນທີ່ນຳໃຊ້ທີ່ດິນແຕ່ລະທ້ອງຖິ່ນ, ເຂດແຄ້ວນໃນຂອບເຂດທົ່ວປະເທດ ແລ້ວນຳສະເໜີໄປຕາມແຕ່ລະຂັ້ນເພື່ອຮັບຮອງເອົາ.

### 1.2 ລະດັບຄາດໝາຍ

- ເຮັດໃຫ້ມີການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດອື່ນໆໃຫ້ມີລະບຽບຫຼັກການຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.
- ສ້າງເປັນແຜນທີ່ກຳນົດຂອບເຂດ ແລະ ປະເພດທີ່ດິນໃນແຕ່ລະທ້ອງຖິ່ນ, ເຂດແຄ້ວນ ແລະ ແຫ່ງຊາດຕາມຫຼັກວິຊາການ ແລະ ລະບຽບກົດໝາຍຊຶ່ງມີຄວາມເປັນເອກະພາບກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນໂດຍອີງຕາມຈຸດພິເສດ, ທ່າແຮງ ແລະ ເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ.
- ເຮັດໃຫ້ບັນດາຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຮັບຮູ້ໄດ້ ແລະ ເຂົ້າໃຈບັນຫາຕ່າງໆເພື່ອວາງແຜນໃນການຄຸ້ມຄອງປົກປັກຮັກສາ, ພັດທະນາທີ່ດິນ ແລະ ຊັບພະຍາກອນທຳມະຊາດຢ່າງຖືກຕ້ອງ ແລະ ມີປະສິດທິຜົນຕາມເປົ້າໝາຍ ແລະ ລະບຽບກົດໝາຍທີ່ວາງອອກ.
- ຈັດຕັ້ງປະຕິບັດບັນດາລະບຽບກົດໝາຍຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢ່າງມີປະສິດທິຜົນ.
- ເສີມຂະຫຍາຍຄວາມເປັນເຈົ້າການຂອງປະຊາຊົນບັນດາເຜົ່າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນເຂົ້າໃນການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດ-ສັງຄົມໃຫ້ດີຂຶ້ນເປັນກ້າວໆ.

ເພື່ອບັນລຸຕາມຈຸດປະສົງ ແລະ ທິດທາງຍຸດທະສາດທີ່ໄດ້ກ່າວມາຂ້າງເທິງນັ້ນໃນການຈັດຕັ້ງປະຕິບັດແມ່ນ ໃຫ້ທຸກໆພາກສ່ວນ ແລະ ຂະແໜງການທີ່ກ່ຽວຂ້ອງແຕ່ສູນກາງລົງຮອດທ້ອງຖິ່ນໃຫ້ເອົາໃຈໃສ່ສ້າງຄວາມເຂັ້ມ ແຂງຢ່າງຮອບດ້ານ ໃຫ້ອົງການຄຸ້ມຄອງທີ່ດິນເຊັ່ນວ່າ: ປັບປຸງກົງຈັກການຈັດຕັ້ງ, ປະກອບບຸກຄະລະກອນ, ສະໜອງງົບປະມານ ແລະ ພາຫະນະອຸປະກອນຮັບໃຊ້ຕ່າງໆ ເພື່ອໃຫ້ຈັດຕັ້ງປະຕິບັດວຽກງານການສຳຫຼວດຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນ, ສ້າງແຜນທີ່ນຳໃຊ້ທີ່ດິນ ແລະ ວາງແຜນຄຸ້ມຄອງປົກປັກຮັກສາ, ນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳ ມະຊາດ ຢູ່ໃນແຕ່ລະທ້ອງຖິ່ນໄດ້.

### 1.3 ຂັ້ນຕອນໃນການຈັດຕັ້ງປະຕິບັດ

- **ຂັ້ນຕອນທີ 1:** ກະກຽມສ້າງແຜນການ, ແຜນງານ, ແຜນຄົນ, ແຜນງົບປະມານ ແລະແຜນດຳເນີນງານໂຄງການສຳຫຼວດຈັດສັນທີ່ດິນ.
- **ຂັ້ນຕອນທີ** 2: ກະກຽມສ້າງຕັ້ງຄະນະຊີ້ນຳ, ຄະນະຮັບຜິດຊອບ ແລະຄະນະທີມງານວິຊາການຈາກພາກສ່ວນຂະແໜງການທີ່ກ່ຽວຂ້ອງ ແລະອີງການປົກຄອງທ້ອງຖິ່ນທີ່ມີຄວາມຈຳເປັນ.
- **ຂັ້ນຕອນທີ 3:** ກະກຽມເອກະສານເພື່ອຂໍອະນຸມັດຈາກທ່ານເຈົ້າເມືອງເພື່ອຈັດຕັ້ງປະຕິບັດແຜນໂຄງການຕາມແຜນການ, ແຜນດຳເນີນງານໂຄງການທີ່ໄດ້ກຳນົດໄວ້.
- **ຂັ້ນຕອນທີ 4:** ກະກຽມເອກະສານຂໍ້ຕົກລົງແຕ່ງຕັ້ງຄະນະທີມງານວິຊາການ ເພື່ອຂໍອະນຸມັດໃຫ້ຂັ້ນເທິງພິຈາລະນາຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບ ແລະ ຄະນະທີມງານວິຊາການ.
- **ຂັ້ນຕອນທີ 5:** ກະກຽມບັນດາເອກະສານຕ່າງໆທີ່ກ່ຽວພັນກັບທີ່ດິນ ເຊັ່ນ: ກົດໝາຍ, ດຳລັດ, ມະຕິ ແລະລະບຽບການຕ່າງໆທີ່ນຳໄປເຜີຍແຜ່ໃຫ້ພາກສ່ວນຂະແໜງການທີ່ກ່ຽວຂ້ອງກັບທີ່ດິນ, ບຸກຄົນ, ນິຕິບຸກຄົນບໍລິສັດຕະຫຼອດເຖິງປະຊາຊົນຢູ່ໃນແຕ່ລະທ້ອງຖິ່ນເພື່ອໃຫ້ທຸກຄົນຮັບຮູ້ ແລະ ຮັບຊາບກ່ອນ ຫຼື ໄລຍະເວລາ ຈັດຕັ້ງປະຕິບັດໂຄງການຢູ່ໃນແຕ່ລະບ່ອນ.
- **ຂັ້ນຕອນທີ 6:** ກະກຽມແບບຟອມການສຳຫຼວດເກັບກຳຂໍ້ມູນການນຳໃຊ້ທີ່ດິນ ແລະສະພາບເສດຖະກິດ-ສັງຄົມຢູ່ແຕ່ລະບ້ານ ແລະ ເມືອງ.
- **ຂັ້ນຕອນທີ** 7: ກະກຽມແຜນດຳເນີນງານລະອຽດເພື່ອລົງສຳຫຼວດເກັບກຳຂໍ້ມູນ ໃນການນຳໃຊ້ທີ່ດິນແລະສະພາບເສດຖະກິດ-ສັງຄົມ.

### 1.4 ວິທີການໃນການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Program ຕ່າງໆເຂົ້າຊ່ວຍ

- ຈັດກອງປະຊຸມຝຶກອົບຮົມດ້ານເຕັກນິກວິຊາການກ່ຽວກັບການຳໃຊ້ເຄື່ອງມື, ອຸປະກອນ ແລະ ໂປແກຼມຕ່າງໆ ພ້ອມດຽວກັນນັ້ນກໍ່ປຶກສາຫາລືກ່ຽວກັບແຜນວຽກແຜນຄົນ ແລະ ຄັດເລືອກກຸ່ມບ້ານເປົ້າໝາຍ;
- ແຈ້ງການໃຫ້ອຳນາດການປົກຄອງບ້ານ-ກຸ່ມບ້ານໃຫ້ຮັບຊາບລ່ວງໜ້າກ່ອນເພື່ອກະກຽມບັນດາເອກະສານ, ຂໍ້ມູນເສດຖະກິດ-ສັງຄົມ ແລະຂໍ້ມູນໃນການກຳນົດເຂດຄຸ້ມຄອງຂອງບ້ານໃນໄລຍະຜ່ານມາ;
- ເປີດກອງປະຊຸມຂັ້ນບ້ານ-ກຸ່ມບ້ານ ເພື່ອແຈ້ງຈຸດປະສົງ ການຈັດຕັ້ງປະຕິບັດວຽກງານຕໍ່ບ້ານເປົ້າໝາຍ;
- ເຊີນບັນດາອຳນາດການປົກຄອງບ້ານອ້ອມຂ້າງເຂົ້າຮ່ວມ ເພື່ອປຶກສາຫາລືກ່ຽວກັບກຳນົດເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ ແລ້ວສ້າງບົດບັນທຶກຮ່ວມກັນ;
- ລົງສຳຫຼວດເຂດຄຸ້ມຄອງຂອງບ້ານ ແລະ ປະເພດທີ່ດິນຕ່າງໆ ພ້ອມທັງເກັບກຳຂໍ້ມູນເສດຖະກິດ-ສັງຄົມ, ຂໍ້ມູນການນຳໃຊ້ຕອນດິນຂອງປະຊາຊົນພາຍໃນບ້ານ;
- ວິເຄາະ ແລະ ສຶກສາພູມມີປະເທດເພື່ອເປັນບ່ອນອີງໃນການກຳນົດວາງແຜນຈັດສັນການນຳໃຊ້ທີ່ດິນແຕ່ລະປະເພດຂອງບ້ານ;
- ສັງລວມຂໍ້ມູນພາກສະໜາມ ປ້ອນເຂົ້າໃນຄອມພິວເຕີ ແລ້ວສ້າງເປັນແຜນທີ່ ໂດຍນຳໃຊ້ລະບົບ GIS;
- ຮ່າງບົດລາຍງານ ເພື່ອສະເໜີຜ່ານແຜນຈັດສັນທີ່ດິນພ້ອມທັງກຳນົດລະບຽບ ແລະມາດຕະການຄຸ້ມຄອງການນຳໃຊ້ທີ່ດິນ;
- ຈັດກອງປະຊຸມສະເໜີຜ່ານແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານເພື່ອຄວາມເປັນເອກະພາບກັບຂະແໜງການກ່ຽວຂ້ອງ;
- ຜ່ານແຜນການຈັດສັນທີ່ດິນໃຫ້ອຳນາດການປົກຄອງຂັ້ນບ້ານ-ກຸ່ມບ້ານຮັບຮູ້ແລ້ວນຳສະເໜີຂັ້ນເມືອງຄົ້ນຄວ້າພິຈາລະນາຮັບຮອງເອົາ.

## II. ສະພາບລວມຂອງບ້ານ

### 2.1 ປະຫວັດຄວາມເປັນມາຂອງບ້ານ

ບ້ານ ໂນນສະຫວ່າງ ແຕ່ກ່ອນເອີ່ນຊື່ວ່າບ້ານທາງແບ່ງບຸ່ງກວາງຈາກນັ້ນພາຍຫຼັງໄດ້ຮັບການປົດປ່ອຍໄດ້ມີທະຫານທໍ່ນ້ຳມັນກອງ 78 ມາຕັ້ງຢູ່ທາງແບ່ງ ຈື່ງເອີ່ນວ່າ: ບ້ານໂນນສະຫວ່າງ ສ້າງຕັ້ງຂື້ນໃນປີ 1987 ໄລຍະນັ້ນມີປະຊາຊົນອອກມາຢູ່ 125 ຄອບຄົວພາຍໃນບ້ານຈົນມາຮອດປະຈຸບັນນີ້.

### 2.2 ທີ່ຕັ້ງພູມສັນຖານ

ບ້ານໂນນສະຫວ່າງ ເປັນບ້ານໃຈກາງເມືອງ ຕັ້ງຢູ່ໃຈກາງເມືອງ, ມີລະດັບຄວາມສູງທຽບໃສ່ລະດັບໜ້ານ້ຳທະເລ 169 ແມັດ ສະພາບພູມສັນຖານເປັນເຂດຫຼູບໂນນສະຫຼັບຊັບຊ້ອນພື້ນທີ່ຮາບພຽງ ໃນການປຸກສ້າງທີ່ຢູ່ອາໃສຂອງປະຊາຊົນ ມີສະພາບອາກາດຮ້ອນຊຸ່ມ, ມີເນື້ອທີ່ທັງໝົດ 1276,81 ເຮັກຕາ, ເປັນເຂດພື້ນທີ່ຮາບພຽງເປັນສ່ວນຫຼາຍກວມເອົາ 85 ເປີເຊັນ ແລະ ມີເປັນເຂດປ່າໂຄກ 15 ເປີເຊັນ, ມີເຂດຄູ້ມຄອງຕິດກັບ 5 ບ້ານດັ່ງນີ້: ທິດເໜືອຕິດກັບບ້ານຊຽງຮົ່ມ, ເມືອງຊົນນະບູລີ, ແຂວງສະຫວັນນະເຂດ, ທິດໃຕ້ຕິດກັບບ້ານໂນນຄູ້ ແລະ ບ້ານໂພນດີ, ເມືອງຊົນນະບູລີ, ແຂວງສະຫວັນນະເຂດ, ທິດຕາເວັນອອກຕິດກັບບ້ານກະແຕບ, ເມືອງຊົນນະບູລີ, ແຂວງສະຫວັນນເຂດ, ທິດຕາເວັນຕົກຕິດກັບບ້ານດອນ, ເມືອງຊົນນະບູລີ, ແຂວງສະຫວັນນເຂດ.

### 2.3 ດ້ານການປົກຄອງ

ບ້ານໂນນສະຫວ່າງ ແມ່ນຂື້ນກັບກຸ່ມບ້ານ ຕາແສງໂນນສະຫວ່າງ ເມືອງ ຊົນນະບູລີ ແຂວງ ສະຫວັນນະເຂດປະກອບມີນາຍບ້ານ 1 ທ່ານ, ຮອງນາຍບ້ານ 4 ທ່ານ, ສະມາຊິກພັກມີ 17 ສະຫາຍ, ຍິງ 5 ສະຫາຍ, ສະຫະພັນແມ່ຍິງມີ 103 ທ່ານ, ຊາວໜຸ່ມ 74 ຄົນ, ຍິງ 30 ຄົນ, ມີພົນລະເມືອງທັງໝົດ 735 ຄົນ, ຍິງ 339 ຄົນ, ມີ 148 ຫຼັງຄາເຮືອນ, ມີ 135 ຄອບຄົວ, ມີ 8 ໜ່ວຍ, ປະກອບມີ 1 ຊົນເຜົ່າຄື: ຊົນເຜົາລາວລຸ່ມ ນັບຖືສາສະໜາພຸດ.

### 2.4 ດ້ານເສດຖະກິດ - ສັງຄົມ

ແຫຼ່ງລາຍຮັບຕົ້ນຕໍຂອງປະຊາຊົນພາຍໃນບ້ານແມ່ນມາຈາກ 2 ແຫຼ່ງລາຍຮັບຕົ້ນຕໍຄື: ມາຈາກການຄ້າຂາຍ, ຂາຍມັນຕົ້ນ ແລະ ສຳຮອງລົງມາແມ່ນມາຈາກການເປັນກຳມະກອນຮັບຈ້າງທົ່ວໄປ ແລະ ອື່ນໆ ການພັດທະນາເສດຖະກິດ-ສັງຄົມແມ່ນມີການຂະຫຍາຍຕົວເພີ່ມຂື້ນສາມາດສ້າງລາຍຮັບໃຫ້ແຕ່ລະຄອບຄົບ ເພື່ອໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ ຕາມແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງມີຄອບຄົວທີ່ຫຼຸດພົ້ນອອກຈາກຄວາມທຸກຍາກ 133 ຄອບຄົວ ແລະ ຄອບຄົວທີ່ຍັງບໍ່ທັນພົ້ນທຸກມີ 2 ຄອບຄົວ.

### 2.5 ດ້ານວັດທະນະທຳ ແລະ ຮີດຄອງປະເພນີ

ປະຊາຊົນພາຍໃນບ້ານໂນນສະຫວ່າງ ແມ່ນມີຄວາມສາມັກຄີຮັກແພງເຊິ່ງກັນ ແລະ ກັນທັງພາຍໃນ ແລະ ພາຍນອກ, ມີວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ປະຕິບັດຕາມຮີດສິບສອງຄອງສິບສີ່ທີ່ບັນພະບູລຸດຂອງປະຊາຊົນລາວບັນດາເຜົ່າເຄີຍຈັດຕັ້ງປະຕິບັດມາເປັນຕົ້ນແມ່ນບູນປີໃໝ່ລາວ ແລະ ອື່ນໆ. ບ້ານໂນນສະຫວ່າງ ແມ່ນເປັນບ້ານທີໄດ້ຮັບນາມມະຍົດເປັນບ້ານວັດທະນະທຳ, ບ້ານແມ່ຍິງສາມດີ, ບ້ານແບບຢ່າງສາທາລະນະສຸກ ແລະ ບ້ານປອດຄະດີ.

ຕາຕະລາງທີ 1 ສະແດງດ້ານສາດສະໜາ

| ລ/ດ | ປະເພດຊົນເຜົ່າ | ສາດສະໜາ | ຈຳນວນຄອບຄົວ | ໝາຍເຫດ |
|---|---|---|---|---|
| 1 | ລາວລຸ່ມ | ພຸດ | 135 | |
| ລວມ | | | 135 | |

## III. ສະພາບການນຳໃຊ້ທີ່ດິນປະຈຸບັນ

### 3.1 ການກຳນົດຈຸດທີ່ຕັ້ງຂອງບ້ານ

ຈຸດທີ່ຕັ້ງຂອງບ້ານໂນນສະຫວ່າງ ແມ່ນກຳນົດເອົາຢູ່ຫ້ອງການປົກຄອງບ້ານ ເຊິ່ງມີຄ່າພິກັດ E = 537789 m ແລະ N = 1813841m. ມີລວງຮອບທັງໝົດ 20,70 ກິໂລແມັດ, ມີ ເນື້ອທີ່ທັງໝົດ 12.776,08 ເຮັກຕາ

### 3.2 ເຂດຄຸ້ມຄອງຂອງບ້ານ

ບ້ານໂນນສະຫວ່າງ ມີເຂດຄຸ້ມຄອງຕິດກັບ 5 ບ້ານຄື:

- ທິດເໜືອ ຕິດກັບ ບ້ານ ຊຽງຮົ່ມ ເມືອງຊົນນະບູລີ ແຂວງສະຫວັນນະເຂດ,
- ທິດໃຕ້ ຕິດກັບ ບ້ານໂນນຄູ້ ເມືອງຊົນນະບູລີ ແຂວງສະຫວັນນະເຂດ,
- ທິດຕາເວັນອອກຕິດກັບ ບ້ານຄຳປ່າແໜ, ເມືອງຊົນນະບູລີ ແລະ ບ້ານກະລາງ ເມືອງຈຳພອນ ແຂວງສະຫວັນນະເຂດ,
- ທິດຕາເວັນຕົກຕິດກັບບ້ານ ກອງປະທຸມວັນ ເມືອງ ຊົນນະບູລີ ແຂວງສະຫວັນນະເຂດ

ດັ່ງລາຍລະອຽດລຸ່ມນີ້:

ຕາຕະລາງທີ 2 ຄ່າພັດກັດ ບ້ານ ຊຽງຮົ່ມ ເມືອງຊົນນະບູລີ ແຂວງສະຫວັນນະເຂດ

ເລີ່ມຈາກຂົວຫ້ວຍຂຶ້ນໃສ່ປາຍຫ້ວຍລະມຸງ ແລະ ເລີຍໃສ່ຖ້ຳພະປ່າວົກແດນບ້ານກະຫລາງ

| ຄ່າພິກັດ GPS (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| ລ/ດ | E | N | Distance (m) | ໝາຍເຫດ |
| 1 | 537204 | 1815274 | | ເຂດເຊື່ອມຕໍ່ກັບບ້ານຊຽງຮົ່ມ |
| 2 | 537789 | 1813841 | | ເລາະຕາມທາງຮອດຫ້ວຍ |
| 3 | 537648 | 1813695 | | ເລາະຕາມສາຍຫ້ວຍ |
| 4 | 537786 | 1811957 | | ຮອດຂົວຫ້ວຍຊິມຈຸດເຊື່ອມຕໍ່ກັບບ້ານກອງປະທຸມວັນ |
| **ລວມໄລຍະ** | | | **4,130** | |

ແຫຼ່ງຂໍ້ມູນ: ອຳນາດການການປົກຄອງບ້ານ ແລະ ການວິເຄາະຂໍ້ມູນທີມງານຈັດສັນທີ່ດິນຂັ້ນເມືອງ ປີ 2025

ຕາຕະລາງທີ 3 ຄ່າພັດກັດ ບ້ານກອງປະທຸມວັນ ເມືອງຊົນນະບູລີ ແຂວງສະຫວັນນະເຂດ

ວັນເລີ່ມຈາກຈຸດຂົວຫ້ວຍຊິມລົງມາໃສ່ຮ່ອງຫ້ວຍຂົວຝາກຫ້ວຍຂົວມີນາຂອງນາງເຊ ແລະ ທ້າວໄຊຕິດຈອດໜອງປ່າເຫວ ແລະ ນາທ້າວເຫຼົາ.

| ຄ່າພິກັດ GPS (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| ລ/ດ | E | N | Distance (m) | ໝາຍເຫດ |
| 1 | 537786 | 1811957 | | ຂົວຫ້ວຍຊິມ |
| 2 | 537403 | 1812069 | | ທາງສາມແຍກ |
| 3 | 537232 | 1812026 | | ທາງເຂົ້າບ້ານກອງປະທຸມວັນ |
| 4 | 537295 | 1811235 | | ທາງທີ່ຂ້າມຮ່ອງ |
| 5 | 536151 | 1810279 | | ເລາະຕາມສາຍຫ້ວຍຈິນສຸດ |
| 6 | 536052 | 1808986 | | ເໜັງຊື່ໃສ່ນາ........ |

| | | | | |
|---|---|---|---|---|
| 7 | 536158 | 1808879 | | ສິ້ນນາ....... |
| 8 | 536120 | 1808811 | | ສິ້ນນາ....... |
| 9 | 535836 | 1808876 | | ເລາະຄອງນໍ້າຂຶ້ນໄປຈົນສຸດ |
| 10 | 535595 | 1809045 | | ຮອດດອນເຂດເຊື່ອມຕໍ່ໂນນຄູ້ |
| **ລວມໄລຍະ** | | **5.334** | | |

ແຫຼ່ງຂໍ້ມູນ: ອໍານາດການການປົກຄອງບ້ານ ແລະ ການວິເຄາະຂໍ້ມູນທີ່ງານຈັດສັນທີ່ດິນຂັ້ນເມືອງ ປີ 2025

ຕາຕະລາງທີ 4 ຄ່າພັດກັດ ບ້ານ ໂນນຄູ້ ເມືອງຊົນນະບູລີ ແຂວງ ສະຫວັນນະເຂດ

ເລີ້ມຈາກຈຸດເສັ້ນທາງແດງຂອງຊານເມືອງເລາະລົງໃສ່ໜອງກົກແຕ້, ໄຕ້ຄັນໜອງຫ້າວກັນທາແລ້ວເລາະລົງໃສ່ຂອບເຂດນາຈານພູວຽນ, ຫຼັງຈາກນັ້ນຊັດລົງໃສ່ໜອງຫ້ວຍຂີວຝາກຫ້ວຍໜອງຢານາງ ແລະ ຊັດລົງໃສ່ໜອງປ່າເຫວ.

| ຄ່າພິກັດ GPS (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| ລ/ດ | E | N | Distance (m) | ໝາຍເຫດ |
| 1 | 535595 | 1809045 | | ຈຸດເຊື່ອມຕໍ່ກັບບ້ານກອງປະທຸມວັນ |
| 2 | 535566 | 1809238 | | ດອນໃນໜອງປາແຮວ |
| 3 | 535007 | 1810966 | | ຂີວຫ້ວຍຂີວ |
| 4 | 535601 | 1811240 | | ກົກຕ້ານ |
| 5 | 535383 | 1811498 | | ທາງປູຢາງ |
| 6 | 535113 | 1811576 | | ຫ້ວຍແຄມປ່າຊ້າບ້ານໂນນຄູ້ |
| 7 | 534858 | 1811408 | | ປາກຫ້ວຍຈົນຮອດ |
| 8 | 534963 | 1812869 | | ປາກຫ້ວຍ....ເລະຕາມຫ້ວຍຂຶ້ນໄປ |
| 9 | 534680 | 1813612 | | ທາຍອດຫ້ວຍ.... |
| 10 | 533974 | 1813829 | | ຮອດປ່າໄມ້ອີກ.......ໄປຕາມທາງ |
| 11 | 534026 | 1814049 | | ຮອດສະໜາມຂີ້ເຫຍື້ອເຂດເຊື່ອມຕໍ່ |
| **ລວມໄລຍະ** | | | **8,029** | |

ແຫຼ່ງຂໍ້ມູນ: ອໍານາດການການປົກຄອງບ້ານ ແລະ ການວິເຄາະຂໍ້ມູນທີ່ງານຈັດສັນທີ່ດິນຂັ້ນເມືອງ ປີ 2025

ຕາຕະລາງທີ 5 ຄ່າພັດກັດ ບ້ານບ້ານຄໍາປາແໜ ເມືອງຊົນນະບູລີ ແຂວງສະຫວັນນເຂດ

ເລີ້ມຈາກຈຸດສາມແຍກຄໍາປ່າແໜລົງໄປທາງທິດໄຕ້ຕິດກັບບ້ານໂນນຄູ້, ແລະເລີ້ມຈາກສາມແຍກຂຶ້ນໄປທາງທິດເໜືອໄປຕາມສາຍທາງໃຫຍ່ທາງແດງຂຶ້ນໄປຮອດຖໍ້າພະເມືອງຈໍາພອນບ້ານກະຫຼາງ

| ຄ່າພິກັດ GPS (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| ລ/ດ | E | N | Distance (m) | ໝາຍເຫດ |
| 1 | 534026 | 1814049 | | ຈາກສະໜາມຂີ້ເຫຍື່ອເຂດເຊື່ອມຕໍ່ |
| 2 | 534587 | 1814299 | | ຈົນຮອດປາກທາງຕໍ່ເສັ້ນທາງປູຢາງ |
| 3 | 534752 | 1814209 | | ສາມແຍກຄໍາປາແໜ |

| | | | | |
|---|---|---|---|---|
| 4 | 536497 | 1815395 | | ເລາະຕາມເສັ້ນທາງອອກໄປບ້ານຫຼັກເຫຼັກຈົນຮອດກົກບົກເຂດເຊື່ອມຕໍ່ກັບບ້ານກະຫລາງ |
| **ລວມໄລຍະ** | | | **3,210** | |

ແຫຼ່ງຂໍ້ມູນ: ອໍານາດການການປົກຄອງບ້ານ ແລະ ການວິເຄາະຂໍ້ມູນທີ່ງານຈັດສັນທີ່ດິນຂັ້ນເມືອງ ປີ 2025

ຕາຕະລາງທີ 6 ຄ່າພັດກັດ ບ້ານກະຫລາງ ເມືອງຈໍາພອນ ແຂວງສະຫວັນນະເຂດ

ເລີ້ມຈາກຈຸດຖໍ້າພະລິງເລາະລິງໄປທາງໄຕ້ຫາເຂດແດນບ້ານຊາຍຮິ່ມເຊິ່ງເປັນຈຸດປ່າປູກໄມ້ອີກເປັນເຂດບ້ານກະຫລາງ

| ຄ່າພິກັດ GPS (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| ລ/ດ | E | N | Distance (m) | ໝາຍເຫດ |
| 1 | 536497 | 1815395 | | ຈຸດກົກບົກແຄມທາງ |
| 2 | 536656 | 1815405 | | ຈຸດທາງເຂົ້າວັດປ່າ |
| 3 | 536702 | 1815264 | | ຮອດຈຸດສວນມັນ |
| 4 | 537204 | 1815274 | | ເໜັງຊີ່ໃສ່ທາງໄປປະໃຍ ເຂດເຊື່ອມຕໍ່ກັບບ້ານຊຽງຮິ່ມ |
| **ລວມໄລຍະ** | | | **0,871** | |

ແຫຼ່ງຂໍ້ມູນ: ອໍານາດການການປົກຄອງບ້ານ ແລະ ການວິເຄາະຂໍ້ມູນທີ່ງານຈັດສັນທີ່ດິນຂັ້ນເມືອງ ປີ 2025




ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025

ຮູບທີ 1 ແຜນທີ່ຂອບເຂດຄຸ້ມຄອງບ້ານໂນນສະຫວ່າງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ

### 3.3 ການນຳໃຊ້ທີ່ດິນໃນປະຈຸບັນຂອງບ້ານ

ການນຳໃຊ້ທີ່ດິນໃນໄລຍະຜ່ານມາຂອງບ້ານ ຕາມຕົວຈິງແລ້ວເຫັນໄດ້ວ່າປະຊາຊົນພາຍໃນບ້ານສ່ວນໃຫຍ່ແມ່ນ ສວນຢາງພາລາ, ເຮັດນາ ແລະ ຖືເອົາການເຮັດກະສິກຳປູກຝັງເປັນສ່ວນໃຫຍ່. ໃນໄລຍະຜ່ານມາການນຳໃຊ້ທີ່ດິນຂອງປະຊາຊົນພາຍໃນບ້ານມີຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຄື:

- **ຂໍ້ສະດວກ:** ເນື່ອງຈາກພື້ນທີ່ດັ່ງກ່າວສ່ວນໃຫຍ່ເປັນເຂດທູບໂນນ ແລະ ຂ້ອນຂ້າງຮາບພຽງສ່ວນຫຼາຍ ເຊິ່ງມີຄວາມເໝາະສົມສຳລັບການເຮັດກະສິກຳ ມີຖະໜົນຫົນທາງເລກທີ 13 ໃຕ້ເປັນຫຼັກ ໂດຍສະເພາະແມ່ນການລ້ຽງສັດໃຫຍ່ເປັນຕົ້ນແມ່ນ ລ້ຽງງົວ, ລ້ຽງຄວາຍ ແລະ ສັດອື່ນໆ.
- **ຂໍ້ຫຍຸ້ງຍາກ:** ເນື້ອທີ່ດິນທີ່ຈະນຳໃຊ້ເຂົ້າໃນການຜະລິດກະສິກຳເຊັ່ນ: ເນື້ອທີ ດິນນາ ແລະ ດິນປູກພືດກະສິກຳທົ່ວໄປເພື່ອຮັບປະກັບທາງດ້ານສະບຽງອາຫານໃຫ້ແກ່ປະຊາຊົນພາຍໃນບ້ານກໍ່ຄືພາຍໃນເມືອງ ແມ່ນມີຈຳກັດ ດັ່ງນັ້ນຈິ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການຜະລິດ ເນື່ອງຈາກພື້ນທີ່ດິນຢູ່ພາຍໃນບ້ານຈຳນວນຫຼາຍນອນຢູ່ໃນພື້ນທີ່ປ່າປ້ອງກັນຂອງເມືອງ ຈິ່ງເປັນເຫດໃຫ້ພື້ນທີ່ທຳການຜະລິດມີນ້ອຍ ບໍ່ມີສາຍນ້ຳຫຼັກພາຍໃນບ້ານ, ບໍ່ມີຊົນລະປະທານ ເປັນສາເຫດໃຫ້ການປູກຝັງລ້ຽງສັດຂ້ອນຂ້າງຍຸ້ງຍາກ.

ຕາມການວິເຄາະຂໍ້ມູນຂອງບ້ານຕົວຈິງແລ້ວ ເຫັນໄດ້ວ່າປະຊາຊົນພາຍໃນບ້ານສ່ວນໃຫຍ່ແມ່ນຍຶດຖືເອົາການເຮັດກະສິກຳ ແລະ ປູກໄມ້ອຸດສາຫະກຳໂດຍສະເພາະສວນຢາງພາລາເປັນຕົ້ນ ດັ່ງນັ້ນເປີເຊັນການນຳໃຊ້ທີ່ດິນສ່ວນໃຫຍ່ແມ່ນເນື້ອທີ່ດິນກະສິກຳເຊິ່ງມີເນື້ອທີ່ 95,63 ເຮັກຕາ ກວມເຖິງ 19,14 ເປີເຊັນ ຂອງເນື້ອທີ່ທັງໝົດ ສ່ວນທີ່ເຫລືອ ແມ່ນເນື້ອທີດິນປະເພດອື່ນໆ.

ຕາຕະລາງທີ 7 ສັງລວມປະເພດການນຳໃຊ້ທີ່ດິນປະຈຸບັນ ບ້ານໂນນສະຫວ່າງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ

| ຕາຕະລາງເນື້ອທີ່ ການນຳໃຊ້ທີ່ດິນປະຈຸບັນ | | | | | |
|---|---|---|---|---|---|
| **ລ/ດ** | **ປະເພດທີ່ດິນ** | **ລະຫັດສີ** | **ສີ** | **ເນື້ອທີ່ ເຮັກຕາ** | **ເປີເຊັນ %** |
| **I** | **ທີ່ດິນກະສິກຳ** | **A** | | **655.75** | **50.12** |
| 1 | ນາ | A_1 | | 490.60 | 37.49 |
| 2 | ດິນກະສິກຳທົ່ວໄປ | A_2 | | 108.25 | 8.27 |
| 3 | ໜອງປາ | A_6 | | 56.89 | 4.35 |
| **II** | **ທີ່ດິນປຸກສ້າງ** | **B** | | **134.33** | **10.27** |
| 1 | ດິນປຸກສ້າງບຸກຄົນ | B_1 | | 118.49 | 9.06 |
| 2 | ຫ້ອງການລັດ | B_2 | | 5.62 | 0.43 |
| | ຕະຫຼາດ | B_2 | | 1.29 | 0.10 |
| | ຫ້ອງການບ້ານ | B_2 | | 0.30 | 0.02 |
| | ໂຮງໝໍເມືອງ | B_2 | | 1.63 | 0.12 |
| | ໂຮງຮຽນ | B_2 | | 7.00 | 0.54 |
| **III** | **ທີ່ດິນວັດທະນະທຳ** | **C** | | **4.93** | **0.38** |
| 1 | ວັດ | C_1 | | 2.72 | 0.21 |
| | ໂບດ | C_1 | | 0.41 | 0.03 |
| 2 | ປ່າຊ້າ | C_2 | | 1.80 | |
| **IV** | **ທີ່ດິນ ປກສ, ປກຊ** | **D** | | **5.23** | **0.40** |
| 1 | ຫ້ອງການ ກປສ | D_1 | | 1.48 | 0.11 |
| 2 | ຫ້ອງການ ປກຊ | D_2 | | 2.98 | 0.23 |
| 3 | ສະໜາມຍິງປືນ | D_3 | | 0.77 | 0.06 |
| **V** | **ທີ່ດິນປ່າໄມ້** | **F** | | **474.88** | **36.29** |
| 1 | ປ່າຊົມໃຊ້ | F_1 | | 440.41 | 33.66 |
| | ປ່າແຄມຫ້ວຍ | F_4 | | 31.61 | 2.42 |
| 2 | ປ່າປູກໄມ້ວິກ | F_5 | | 2.87 | 0.22 |
| **VI** | **ທີ່ດິນໂຍທາທິການ ແລະ ຂົນສົ່ງ** | **R** | | **22.83** | **1.75** |
| 1 | ທາງປູຢາງ | R_1 | | 7.99 | 0.61 |
| 2 | ທາງດິນແດງ | R_2 | | 12.87 | 0.98 |
| 3 | ສະຖານີຂົນສົ່ງ | R_5 | | 1.98 | 0.15 |
| **VII** | **ທີ່ດິນບໍລິເວນນ້ຳ** | **W** | | **10.53** | **0.80** |
| 1 | ຮ່ອງ | W_1 | | 1.44 | 0.11 |
| | ຫ້ວຍຂີວ | W_1 | | 1.17 | 0.09 |
| | ຫ້ວຍຕະໂງນ | W_1 | | 0.78 | 0.06 |
| | ຫ້ວຍນາກອງແພງ | W_1 | | 0.59 | 0.05 |
| | ຫ້ວຍຊົມ | W_1 | | 2.36 | 0.18 |
| 2 | ໜອງປາແຫວ | W_2 | | 3.03 | 0.23 |
| 3 | ໜອງຮັບນ້ຳ | W_3 | | 1.17 | 0.09 |
| **ລວມເນື້ອທີ່** | | | | **1308.48** | **100.00** |
| **ລວງຮອບທັງໝົດ** | | | | **20.43 Km** | |

ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025




ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025

ຮູບທີ 2 ແຜນທີ່ການນຳໃຊ້ທີ່ດິນປະຈຸບັນ ບ້ານໂນນສະຫວ່າງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ

# IV. ການຈັດສັນການນຳໃຊ້ທີ່ດິນ

## 4.1 ການກຳນົດເຂດທີ່ດິນຂອງບ້ານ ໂນນສະຫວ່າງ

ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃຫ້ຖືກກັບລະບຽບການ ແລະ ເຫມາະສົມກັບສະພາບຕົວຈິງຂອງແຜນພັດທະນາຂອງບ້ານໃຫ້ກາຍເປັນເຂດພັດທະນາເສດຖະກິດ-ສັງຄົມໃນອະນາຄົດ. ທາງທີມງານຈັດສັນ ແລະ ສ້າງແຜນທີ່ຕາດິນໄດ້ປະສານສົມທົບກັບອົງການປົກຄອງບ້ານຂະແໜງການທີ່ກ່ຽວຂ້ອງ ໄດ້ກຳນົດມີ 3 ເຂດ ດັ່ງນີ້:

### 4.1.1 ເຂດທີ່ດິນອະນຸລັກ

ກ. ທີ່ດິນວັດທະນະທຳ ປະກອບມີ: ດິນວັດ, ດິນປ່າຊ້າ ແລະ ດິນປ່າມະເຫສັກ;

ຂ. ທີ່ດິນປ່າໄມ້ ປະກອບມີ: ປ່າປ້ອງກັນ (ປ່າປ້ອງກັນຂອງເມືອງ), ປ່າປ້ອງກັນແຫຼ່ງນ້ຳ, ປ່າຊົມໃຊ້ຂອງບ້ານ.

ຄ. ດິນບໍລິເວນນ້ຳຂອງບ້ານ ປະກອບມີ: ເຂດສະຫງວນ ຫ້ວຍປະເຫວ

### 4.1.2 ເຂດທີ່ດິນນຳໃຊ້ນຳ

- **ທີ່ດິນກະສິກຳ**: ເຂດທີ່ດິນກະສິກຳຂອງ ບ້ານໂນນສະຫວ່າງ ປະກອບມີ: ດິນນາແມ່ນຢູ່ທາງທິດເໜືອຂອງບ້ານ, ດິນສວນ, ຄັງລ້ຽງລ້ຽງສັດ ແລະ ໜອງປາລອມບ້ານໃນອານາຄົດ ແມ່ນກຳນົດເອົາຢູ່ທາງທິດຕາເວັນຕົກຂອງບ້ານ.
- **ທີ່ດິນນຳໃຊ້ປຸກສ້າງທີ່ຢູ່ອາໃສປະຈຸບັນຂອງບ້ານ**:ແມ່ນກຳນົດຢູ່ຕາມສອງຝາກເສັ້ນທາງເລກທີ 605 ແລະ ເສັ້ນທາງ 657.
- **ດິນປຸກສ້າງຂອງລັດ ປະກອບມີ:**

- ດິນໂຮງຮຽນປະຖົມສົມບູນ ບ້ານໂນນສະຫວ່າງ ແລະ ໂຮງຮຽນມັດທະຍົມຕອນຕົ້ນ ແລະ ຕອນປາຍ ຕັ້ງຢູ່ຕິດກັບແຄມທາງ 605;
- ດິນຫ້ອງການບ້ານຕິດກັບທາງເລກທີ 605;
- ດິນປຸກສ້າງຕະຫຼາດ ຕິດກັບແຄມທາງ 605;
- ສະຖານທີ່ຖິ້ມຂີ້ເຫຍື້ອຍ ກຳນົດຢູ່ທາງທິດຕາເວັນອອກຂອງບ້ານ.

- **ເຂດທີ່ດິນເພື່ອພັດທະນາ** ໝາຍເຖິງເຂດພື້ນທີ່ຈະຂະຫຍາຍລະບົບພື້ນຖານໂຄງລ່າງຂອງບ້ານ, ເຂດທີ່ຂະຫຍາຍພື້ນທີ່ປຸກສ້າງຂອງບ້ານເພື່ອຮອງຮັບການເພີ່ມຂຶ້ນຂອງປະຊາກອນໃນອະນາຄົດ, ການຂະຫຍາຍພື້ນທີ່ດິນດັ່ງກ່າວ ແມ່ນໄດ້ກຳນົດເອົາລຽບຕາມແຄມສອງຝາກທາງເລກທີ 605 ກຳນົດອອກໄປເບື້ອງລະ 500 ແມັດ, ທາງຫຼັງໂຮງຮຽນຢູ່ທາງທິດໃຕ້ຂອງບ້ານ ນອກຈາກນັ້ນຍັງໄດ້ ແລະ ກຳນົດສະໜາມຖິ້ມຂີ້ເຫຍື້ອໃໝ່ຢູທາງທິດຕາເວັນອອກຂອງບ້ານ, ສຳລັບການກຳນົດຜັງລະອຽດແມ່ນທາງຂະແໜງການທີ່ກ່ຽວ ຂ້ອງຈະໄດ້ກຳນົດຕື່ມອີກ.

### 4.1.3 ຄວາມຮັບຮູ້ໂດຍລວມໃນການສຳຫຼວດຈັດສັນທີ່ດິນ

ການສຳຫຼວດຈັດສັນທີ່ດິນ ແມ່ນຈຸດເລີ້ມຕົ້ນທີ່ຈະຕ້ອງໄດ້ເອົາໃຈໃສ່ເປັນບຸລິມະສິດທຳອິດຂອງວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃນແຕ່ລະປະເພດ ແລະ ແຕ່ລະທ້ອງຖິ່ນຕິດພັນກັບການປົກປັກຮັກສາ ແລະ ຄຸ້ມຄອງປ່າໄມ້ເພື່ອຮັກສາແຫຼ່ງນໍ້າ, ຊີວະນາໆພັນ ແລະ ຄວາມອຸດົມສົມບູນຂອງດິນໃນແຕ່ລະເຂດໂດຍອີງໃສ່ຈຸດພິເສດ, ທີ່ຕັ້ງ ແລະ ພູມສັນຖານຂອງປະເທດເຮົາເຊິ່ງປະກອບມີເຂດທົ່ງພຽງ, ປ່າໂຄກາ ຊຶ່ງເຂດເຫຼົ່ານີ້, ລ້ວນແລ້ວແຕ່ແມ່ນເຂດທີ່ມີປະຊາຊົນບັນດາເຜົ່າໄດ້ຕັ້ງຖິ່ນຖານພູມລຳເນົາຢູ່ຢ່າງກະແຈກກະຈາຍ, ຊຶ່ງເຂົາເຈົ້າໄດ້ດຳລົງຊີວິດ, ທຳມາຫາກິນທີ່ຕິດພັນກັບປ່າໄມ້, ເຄື່ອງປ່າຂອງດົງ ແລະ ອາຫານຈາກທຳມະຊາດຕາມຫ້ວຍໜອງ, ຄອງບຶງ ແລະ ແມ່ນໍ້າລຳເຊຕ່າງໆ, ການດຳລົງຊີວິດລັກສະນະນີ້ ແມ່ນໄດ້ເພິ່ງພາອາໄສຄວາມອຸດົມສົມບູນຂອງທຳມະຊາດເປັນຕົ້ນຕໍ, ແຕ່ຖ້າຫາກຍາມໃດຄວາມອຸດົມສົມບູນເຫຼົ່ານັ້ນຫາກມີການປ່ຽນແປງ ຫຼື ຫຼຸດນ້ອຍຖອຍລົງການດຳລົງຊີວິດຂອງປະຊາຊົນກໍຈະມີຄວາຫຍຸ້ງຍາກຂຶ້ນ ແລະ ອີກດ້ານໜຶ່ງການເພີ້ມຂຶ້ນຂອງພົນລະເມືອງກໍເປັນສາຍເຫດໜຶ່ງທີ່ພາໃຫ້ມີຄວາມການຕ້ອງນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດເພີ້ມຂຶ້ນ, ມີການຈັບຈອງທີ່ດິນແບບຊະຊາຍອັນກໍ່ໃຫ້ເກີດມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດໃນສັງຄົມຫຼາຍຂຶ້ນ, ການຄຸ້ມຄອງ ແລະ ປົກປັກຮັກສາຄວາມອຸດົມສົມບູນຂອງທຳມະຊາດກໍ່ເປັນບັນຫາຍາກ, ຖ້າຫາກບໍ່ມີການສຳຫຼວດຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນ ແລະ ວາງແຜນຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ແຫຼ່ງນໍ້າໃຫ້ເຂົ້າສູ່ລະບຽບຫຼັກການ ແລະ ກົດໝາຍທີ່ກຳນົດໄວ້.

ການສຳຫຼວດຈັດສັນທີ່ດິນແຕ່ລະເຂດ ແລະ ແຕ່ລະປະເພດ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍກະສິກຳ, ກົດໝາຍວ່າດ້ວຍປ່າໄມ້ , ກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ, ກົດໝາຍວ່າດ້ວຍໄຟຟ້າ, ກົດໝາຍວ່າດ້ວຍບໍ່ແຮ່, ກົດໝາຍວ່າດ້ວຍການປົກປັກຮັກສິ່ງແວດລ້ອມ, ກົດໝາຍວ່າດ້ວຍຜັງເມືອງ, ກົດໝາຍວ່າດ້ວຍທາງຫຼວງ, ກົດໝາຍວ່າດ້ວຍອຸດສະຫະກຳປຸງແຕ່ງ, ບັນດາກົດໝາຍ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ.

ການສຳຫຼວດຈັດສັນທີ່ດິນແມ່ນຕ້ອງອີງໃສ່ຈຸດທີ່ຕັ້ງຂອງພື້ນທີ່ຕົວຈິງ ຕາມພູມສັນຖານ ແລະ ຄວາມຄ້ອຍຊັນທີ່ໄດ້ກຳນົດໄວ້ໃນມາດຕະການນຳໃຊ້ທີ່ດິນຄື:

- **ຄວາມຄ້ອຍຊັນແຕ່ 0-5%** ແມ່ນກຳນົດເປັນທີ່ດິນນາສຳລັບປູກເຂົ້າ ແລະການກະສິກຳອື່ນໆທຸກປະເພດ, ຖ້າຈະປູກພືດລົ້ມລຸກຄວນປຸກພືດຄຸມດິນເພື່ອບໍ່ໃຫ້ຫຍ້າຂຶ້ນ ແລະ ຖ້າຈະປູກໄມ້ຢືນຕົ້ນກໍຕ້ອງມີລະບົບລະ ບາຍນໍ້າຢ່າງເໝາະສົມ.

- **ຄວາມຄ້ອຍຊັນແຕ່ 5-15%** ແມ່ນກຳນົດເປັນພື້ນທີ່ກະສິກຳຫຼືປ່າໄມ້ທຸກປະເພດ (ນອກຈາກການເຮັດຊົນລະປະທານ) ແຕ່ຖ້າຈະປູກພືດລົ້ມລຸກ ຕ້ອງເຮັດເປັນຄັນຄູດິນຕາມແນວລະດັບຂອງເພື່ອປ້ອງກັນການເຊາະເຈື່ອນ.
- **ຄວາມຄ້ອຍຊັນແຕ່ 15-25%** ແມ່ນກຳນົດເປັນພື້ນທີ່ປູກໄມ້ທຸກປະເພດແຕ່ວ່າຊັນໂພດສຳລັບທົ່ງຫຍ້າລ້ຽງສັດ, ຖ້າຈະປູກພືດລົ້ມລຸກຕ້ອງເຮັດເປັນນາຂັ້ນໄດເພື່ອເປັນການປົກປັກຮັກສາໜ້າດິນເສຍກ່ອນ.
- **ຄວາມຄ້ອຍຊັນແຕ່ 25-35%** ແມ່ນກຳນົດເປັນພື້ນທີ່ປູກຕົ້ນໄມ້ທຸກຊະນິດ ຫຼື ຖ້າຈະປູກພືດປະສົມປະສານກັບການປູກປ່າຫຼືຈະປູກໄມ້ຊຸມຊົນກໍໄດ້, ຖ້າຈະປູກຫຍ້າລ້ຽງສັດກໍ່ຕ້ອງກ່ຽວເອົາຫຍ້າໄປໃຫ້ສັດກິນຢູ່ໃນຄອກ ແລະ ຖ້າຈະປູກໄມ້ສອນຕ້ອງມີພືດຄຸມດິນລະຫວ່າງກົກໄມ້ຕະຫຼອດແນວ.
- **ຄວາມຄ້ອຍຊັນສູງກ່ວາ 35-45%** ແມ່ນກຳນົດເປັນປ່າປ້ອງກັນການເຊາະເຈື່ອນຂອງດິນ, ປ່າປ້ອງກັນແຫຼ່ງນໍ້າ ແລະ ປ່າປົກປັກຮັກສາຊີວະນາໆພັນເທົ່ານັ້ນ,ໃນກໍລະນີໃຊ້ເປັນປ່າຜະລິດເຄື່ອງປ່າຂອງດົງ ກໍຈະຕ້ອງລະມັດລະວັງບໍ່ໃຫ້ທີ່ດິນເກີດການເຊາະເຈື່ອນໃນເວລາຂຸດຄົ້ນເຄື່ອງປ່າຂອງດົງນັ້ນ.
- **ຄວາມຄ້ອຍຊັນ 45% ຂຶ້ນໄປ** ແມ່ນບໍ່ເໝາະສົມສຳລັບປ່າຜະລິດແລ້ວ, ຕ້ອງເປັນປ່າສະຫງວນ, ປ່າປ້ອງກັນແຫຼ່ງນໍ້າ, ຊີວະນາໆພັນ ແລະ ປ້ອງກັນບໍ່ໃຫ້ດິນເຊາະເຈື່ອນ.

ການສຳຫຼວດຈັດສັນທີ່ດິນ ແລະ ການວາງແຜນການນຳໃຊ້ທີ່ດິນຕ້ອງໄດ້ດຳເນີນໄປພ້ອມໆກັນຢູ່ໃນເຂດທົ່ງພຽງ, ເຂດພູພຽງ ແລະ ເຂດພູດອຍ ທັງໃນເຂດຕົວເມືອງ, ເຂດຊານເມືອງ, ເຂດຊົນນະບົດ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ.

## 4.2 ການກຳນົດປະເພດທີ່ດິນຂອງບ້ານ

ອີງຕາມຂໍ້ມູນການສຳຫຼວດ ແມ່ນສາມາດສັງລວມ ແລະ ຈັດແບ່ງປະເພດການນຳໃຊ້ທີ່ດິນຂອງບ້ານ ໂນນສະຫວ່າງ ອອກເປັນ 8 ປະເພດທີ່ດິນ ເຊິ່ງລາຍລະອຽດຂອງປະເພດທີ່ດິນມີຄື:

❖ **ການກຳນົດ ທີ່ດິນກະສິກຳ:**

ທີ່ດິນກະສິກຳ ແມ່ນທີ່ດິນທີ່ໄດ້ກຳນົດໄວ້ເພື່ອນຳໃຊ້ເຂົ້າໃນການປູກຝັງ, ລ້ຽງສັດ ແລະ ການຄົ້ນຄ້ວາທົດລອງທາງດ້ານກະສິກຳ. ເຂດທີ່ດິນກະສິກຳຂອງບ້ານໂນນສະຫວ່າງ ປະກອບມີ: ດິນນາ, ດິນປູກພືດກະສິກຳທົ່ວໄປ, ເຂດລ້ຽງສັດ ແລະ ໜອງລວມບ້ານແມ່ນກຳນົດເອົາຢູ່ທາງທິດເໜືອ ແລະ ທິດຕາເວັນຕົກຂອງບ້ານ.

❖ **ການກຳນົດ ທີ່ດິນປຸກສ້າງ:**

ທີ່ດິນປຸກສ້າງແມ່ນທີ່ດິນທີ່ກຳນົດໄວ້ເພື່ອນຳໃຊ້ເຂົ້າໃນການປຸກສ້າງທີ່ຢູ່ອາໄສ, ໂຮງຈັກ, ໂຮງງານ, ສຳນັກງານ, ອົງການ ແລະ ສະຖານທີ່ສາທາລະນະ. ເຂດທີ່ດິນປຸກສ້າງຂອງບ້ານໂນນສະຫວ່າງ ແມ່ນລຽບຢູ່ຕາມສອງຟາກທາງ 605.

- ທີ່ດິນປຸກສ້າງທີ່ຢູ່ອາໃສປະຈຸບັນ: ກຳນົດຢູ່ຕາມສອງຟາກເສັ້ນທາງເລກທີ 605 ແລະ ແຄມທາງຊອຍຂອງບ້ານ
- ດິນປຸກສ້າງຂະຫຍາຍໃໝ່ໄດ້ກຳນົດຕາມສອງຟາກທາງເລກທີ 605 ອອກໄປເບື້ອງລະ 50 ແມັດ ແລະ ຍັງໄດ້ກຳນົດເອົາທາງຫຼັງໂຮງຮຽນຢູ່ທາງທິດໃຕ້ຂອງບ້ານ.
- ດິນປຸກສ້າງຂອງລັດປະກອບມີ:
  - ດິນຫ້ອງການບ້ານ ຕິດກັບທາງໃຫຍ່ 605
  - ດິນປຸກສ້າງຕະຫຼາດຕິດກັບແຄມທາງໃຫຍ່ 605
  - ດິນປຸກສ້າງສຸກສາລາໃນອານາຄົດແມ່ນຢູ່ແຄມທາງ 605 ທາງທິດໃຕ້ຂອງບ້ານ

❖ **ການກຳນົດ ທີ່ດິນວັດທະນະທຳ:**

ທີ່ດິນວັດທະນະທຳ ແມ່ນສະຖານທີ່ຕັ້ງຂອງມໍລະດົກທາງດ້ານວັດທະນະທຳທີ່ຕິດພັນກັບຮ່ອງຮອຍປະຫວັດສາດ, ວັດຖຸບູຮານ, ປູສະນີຍະສະຖານ, ວັດວາອາຮາມ, ທິວທັດທຳມະຊາດ, ສິ່ງປຸກສ້າງດ້ານວັດທະນະທຳ ແລະ ສະຖານທີ່ອື່ນໆ ທີ່ລັດກຳນົດໃຫ້ເປັນທີ່ດິນວັດທະນະທຳ ແລະ ການທ່ອງທ່ຽວ. ທີ່ດິນວັດທະນະທຳຂອງບ້ານ ໂນນສະຫວ່າງ ປະກອບມີ:

- ດິນວັດ ແມ່ນຢູທາງທິດຕາເວັນອອກຂອງບ້ານ
- ດິນປ່າຊ້າ ກຳນົດຢູ່ທາງທິດຕາເວັນຕົກຂອງບ້ານ
- ດິນປ່າມະເຫສັກ ກຳນົດຢູ່ທາງທິດຕາເວັນຕົກສຽງເໜືອຂອງບ້ານ

❖ **ການກຳນົດດິນປ້ອງກັນຊາດປ້ອງກັນຄວາມສະຫງົບ:**

ທີ່ດິນປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແມ່ນທີ່ດິນທີ່ໃຊ້ເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຊັ່ນ: ບ່ອນຕັ້ງຄ້າຍທະຫານ, ສຳນັກງານ, ກົມກອງ, ບ່ອນພັກເຊົາ, ໂຮງຮຽນ ແລະ ສະໜາມຝຶກແອບວິຊາການທະຫານ, ຕຳຫລວດ, ສະໜາມປືນໃຫຍ່, ສະໜາມບິນ, ທ່າເຮືອ, ສາງ, ໂຮງຈັກໂຮງງານ, ສະຖານທີ່ພັກຜ່ອນຂອງທະຫານ, ຕຳຫລວດທີ່ໃຊ້ເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະກອບມີ:

ກອງບັນຊາການທະຫານເມືອງ (ຄາຍທະຫານ)

❖ **ການກຳນົດ ທີ່ດິນປ່າໄມ້:**

ທີ່ດິນປ່າໄມ້ ແມ່ນເນື້ອທີ່ດິນທຸກຕອນທີ່ມີປ່າປົກຫຸ້ມ ຫຼື ທີ່ດິນບໍ່ມີປ່າປົກຫຸ້ມ ເຊິ່ງລັດກຳນົດໃຫ້ເປັນທີ່ດິນປ່າໄມ້. ທີ່ດິນປ່າໄມ້ຂອງບ້ານເຄິງ ແມ່ນປະກອບມີ: ປ່າປ້ອງກັນ, ປ່າປ້ອງກັນແຫຼ່ງນໍ້າ, ປ່າຊົມໃຊ້ຂອງບ້ານ ແລະ ທີ່ດິນປ່າປູກໄມ້ອຸດສະຫະກຳ.

❖ **ການກຳນົດທີ່ດິນອຸດສະຫະກຳ:**

ທີ່ດິນອຸດສະຫະກຳໝາຍເຖິງ ທີ່ຕັ້ງໂຮງຈັກໂຮງງານ ລວມເຖິງບ່ອນທຳລາຍສິ່ງເສດເຫຼືອອຸດສະຫະກຳ, ແຫຼ່ງວັດຖຸພະລັງງານ, ບ່ອນຖິ້ມຂີ້ເຫຍື້ອຍ ແລະ ອື່ນໆ. ທີ່ດິນອຸດສາຫະກຳປະກອບມີ:

- ທີ່ຕັ້ງໂຮງງານຂອງບໍລິສັດສິງດົງຫີນບູນຂຸດຄົ້ນກຣານິກ (ຫີນລາຍ) ເຊິ່ງກຳນົດເອົາຢູ່ທາງທິດຕາເວັນຕົກຂອງບ້ານເທິງປ່າປ້ອງກັນພູງ, ສະໜາມຖິ້ມຂີ້ເຫຍື້ອໃໝ່ແມ່ນກຳນົດເອົາຢູທາງທິດຕາເວັນອອກຂອງບ້ານຕິດກັບຊາຍແດນບ້ານກະແຕບ ແລະ ແລວສາຍສົ່ງໄຟ້າແຮງສູງເຊິ່ງຂະໜານກັບທາງເລກທີ 605.
- ເຂດຂຸດຄົ້ນຫີນກຣານິກ (ຫີນລາຍ) ຂອງບໍລິສັດສິງດົງຫີນບູນ ແມ່ນກຳຢູ່ທາງທິດຕາເວັນຕົກຂອງບ້ານເທິງປ່າປ້ອງກັນພູງ.

❖ **ການກຳນົດທີ່ດິນໂຍທາທິການ ແລະ ຂົນສົ່ງ:**

ທີ່ດິນໂຍທາທິການ ແລະ ຂົນສົ່ງ ແມ່ນທີ່ດິນສຳລັບໃຊ້ເປັນເສັ້ນທາງ, ຂອບທາງ, ຮ່ອງນໍ້າ, ເຂດສະຫງວນແລວ ທາງ, ສະຖານທີ່ຕັ້ງຂົວ, ແລວສາຍໂທລະສັບ, ທີ່ຕັ້ງສະຖານີສື່ສານ , ສະຖານີລົດ ຂົນສົ່ງ ສິນຄ້າ ແລະ ລົດໂດຍສານ, ທາງລົດໄຟ, ສະຖານທີ່ຕັ້ງສາງຮັບໃຊ້ການຂົນສົ່ງ ແລະ ທີ່ດິນອື່ນໆ ທີ່ໃຊ້ເຂົ້າໃນວຽກ ງານການຂົນສົ່ງ. ລະບົບຕາໜ່າງເສັ້ນທາງຂອງບ້ານ ວຽງທອງ ປະກອບມີ 3 ປະເພດ:

- ເສັ້ນທາງເລກທີ 605 ມີຄວາມກວ້າງ 50 ແມັດ ຈາກໃຈກາງທາງເບື້ອງລະ 25 ແມັດ;
- ເສັ້ນທາງຊົນນະບົດເສັ້ນທາງເຊື່ອມຕໍ່ລະຫວ່າງບ້ານຫາບ້ານແມ່ນກຳນົດເອົາຄວາມກ້ວາງ 8 ຫາ 12 ແມັດ.
- ສ່ວນທາງຮ່ອມເຂົ້າຫາພາຍໃນບ້ານແມ່ນມີ ຄວາມກວ້າງ 4-6 ແມັດ.

❖ **ການກຳນົດ ທີ່ດິນບໍລິເວນນໍ້າ:**

ທີ່ດິນບໍລິເວນນ້ຳ ແມ່ນທີ່ດິນເຊິ່ງຢູ່ພື້ນນ້ຳ ຫຼື ຢູ່ຂອບເຂດອ້ອມແອ້ມແຫຼ່ງນ້ຳ ເຊັ່ນ: ທີ່ດິນພື້ນນ້ຳ, ທີ່ດິນຍອດນ້ຳ, ທີ່ດິນແຄມນ້ຳ, ທີ່ດິນກາງນ້ຳ, ທີ່ດິນປົ່ງໃໝ່, ທີ່ດິນນ້ຳບົກປະ ຫຼື ທີ່ດິນທີ່ເກີດຂຶ້ນຈາກການດັດແປງທີ່ດິນບໍລິເວນນ້ຳຂອງບ້ານ ໂນນສະຫວ່າງ ແມ່ນປະກອບມີ: ຫ້ວຍຕາເຖົ້າ, ຫ້ວຍແຄນຖ້ຳ, ຫ້ວຍນ້ຳຄຳ ແລະ ຫ້ວຍແຄນງາມ. ນອກນັ້ນ, ຍັງມີການສະຫງວນແຄມນ້ຳໄວ້ເບື້ອງລະ 10 ແມັດ ອອກຈາກຝັ່ງ ເພື່ອເປັນການປ້ອງກັນການເຊາະເຈື່ອນ, ເພື່ອຮັກສາດິນແຄມນ້ຳ, ແຄມຫ້ວຍຕ່າງໆໃຫ້ມີຄວາມຍືນຍົງຕະຫຼອດໄປ.

ຕາຕະລາງທີ 8 ສັງລວມປະເພດການຈັດສັນທີ່ດິນບ້ານໂນນສະຫວ່າງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ

**ຕາຕະລາງເນື້ອທີ່ ການຈັດສັນນຳໃຊ້ທີ່ດິນ**

| ລ/ດ | ປະເພດທີ່ດິນ | ລະຫັດທີ່ດິນ | ສີ | ເນື້ອທີ່ ເຮັກຕາ | ເປີເຊັນ % |
|---|---|---|---|---|---|
| **I** | **ທີ່ດິນກະສິກຳ** | **AZ** | | **580.22** | **44.34** |
| 1 | ນາ | AZ_1 | | 319.05 | 24.38 |
| | ນາສາມາດເຮັດນາແຊງ | AZ_1 | | 40.67 | 3.11 |
| 2 | ດິນກະສິກຳທົ່ວໄປ | AZ_2 | | 74.62 | 5.70 |
| 3 | ເຂດສົ່ງເສີມລ້ຽງສັດແບບເປັນຟາມ | AZ_3 | | 87.80 | 6.71 |
| 4 | ເຂດກໍ່ສ້າງຊົນລະປະທານ | AZ_4 | | 1.86 | 0.14 |
| 5 | ໜອງປາ | AZ_6 | | 56.22 | 4.30 |
| **II** | **ທີ່ດິນປຸກສ້າງ** | **BZ** | | **189.26** | **14.46** |
| 1 | ດິນປຸກສ້າງບຸກຄົນ | BZ_1 | | 118.75 | 9.08 |
| 2 | ຫ້ອງການລັດ | BZ_2 | | 5.62 | 0.43 |
| | ຕະຫຼາດ | BZ_2 | | 1.06 | 0.08 |
| | ຫ້ອງການບ້ານ | BZ_2 | | 0.30 | 0.02 |
| | ໂຮງໝໍເມືອງ | BZ_2 | | 1.63 | 0.12 |
| | ໂຮງຮຽນ | BZ_2 | | 7.00 | 0.54 |
| 3 | ທີ່ດິນຂະຫຍາຍປຸກສ້າງ | BZ_3 | | 54.91 | 4.20 |
| **III** | **ທີ່ດິນວັດທະນະທຳ** | **CZ** | | **4.93** | **0.38** |
| 1 | ວັດ | CZ_1 | | 2.72 | 0.21 |
| | ໂບດ | CZ_1 | | 0.41 | 0.03 |
| 2 | ປ່າຊ້າ | CZ_3 | | 1.80 | 0.14 |
| **IV** | **ທີ່ດິນ ປກສ, ປກຊ** | **DZ** | | **5.24** | **0.40** |
| 1 | ຫ້ອງການ ປກສ | DZ_1 | | 1.48 | 0.11 |
| 2 | ຫ້ອງການ ປກຊ | DZ_2 | | 2.98 | 0.23 |
| 3 | ສະໜາມຍິງປືນ | DZ_3 | | 0.77 | 0.06 |
| **V** | **ທີ່ດິນປ່າໄມ້** | **FZ** | | **492.81** | **37.66** |
| 1 | ປ່າຊົມໃຊ້ | FZ_1 | | 214.44 | 16.39 |
| 2 | ປ່າປ້ອງກັນຫ້ວຍ/ຮ່ອງ | FZ_3 | | 4.88 | 0.37 |
| | ປ່າປ້ອງກັນຫ້ວຍຂີ້ວ | FZ_3 | | 25.07 | 1.63 |
| | ປ່າປ້ອງກັນຫ້ວຍຊົມ | FZ_3 | | 96.93 | 0.61 |
| | ປ່າປ້ອງກັນຫ້ວຍຕະໂງນ | FZ_3 | | 144.77 | 0.99 |
| | ປ່າປ້ອງກັນຄອງຊົນລະປະທານ | FZ_3 | | 6.73 | 1.13 |
| **VI** | **ທີ່ດິນໂຍທາທິການ ແລະ ຂົນສົ່ງ** | **RZ** | | **21.28** | **1.63** |
| 1 | ທາງປູຢາງ | RZ_1 | | 7.99 | 0.61 |
| 2 | ທາງດິນແດງ | RZ_2 | | 12.89 | 0.99 |
| | ທາງຈະຕັດໃໝ່ | RZ_2 | | 0.17 | 0.01 |
| 3 | ຄິວລົດໂດຍສານ | RZ_4 | | 0.23 | 0.02 |
| **VII** | **ທີ່ດິນບໍລິເວນນ້ຳ** | **WZ** | | **14.73** | **1.13** |
| 1 | ຫ້ວຍ/ຮ່ອງ | WZ_1 | | 1.91 | 0.15 |
| | ຫ້ວຍຂີ້ວ | WZ_1 | | 0.99 | 0.08 |
| | ຫ້ວຍຕະໂງນ | WZ_1 | | 0.78 | 0.06 |
| | ຫ້ວຍນາກອງແພງ | WZ_1 | | 0.59 | 0.05 |
| | ຫ້ວຍຊົມ | WZ_1 | | 2.36 | 0.18 |
| 2 | ໜອງປາແຫວ | WZ_2 | | 4.21 | 0.32 |
| 3 | ໜອງຮັບນ້ຳ | WZ_3 | | 3.90 | 0.30 |
| | **ລວມເນື້ອທີ່** | | | **1308.48** | **100.00** |
| | **ລວງຮອບທັງໝົດ** | | | **20.43 Km** | |

ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025




ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025

ຮູບທີ 3 ແຜນທີ່ຈັດສັນການນຳໃຊ້ທີ່ດິນ ບ້ານໂນນສະຫວ່າງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ

ພາຍຫຼັງໄດ້ມີການວາງແຜນຈັດສັນ, ຈັດແບ່ງເຂດ ແລະ ຈັດແບ່ງປະເພດທີ່ດິນຂອງບ້ານໂນນສະຫວ່າງ ແລ້ວເຫັນວ່າ: ເນື້ອທີ່ດິນແຕ່ລະປະເພດມີການປ່ຽນແປງບາງປະເພດທີ່ດິນກໍ່ມີການເພີ່ມຂື້ນ ແລະ ບາງປະເພດທີ່ດິນກໍ່ມີການລຸດລົງຍ້ອນວ່າ:

| | | |
|---|---|---|
| 1 | ທີ່ດິນກະສິກຳ | ເນື້ອທີ່ດິນກະສິກຳເພີ່ມຂື້ນຍ້ອນວ່າ:ບ້ານໄດ້ກຳນົດເຂດລ້ຽງສັດ ແລະ ໜອງລວມບ້ານຂື້ນຕື່ມອີກ. |
| 2 | ທີ່ດິນປຸກສ້າງ | ມີເນື້ອທີ່ເພີ່ມຂື້ນ, ຍ້ອນວ່າ: ໄດ້ມີການກຳນົດເຂດຈະຂະຫຍາຍການປຸກສ້າງເພີ່ມຂື້ນ ເພື່ອຮັບຮອງແກ່ການເພີ່ມຂື້ນຂອງພົນລະເມືອງພາຍໃນບ້ານໃນອານາຄົດ. |
| 3 | ທີ່ດິນວັດທະນະທຳ | ແມ່ນຍັງຮັກສາເນື້ອທີ່ຄືງເດີມ ແລະ ບໍ່ມີການກຳນົດເພີ້ມຕື່ມອີກ. |
| 4 | ທີ່ດິນປ່າໄມ້ | ມີເນື້ອທີ່ຫຼຸດລົງຍ້ອນໄດ້ກຳນົດເຂດຂະຫຍາຍປຸກສ້າງໃໝ່ໃນອາຄົດ. |
| 5 | ທີ່ດິນໂຍທາທິການແລະຂົນສົ່ງ | ມີເນື້ອທີ່ເພີ່ມຂື້ນຍ້ອນວ່າບ້ານໄດ້ກຳນົດລະບົບຕາມໜ່າງເສັ້ນທາງທີ່ຈະຕັດໃໝ່ |
| 6 | ທີ່ດິນ ປກຊ | ແມ່ນຍັງຮັກສາເນື້ອທີ່ຄືງເດີມ ແລະ ບໍ່ມີການກຳນົດເພີ້ມຕື່ມອີກ. |
| 7 | ທີ່ດິນອຸດສາຫະກຳ | ເນື້ອທີ່ເພີ່ມຂື້ນ, ຍ້ອນວ່າ ໄດ້ມີການກຳນົດເຂດສະໜາມຂີ້ເຫຍື້ອໃຫມ່. |
| 8 | ທີ່ດິນບໍລິເວນນ້ຳ | ມີເນື້ອທີ່ເພີ່ມຂື້ນ ຍ້ອນວ່າ: ໄດ້ມີການກຳນົດເຂດສະຫງວນແຄມນ້ຳຂອງ ແລະ ເຂດສະຫງວນແຄມ ຫ້ວຍນ້ຳນ້ອຍຕ່າງໆ ຈື່ງເຮັດໃຫ້ທີ່ດິນບໍລິເວນນ້ຳມີເນື້ອທີ່ເພີ່ມຂື້ນ. |

ຕາຕະລາງທີ 9 ສົມທຽບລະຫວ່າງເນື້ອທີ່ການນຳໃຊ້ດິນປະຈຸບັນ ແລະ ເນື້ອທີ່ຂອງແຜນຈັດສັນ

| ລ/ດ | ປະເພດການນຳໃຊ້ທີ່ດິນ | ເນື້ອທີ່ນຳໃຊ້ ປະຈຸບັນ (ha) | ກວມສ່ວນຮ້ອຍ (%) | ເນື້ອທີ່ ແຜນຈັດສັນ (ha) | ກວມສ່ວນ ຮ້ອຍ (%) |
|---|---|---|---|---|---|
| 1 | ທີ່ດິນກະສິກຳ | 628.58 | 49.20 | 544.21 | 42,63 |
| 2 | ທີ່ດິນປຸກສ້າງ | 136.14 | 10.66 | **1**74,99 | 13,71 |
| 3 | ທີ່ດິນວັດທະນະທຳ | 2.72 | 0.21 | 4,93 | **0,**39 |
| 4 | ທີ່ດິນ ປ ກ ສ, ປກຊ | 5.24 | 0.41 | 5,23 | **0,**41 |
| 5 | ທີ່ດິນປ່າໄມ້ | 475.25 | 37.20 | 513,70 | 40,24 |
| 6 | ທີ່ດິນໂຍທາທິການ ແລະ ຂົນສົ່ງ | 19.19 | 1.50 | 19,48 | 1,53 |
| **7** | ທີ່ດິນບໍລິເວນນ້ຳ | 10.54 | 0.82 | 14,02 | **1,**10 |
| **ລວມເນື້ອທີ່ທັງໝົດ** | | **1,277.66** | **100** | **1276,57** | **100** |

ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025

# V. ທ່າແຮງໃນການພັດທະນາທີ່ດິນ

## 5.1 ທ່າແຮງໃນການພັດທະນາທີ່ດິນຂອງບ້ານ

ບ້ານໂນນສະຫວ່າງ ເປັນບ້ານໜຶ່ງທີ່ມີຄວາມດຸໝັ່ນເຊິ່ງມີທ່າແຮງໃນການປູກໄມ້ອຸດສາຫະກຳ ເປັນຕົ້ນແມ່ນສວນຢາງພາລາ ແລະ ການຜະລິດກະສິກຳປູກເຂົ້າ ແລະ ພືດກະສິກຳທົ່ວໄປ. ນອກຈາກນີ້, ຍັງມີການລ້ຽງສັດນ້ອຍ ແລະ ຄ້າຂາຍທີ່ເປັນອາຊີບຫຼັກ ສັງເກດໄດ້ຈາກເປີເຊັນການສຳຫຼວດຂອງທີມງານມີເນື້ອທີ 117,42 ເຮັກຕາ ກວມເອົາ 23,50 ເປີເຊັນຂອງເນື້ອທີ່ບ້ານທັງໝົດ.

1) ການປູກສວນຢາງພາລາ, ສວນມັນຕົ້ນ, ປູກກ້ວຍ, ປູກສວນຫວາຍ ແລະ ເຂົ້ານາປີ.

2) ການລ້ຽງສັດໃຫ່ຍປະເພດງົວຄວາຍ ແລະ ຍັງມີສັດນ້ອຍທີ່ລ້ຽງຕາມບ້ານລະດັບຄອບຄົວ.

## 5.2 ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານໂນນສະຫວ່າງ

ອີງໃສ່ທ່າແຮງໃນການພັດທະນາຂອງບ້ານ ແລະ ຄວາມສາມາດຕົວຈິງຂອງບ້ານທີ່ມີຢູ່ນັ້ນສາມາດກຳນົດໂຄງການພັດທະນາທີ່ດິນພາຍໃນບ້ານໄດ້ຈັດໂຄງການບຸລິມະສິດຕົ້ນຕໍດັ່ງນີ້:

- ສືບຕໍ່ໂຄງການອອກໃບຕາດິນຖາວອນ.
- ສົ່ງເສີມໂຄງການລ້ຽງສັດໃຫຍ່ ແລະ ສັດນ້ອຍ,
- ພື້ນຖານໂຄງລ່າງ ປັບປຸງ ແລະ ຂະຫຍາຍລະບົບຕາໜາງເສັ້ນທາງພາຍໃນບ້ານ, ສຸກສາລາ, ຫ້ອງການບ້ານ, ຕະຫຼາດ ແລະ ສືບຕໍ່ລຶບລ້າງຄອບຄົວທຸກຍາກໃຫ້ໝົດໄປ.

ທັງ 3 ໂຄງການນີ້ ແມ່ນມອບໃຫ້ຂະແໜງການທີ່ກ່ຽວຂ້ອງຂອງເມືອງ ໃຫ້ພິຈາລະນາຄົ້ນຄ້ວາ ແລະ ຈັດຕັ້ງປະຕິບັດເພື່ອແນ່ໃສ່ການລຶບລ້າງຄວາມທຸກຈົນຂອງທ້ອງຖິ່ນ ກໍ່ຄືເມືອງ ຕາມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານວາງອອກ.

## VI. ລະບຽບການໃລະບຽບໃນການຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນໍາໃຊ້ທີ່ດິນ

ພາຍຫລັງທີ່ໄດ້ສໍາເລັດ ແລະ ຮັບຮອງເອົາແຜນຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດ, ສ້າງເປັນແຜນທີ່ການນໍາໃຊ້ທີ່ດິນຢ່າງເປັນທາງການແລ້ວ ມອບແຜນຈັດສັນທີ່ດິນດັ່ງກ່າວໃຫ້ແກ່ອົງການປົກຄອງທ້ອງຖິ່ນບັນດາຂະແໜງການຕ່າງໆ ຂອງເມືອງ, ບ້ານເປັນຜູ້ຄຸ້ມຄອງ, ນໍາໃຊ້ ແລະ ຕິດຕາມກວດກາຕາມພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບໃຫ້ເຂົ້າສູ່ລະບຽບກົດໝາຍຕ່າງໆທີ່ກ່ຽວຂ້ອງກັບທີ່ດິນ ແລະ ນໍາພາໃນການສ້າງກົດລະບຽບໃນການຄຸ້ມຄອງແຜນຈັດສັນທີ່ດິນດັ່ງກ່າວນີ້ໃຫ້ໄດ້ຮັບຜົນດີ.

### 6.1 ການຄຸ້ມຄອງ ທີ່ດິນກະສິກໍາ

ທີ່ດິນກະສິກໍາຂອງບ້ານ ໂນນສະຫວ່າງ ປະກອບມີ: ດິນນາ, ດິນສວນ, ດິນປູກພືດກະສິກໍາທົ່ວໄປ, ດິນສິ່ງເສີມການລ້ຽງສັດນ້ອຍ, ການຄຸ້ມຄອງດິນກະສິກໍາແມ່ນຫ້າມບໍ່ໃຫ້ປ່ຽນແປງດິນກະສິກໍາໄປເປັນດິນປະເພດອື່ນ ຖ້າຈະຫັນປ່ຽນ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງເສຍກ່ອນ

### 6.2 ການຄຸ້ມຄອງທີ່ດິນປຸກສ້າງ

ດິນປຸກສ້າງຂອງບ້ານໂນນສະຫວ່າງ ປະຈຸບັນມີທີ່ດິນປຸກສ້າງທີ່ຢູ່ອາໃສ, ດິນຫ້ອງການບ້ານ, ດິນໂຮງຮຽນ, ດິນຕະຫຼາດ ແລະ ດິນແຮຂະຫຍາຍການປຸກສ້າງ; ດິນແຮປຸກສ້າງສຸກສາລາ. ການຄຸ້ມຄອງປົກປັກຮັກສາແມ່ນປະຕິບັດຕາມລະບຽບກົດໝາຍໂດຍສະເພາະກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ຢ່າງເຂັ້ມງວດ. ຖ້າຈະມີການຫັນປ່ຽນດິນປະເພດນີ້ ໄປເປັນດິນປະເພດອື່ນໆ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງເສຍກ່ອນ.

### 6.3 ການຄຸ້ມຄອງ ທີ່ດິນວັດທະນາທໍາ

ທີ່ດິນວັດທະນະທໍາ ແມ່ນໄດ້ກໍານົດເປັນທີ່ດິນສັກສິດຂອງບ້ານໂນນສະຫວ່າງ ຕາມລະບຽບການຄວາມເຊື່ອຖືໃຫ້ຖືກ ຕ້ອງຕາມກົດໝາຍ, ທີ່ດິນປະຫວັດສາດເປັນບ່ອນທ່ຽວຊົມຄວາມສວຍງາມຂອງທໍາມະຊາດ, ປົກປັກຮັກສາຄວາມອຸດົມສົມບູນຂອງພູມີປະເທດໃຫ້ຖືກຕາມລະບຽບກົດໝາຍ. ທີ່ດິນວັດທະນາທໍາຂອງບ້ານໂນນສະຫວ່າງປະກອບມີ: ດິນວັດ, ດິນປ່າຊ້າ ແລະ ດິນປ່າມະເຫສັກ. ການຄຸ້ມຄອງປົກປັກຮັກສາແມ່ນມອບໃຫ້ການຈັດຕັ້ງຂອງບ້ານ ເປັນຜູ້ຄຸ້ມຄອງຕາມລະບຽບກົດໝາຍ ແລະ ຮີດຄອງປະເພນີ ຫ້າມນໍາໃຊ້ທີ່ດິນດັ່ງກ່າວໃນຈຸດປະສົງອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

### 6.4 ການຄຸ້ມຄອງທີ່ດິນປ້ອງກັນຊາດປ້ອງກັນຄວາມສະຫງົບ

ທີ່ດິນປ້ອງກັນຊາດ,ປ້ອງກັນຄວາມສະຫງົບປະກອບມີ: ຄ້າຍທະຫານພູງູ ແມ່ນທີ່ດິນທີ່ໃຊ້ເຂົ້າໃນວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບເຊັ່ນ: ບ່ອນຕັ້ງຄ້າຍທະຫານ, ສໍານັກງານ, ກົມກອງ, ບ່ອນພັກເຊົາ, ໂຮງຮຽນ ແລະ ສະໜາມຝຶກແອບວິຊາການທະຫານ, ຕໍາຫລວດ, ສະໜາມປືນໃຫຍ່, ສະໜາມບິນ, ທ່າເຮືອ, ສາງ, ໂຮງຈັກໂຮງງານ, ສະຖານທີ່ພັກຜ່ອນຂອງທະຫານ, ຕໍາຫລວດທີ່ໃຊ້ເຂົ້າໃນວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບສໍາລັບການຄຸ້ມຄອງແມ່ນມອບໃຫ້ກະຊວງປ້ອງກັນຊາດເປັນຜູ້ອອກລະບຽບການຄຸ້ມຄອງ.

### 6.5 ການຄຸ້ມຄອງ ທີ່ດິນປ່າໄມ້

ທີ່ດິນປ່າໄມ້ປະກອບມີຄື: ດິນປ່າປ້ອງກັນ (ປ່າປ້ອງກັນຂອງເມືອງ), ປ່າປ້ອງກັນແຫຼ່ງນໍ້າ, ປ່າຊົມໃຊ້ ແລະ ປ່າປູກໄມ້ອຸດສາຫະກໍາ. ທີ່ດິນປ່າໄມ້ແມ່ນຊັບພະຍາກອນອັນລໍ້າຄ່າ, ມີລະບົບນິເວດສະເພາະຂອງມັນ ຊຶ່ງປະກອບມີຊີວະນາໆພັນແຫຼ່ງນໍ້າ, ສັດປ່າ ແລະ ຕົ້ນໄມ້ຫຼາຍຊະນິດທີ່ເກີດຕາມທໍາມະຊາດ; ການຄຸ້ມຄອງແມ່ນມອບໃຫ້ອໍານາດການປົກຄອງທ້ອງຖິ່ນ ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງຂອງຂັ້ນເມືອງ ແລະ ຂັ້ນແຂວງ ອອກລະບຽບການໃນການຄຸ້ມຄອງ ແລະ ປົກປັກຮັກສາ.

### 6.6 ການຄຸ້ມຄອງ ທີ່ດິນໂຍທາທິການ ແລະ ຂົນສົ່ງ

ລະບົບຕະໜ່າງເສັ້ນທາງຢູ່ບ້ານ ໂນນສະຫວ່າງ ເມືອງ ຊົນນະບູລີ ແຂວງສະຫວັນນະເຂດ ແມ່ນປະກອບມີເສັ້ນທາງຢູ່ 03 ປະເພດຄື:

- <u>**ທາງປະເພດທີ**</u> <u>1:</u> ເສັ້ນທາງເລກທີ 605 ກໍານົດຄວາມກ້ວາງ 50 ແມັດ, ຄື ອອກຈາກໃຈກາງທາງເບື້ອງລະ 25 ແມັດ.
- <u>**ທາງປະເພດທີ 2:**</u> ເສັ້ນທາງເຊື່ອມຕໍ່ລະຫວ່າງບ້ານຫາບ້ານກໍານົດ 12 ແມັດ, ຄືອອກຈາກໃຈກາງທາງເບື້ອງລະ 6 ແມັດ .
- <u>**ທາງປະເພດທີ**</u> <u>3:</u> ແມ່ນເສັ້ນທາງຮ່ອມ, ທາງຊອຍພາຍໃນບ້ານ ແລະ ໄປເຂດທໍາການຜະລິດ, ແມ່ນໄດ້ກໍານົດເອົາຄວາມກ້ວາງ 4 ຫາ 8 ແມັດ, ຄືອອກຈາກໃຈກາງທາງເບື້ອງລະ 2 ຫຼື 4 ແມັດ.

ທີ່ດິນປະເພດດັ່ງກ່າວແມ່ນມອບໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄຸ້ມຄອງເລີຍ ແລະ ໃຫ້ປະຕິບັດຕາມກົດໝາຍທາງຫຼວງ.

### 6.7 ການຄຸ້ມຄອງ ທີ່ດິນບໍລິເວນນໍ້າ

ສໍາລັບທີ່ດິນບໍລິເວນນໍ້າ ປະກອບມີ: ຫວ້ຍປາເຫວ, ນອກນັ້ນຍັງມີການສະຫງວນແຄມນໍ້າໄວ້ເບື້ອງລະ 15 ແມັດ ອອກຈາກຝັ່ງ ເພື່ອເປັນການປ້ອງກັນການເຊາະເຈື່ອນ, ເພື່ອຮັກສາດິນແຄມນໍ້າ, ແຄມຫ້ວຍຕ່າງໆໃຫ້ມີຄວາມຍືນຍົງຕະຫຼອດໄປ. ດິນບໍລິເວນນໍ້າຂອງບ້ານ ແມ່ນໄດ້ກໍານົດຕາມແຜນຈັດສັນທີ່ ໝາຍໄວ້ຢູ່ໃນແຜນທີ່ ແລະ ມອບໃຫ້ບ້ານເປັນຜູ້ຄຸ້ມຄອງອອກລະບຽບການ ແລະ ມາດຕາການໃນການຄຸ້ມຄອງ.

## VII. ການຫັນປ່ຽນປະເພດທີ່ດິນ

ໃນກໍລະນີມີການຫັນປ່ຽນການນໍາໃຊ້ທີ່ດິນປະເພດໜຶ່ງໄປສູ່ປະເພດອື່ນ ທີ່ໄດ້ກໍານົດໄວ້ໃນບົດແຜນຈັດສັນທີ່ດິນຂັ້ນບ້ານ/ກຸ່ມບ້ານ ແລະ ໄດ້ຮັບຮອງຈາກ ອົງການປົກຄອງທ້ອງຖິ່ນ ແມ່ນໃຫ້ປະຕິບັດຕາມລະບຽບການຂອງຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມໄດ້ວາງອອກ. (ມີເອກະສານແນະນໍາສະເພາະສະບັບເລກທີ່1095/ກຊສ,ລົງວັນທີ 18 ມິຖຸນາ 2024).

## VIII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ

ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງການນໍາໃຊ້ທີ່ດິນ ແລະ ປ່າໄມ້ຂັ້ນບ້ານເພື່ອໃຫ້ແຜນການດັ່ງກ່າວຖືກຈັດຕັ້ງປະຈັດຕັ້ງປະຕິບັດໄປຕາມແຜນທີ່ວາງໄວ້ໃຫ້ມີປະສິດທິຜົນ. ດັ່ງນັ້ນ, ອໍານາດການປົກຄອງເມືອງ, ອໍານາດການປົກຄອງບ້ານ ແລະ ຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ຂອງບ້ານ ຕ້ອງໄດ້ເຮັດໜ້າທີ່ເປັນຜູ້ຊີ້ນໍາ-ນໍາພາ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນດັ່ງນີ້:

### 8.1. ການຈັດຕັ້ງ

ຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ ຂອງບ້ານຕ້ອງປະກອບມີ: ບຸກຄົນທີ່ມີໜ້າທີ່ຕໍາແໜ່ງທີ່ສໍາຄັນໃນອໍານາດການປົກຄອງບ້ານ, ຮັບຜິດຊອບວຽກງານຊີ້ນໍາ, ກວດກາ ແລະ ບໍລິຫານຕ່າງໆ (ເອກະສານຊ້ອນທ້າຍທີ 07)

### 8.2. ບຸກຄະລາກອນ

ນາຍບ້ານ, ຕາງໜ້າອົງການຈັດຕັ້ງມະຫາຊົນ (ຊາວໜຸ່ມ, ແມ່ຍິງ ແລະ ແນວໂຮມ), ກອງຫຼອນ, ປ້ອງກັນ, ປ່າໄມ້ບ້ານ ແລະ ທີ່ດິນບ້ານ.

### 8.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ

- ຈັດຕັ້ງປະຕິບັດມະຕິຄໍາສັ່ງ, ແຈ້ງການ ຂອງເມືອງ, ແຂວງ ກ່ຽວກັບການຄຸ້ມຄອງນໍາໃຊ້ທີ່ດິນ ແລະ ປ່າໄມ້;
- ຈັດຕັ້ງປະຕິບັດການກວດກາ, ຕິດຕາມ, ວັດແທກຂອບເຂດດິນທໍາການຜະລິດໃຫ້ແຕ່ລະຄອບຄົວ, ຊີ້ນໍາແຕ່ລະຄອບຄົວໃນການພັດທະນາທີ່ດິນ, ສົ່ງເສີມການປູກພືດເປັນສິນຄ້າ, ຄຸ້ມຄອງ, ປົກປັກຮັກສາ, ປູກໄມ້, ຟື້ນຟູປ່າ ແລະ ນໍາໃຊ້ຊັບພະຍາກອນປ່າໄມ້ຢ່າງມີປະສິດທິຜົນ, ຕາມແຜນການ ແລະ ລະບຽບການທີ່ໄດ້ຮັບການອະນຸມັດແລ້ວ ຈາກຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ;
- ໂຄສະນາສຶກສາອົບຮົມກ່ຽວກັບຄວາມສໍາຄັນ ແລະ ຄຸນປະໂຫຍດຂອງປ່າໄມ້, ທີ່ດິນປ່າໄມ້, ສັດນໍ້າ, ສັດປ່າ, ແຫຼ່ງນໍ້າ ແລະ ສິ່ງແວດລ້ອມທໍາມະຊາດໃຫ້ປະຊາຊົນໃນບ້ານຂອງຕົນເຂົ້າໃຈ;
- ຕິດຕາມ, ເກັບກໍາສະພາບການປ່ຽນແປງຂອງປ່າໄມ້, ສິ່ງແວດລ້ອມ ແລະ ສະພາບການເຄື່ອນໄຫວວຽກງານປ່າໄມ້ ໃນຂອບເຂດບ້ານຂອງຕົນ ແລ້ວລາຍງານໃຫ້ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ;
- ຈັດຕັ້ງປະຊາຊົນຄຸ້ມຄອງ ປ່າໄມ້ ແລະ ທີ່ດິນປ່າໄມ້ໃນຂອບເຂດບ້ານຂອງຕົນ;
- ສ້າງລະບຽບການສະເພາະໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້, ແຫຼ່ງນໍ້າ, ສັດນໍ້າ, ສັດປ່າ ແລະ ສິ່ງແວດລ້ອມທໍາມະຊາດ ພາຍໃນບ້ານໃຫ້ຖືກຕ້ອງກັບສະພາບຕົວຈິງຂອງບ້ານຕົນ;
- ສົ່ງເສີມການເຮັດອາຊີບກະສິກໍາຄົງທີ່ໃຫ້ປະຊາຊົນໃນບ້ານຕົນ ແນໃສ່ຈໍາກັດ ແລະ ກ້າວໄປເຖິງບ່ອນ ຍຸດຕິການຕັດໄມ້ທໍາລາຍປ່າ ແລະ ເພື່ອປົກປັກຮັກສາສິ່ງແວດລ້ອມທໍາມະຊາດ ເຮັດໃຫ້ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ມີຄວາມອຸດົມສົມບູນ.

### 8.4. ຂອບເຂດສິດ

- ກວດກາການອະນຸມັດຕັດໄມ້ ຂອງປະຊາຊົນພາຍໃນບ້ານຕົນ ຕາມລະບຽບການ.
- ຕິດຕາມກວດກາ ແລະ ສະກັດກັ້ນ ການລ່າເນື້ອ ແລະ ຊື້ຂາຍສັດປ່າ ທີ່ບໍ່ຖືກຕ້ອງຕາມລະບຽບການ.
- ຕ້ານ ແລະ ສະກັດກັ້ນ ການເຄື່ອນໄຫວອັນບໍ່ດີ ທີ່ມີຜົນກະທົບຕໍ່ຊັບພະຍາກອນປ່າໄມ້, ແຫຼ່ງນໍ້າ ແລະ
- ສິ່ງແວດ ລ້ອມເຊັ່ນ: ການລັກລອບຕັດໄມ້, ຈູດປ່າ ແລະ ສະກັດກັ້ນທຸກການກະທໍາ ທີ່ເປັນການທໍາລາຍ ຕໍ່ຊັບພະຍາກອນປ່າໄມ້, ສັດນໍ້າ, ສັດປ່າ ແລະ ແຫຼ່ງນໍ້າຢ່າງທັນການ.
- ເຂົ້າຮ່ວມ ແລະ ປະກອບຄໍາເຫັນຕໍ່ກອງປະຊຸມຕາມການເຊື້ອເຊີນ.
- ຮຽກປະຊຸມ, ຄົ້ນຄວ້າ, ແກ້ໄຂບັນຫາຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງນໍາໃຊ້ທີ່ດິນ ແລະ ປ່າໄມ້ .
- ປະຕິບັດສິດອື່ນໆ ຕາມຂັ້ນເທິງມອບໝາຍສະເພາະ ຫຼື ຕາມທີ່ກໍານົດໄວ້ໃນລະບຽບກົດໝາຍ.

### 8.5. ລະບອບແບບແຜນວິທີເຮັດວຽກ

ລະບອບແບບແຜນວິທີເຮັດວຽກ ຂອງຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ຂອງບ້ານ ມີດັ່ງນີ້:

- ປະຕິບັດຫຼັກການເຮັດວຽກແບບລວມສູນປະຊາທິປະໄຕ,ນໍາພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນ
- ເຮັດວຽກຢ່າງມີແຜນການ, ມີແຜນກິດຈະກໍາລະອຽດ, ການແກ້ໄຂວຽກງານຢ່າງມີຈຸດສຸມ, ມີເປົ້າ
- ໝາຍ ແລະ ຄາດໝາຍແຕ່ລະໄລຍະ.
- ການເຄື່ອນໄຫວວຽກງານບົນພື້ນຖານການປະສານສົມທົບຢ່າງແໜ້ນແຟ້ນ, ມີຄວາມເປັນເອກະພາບພາຍໃນ
- ທຸກໜ້າວຽກຕ້ອງມີການສໍາຫຼວດ, ກວດກາ, ສະຫຼຸບຖອດຖອນບົດຮຽນ ຕີລາຄາຜົນໄດ້ ຜົນ

- ເສຍລວມທັງສາເຫດຕ່າງໆຢ່າງຖືກຕ້ອງ ແທດເໝາະກັບສະພາບຕົວຈິງ, ປະຕິບັດລະບອບການລາຍງານ, ຂໍຄຳເຫັນ ແລະ ທິດຊີ້ນຳຈາກຂັ້ນເທິງເປັນປະຈຳ.

### 8.6. ການຕິດຕາມກວດກາ

ການຕິດຕາມກວດກາການຈັດຕັ້ງປະຕິບັດແຜນການ ແມ່ນຈະຕ້ອງໄດ້ດຳເນີນຫລັງຈາກສຳເລັດວຽກວາງແຜນການນຳໃຊ້ທີ່ດິນ ໄດ້ມີການຈັດພິທີປະກາດມອບຮັບ. ການຕິດຕາມກວດກາ ແມ່ນເພື່ອເປັນການກະຕຸ້ນ ແລະ ເຕືອນໃຫ້ຊາວບ້ານໃນການປະຕິບັດແຜນການນຳໃຊ້ທີ່ດິນ ແລະ ປ່າໄມ້ທີ່ໄດ້ປະກາດຮັບຮອງເອົາ, ເພື່ອກວດກາເບິ່ງຄວາມຖືກຕ້ອງ, ຊຶ່ງຖ້າຫາກຜົນການຕິດຕາມກວດກາອອກມາໃນທາງບວກແຜນການດັ່ງກ່າວກໍ່ຈະບໍ່ຖືກດັດແປງແກ້ໄຂແຕ່ຖ້າຫາກບໍ່ຖືກຕ້ອງ ກັບແຜນການດັ່ງກ່າວ ແມ່ນຈະຕ້ອງໄດ້ຖືກພິຈາລາຄືນ ແລະ ດັດແປງເພື່ອໃຫ້ອີງການ ຈັດຕັ້ງດັ່ງກ່າວນີ້ສາມາດເຄື່ອນໄຫວໄດ້ດີໃນໄລຍະທຳອິດ ຂອງການດຳເນີນການກວດກາ ແມ່ນຍັງຕ້ອງການຄວາມຊ່ວຍ ເຫລືອທັງທາງດ້ານວິຊາການ, ງົບປະມານຈາກພາກສ່ວນກ່ຽວຂ້ອງເຊັ່ນ: ແຂວງ , ເມືອງ, ກຸ່ມບ້ານຕະຫລອດຮອດໂຄງການທີ່ກ່ຽວຂ້ອງ.

# ເອກະສານອ້າງອີງ


1. ກົດໝາຍວ່າດ້ວຍທີ່ດິນ, ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019
2. ກົດໝາຍວ່າດ້ວຍທາງຫຼວງ ເລກທີ 04/99ສພຊ, ລົງວັນທີ 3 ເມສາ 1999
3. ກົດໝາຍ ວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ ສະບັບປັບປຸງ, ເລກທີ 23/ສພຊ, ລົງວັນທີ 11 ພຶດ ສະພາ 2017, 2020 ແລະ 2022
4. ກົດໝາຍວ່າດ້ວຍປ່າໄມ້, ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019
5. ດຳລັດວ່າດ້ວຍປ່າສະຫງວນ, ສະບັບເລກທີ 219/ລບ, ລົງວັນທີ 20 ມິຖຸນາ 2023.
6. ດຳລັດວ່າດ້ວຍ ທີ່ດິນບໍລິເວນນໍ້າ ສະບັບເລກທີ 350/ລບ, ລົງວັນທີ 13 ພະຈິກ 2023
7. ແຈ້ງການຂອງກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ 1585/ພບ.ຫກ,ລົງວັນທີ 12 ມັງກອນ 2018
8. ຄູ່ມືແນະນຳກ່ຽວກັບສ້າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ, ສະບັບເລກທີ 2191/ກຊສ.ກທດ, ລົງວັນທີ 12 ພຶດສະພາ 2022

ຈັດຕັ້ງປະຕິບັດໂດຍ:

ສະໜັບສະໜູນໂດຍ:

ໂຄງການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານ
ລະບົບນິເວດໃນອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ

The Intergrated Water Resource Management and Ecosystem-based Adaptation
in the Xe Bang Hieng River Basin and Luang Prabang City Project

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ

## "ບ້ານນາຈານໃຫຍ່" ເມືອງຊົນນະບູລີ ແຂວງສະຫວັນນະເຂດ




ຕາຕະລາງເນື້ອທີ່ ຈັດສັນການນຳໃຊ້ທີ່ດິນ

| ລ/ດ | ປະເພດທີ່ດິນ | ລະຫັດ | ສີ | ເນື້ອທີ່ ເຮັກຕາ | ເປີເຊັນ % |
|---|---|---|---|---|---|
| I | ທີ່ດິນກະສິກຳ | AZ | | 456.30 | 18.42 |
| 1 | ນາ | AZ 1 | | 433.54 | 17.51 |
| | ນາສາມາດເຮັດຊົນລະປະທານ | AZ 1 | | 16.86 | 0.68 |
| 2 | ໜອງປາ | AZ 6 | | 5.90 | 0.24 |
| II | ທີ່ດິນປຸກສ້າງ | BZ | | 33.69 | 1.36 |
| 1 | ດິນປຸກສ້າງບຸກຄົນ | BZ_1 | | 14.20 | 0.57 |
| 2 | ໂຮງຮຽນ | BZ_2 | | 0.52 | 0.02 |
| 3 | ທີ່ດິນແຜນຂະຫຍາຍປຸກສ້າງ | BZ_3 | | 18.98 | 0.77 |
| III | ທີ່ດິນວັດທະນະທຳ | CZ | | 31.86 | 1.29 |
| 1 | ປ່າມະເຫສັກ | CZ_2 | | 19.76 | 0.80 |
| | ປ່າຊ້າ | CZ_2 | | 12.10 | 0.49 |
| IV | ທີ່ດິນປ່າໄມ້ | F | | 1716.44 | 69.31 |
| 1 | ປ່າຊົມໃຊ້ | F_1 | | 863.31 | 34.86 |
| 2 | ປ່າສະຫງວນ ດົງສະມັນ | F_2 | | 247.52 | 9.99 |
| | ເຂດຫວງຫ້າມເດັດຂາດ | F_2 | | 368.73 | 0.47 |
| 3 | ປ່າປ້ອງແຄມເຊບັ້ງຫຽງ | F_3 | | 236.88 | 0.04 |
| V | ທີ່ດິນໂຍທາທິການ ແລະ ຂົນສົ່ງ | R | | 11.67 | 0.47 |
| 1 | ທາງດິນແດງ | R_2 | | 10.79 | 0.44 |
| | ເສັ້ນທາງຈະຕັດໃໝ່ | R_2 | | 0.88 | 0.04 |
| VI | ທີ່ດິນອ່າງເກັບນ້ຳ | W | | 226.66 | 9.15 |
| 1 | ຫ້ວຍ | W 1 | | 10.03 | 0.40 |
| | ເຊບັ້ງຫຽງ | W 1 | | 126.07 | 5.09 |
| 2 | ເຂດຮັກສາຕານ້ຳອອກບໍ່ | W 2 | | 7.02 | 0.28 |
| 3 | ໜອງຊັບນ້ຳ | W 3 | | 21.35 | 0.86 |
| 4 | ເຂດສະຫງວນແຄມເຊບັ້ງຫຽງ | W 4 | | 62.18 | 2.51 |
| | ລວມເນື້ອທີ່ | | | 2476.62 | 100.00 |
| | ລວງຮອບທັງໝົດ | | | 26.53 Km | |

ກະກຽມໂດຍ:

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງຊົນນະບູລີ

ກັນຍາ 2025

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ
ເຈົ້າເມືອງ ຊົນນະບູລີ

ເລກທີ.516....../ຊບລ
ເມືອງຊົນນະບູລີ, ວັນທີ.2..10...2025

# ຂໍ້ຕົກລົງ
## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້
## ແຜນຈັດສັນການນຳໃຊ້ທີ່ດິນບ້ານ ນາຈານໃຫ່ຍ, ເມືອງຊົນນະບູລີ, ແຂວງສະຫວັນນະເຂດ

- ອີງຕາມ ກົດໝາຍ ວ່າດ້ວຍ ປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກທີ IV ໝວດທີ 4, ມາດຕາ 40 ຂໍ້ທີ 7;
- ອີງຕາມ ກົດໝາຍ ວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານນາຈານໃຫ່ຍ, ເມືອງຊົນນະບູລີ, ແຂວງສະຫວັນນະເຂດ ສະບັບເດືອນ ກັນຍາ 2025;
- ອີງຕາມ ໜັງສືສະເໜີ ຂອງ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງຊົນນະບູລີ, ສະບັບເລກທີ 188 /ຫຊສ.ຊບລ, ວັນທີ 30 ກັນຍາ 2025.

### ເຈົ້າເມືອງຊົນນະບູລີ ຕົກລົງ:

ມາດຕາ 1 ຮັບຮອງ ແລະ ປະກາດໃຊ້ ແຜນຈັດສັນການນຳໃຊ້ທີ່ດິນ ຂອງ ບ້ານນາຈານໃຫ່ຍ, ເມືອງຊົນນະບູລີ, ແຂວງສະຫວັນນະເຂດ ສະບັບເດືອນ ກັນຍາ 2025.

ມາດຕາ 2 ມອບໃຫ້ຫ້ອງການທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຊີ້ນຳການຈັດຕັ້ງປະຕິບັດໄປຕາມແຜນທີ່ກຳນົດໄວ້ ແລະ ແຜນສະບັບນີ້ເປັນນິຕິກຳຄຸ້ມຄອງເພື່ອຮັບປະກັນສິດໃນການນຳໃຊ້ໃນອານາຄົດ.

ມາດຕາ 3 ອົງການປົກຄອງບ້ານ, ກຸ່ມບ້ານ ແລະ ປະຊາຊົນບັນດາເຜົ່າຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ, ການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ແຜນການດັ່ງກ່າວໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ມີຄວາມຮັບປະ ກັນ ທາງດ້ານການປົກປັກຮັກສາສະພາບແວດລ້ອມ, ລະບົບນິເວດກະສິກຳ ແລະ ປ່າໄມ້, ທຸກການປ່ຽນ ແປງ ຫຼື ການຫັນປ່ຽນປະເພດການນຳໃຊ້ທີ່ດິນຈະຕ້ອງໄດ້ຜ່ານການພິຈາລະນາ ແລະ ອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງຕາມລະບຽບກົດໝາຍກຳນົດ.

ມາດຕາ 4 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮຕ. ເຈົ້າເມືອງຊົນນະບູລີ

ແຂວງສະຫວັນນະເຂດ
ເຈົ້າເມືອງ ເມືອງຊົນນະບູລີ

ສຸບິນ ຫຼວງດ້ວງ
Soubinh LUANGDUANG

# ຄຳນຳ

ເພື່ອຈັດຕັ້ງຜັນຂະຫຍາຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທີ່ດິນສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019, ມະຕິຂອງ ສະພາແຫ່ງຊາດ ເລກທີ 098/ສພຊ, ລົງວັນທີ 28 ມິຖຸນາ 2018 ວ່າດ້ວຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030. ພ້ອມທັງເປັນການຈັດຕັ້ງປະຕິບັດຄູ່ມືແນະນຳກ່ຽວກັບການສ້າງແຜນຈັດສັນທີ່ດິນຂັ້ນບ້ານ ສະບັບປີ 2022 ແລະ ເປັນບ່ອນອີງໃນການຄຸ້ມຄອງ ແລະ ຕິດ ຕາມກວດກາ ວຽກງານຈັດສັນທີ່ດິນຂັ້ນບ້ານໃຫ້ມີປະສິດທິພາບ, ປະສິດທິຜົນ ແນໃສ່ຄຸ້ມຄອງ, ປົກປັກຮັກສາ, ພັດທະ ນາ ແລະ ນຳໃຊ້ທີ່ດິນ ລວມທັງປົກປັກຮັກສາສິ່ງແວດລ້ອມ, ພ້ອມທັງເຮັດໃຫ້ທີ່ດິນມີມູນຄ່າ ເພີ່ມຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ.

ແຜນຈັດສັນການນຳໃຊ້ທີ່ດິນ ສະບັບນີ້ ຈະເປັນເອກະພສານພື້ນຖານສຳຄັນ ປະກອບດ້ວຍ 8 ພາກ ແລະ ສ້າງຂຶ້ນບົນພື້ນຖານຄວາມຮຽກຮ້ອງຕ້ອງການທາງດ້ານວິຊາການໃນການສ້າງແຜນທີ່ການນຳໃຊ້ທີ່ດິນຂັ້ນບ້ານຂຶ້ນ ຊຶ່ງໃນນັ້ນລວມມີ ຫຼັກການ, ວິທີການທີ່ຈຳເປັນ ຊຶ່ງມີບາດກ້າວ ແລະ ຂັ້ນຕອນໃນການສຳຫຼວດ, ການຈັດແບ່ງເຂດທີ່ດິນ, ການຈັດປະເພດທີ່ດິນໃນພາກປະຕິບັດຕົວຈິງ ແລະ ໃຫ້ຖືກຕ້ອງຕາມເນື້ອໃນຂອງກົດໝາຍ, ດຳລັດ ແລະ ລະບຽບການ ຕ່າງໆ ທີ່ພົວພັນກັບວຽກງານດັ່ງກ່າວນີ້ ໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ມີປະສິດທິຜົນສູງ ຂຶ້ນເລື້ອຍໆ. ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ ຈະມີການທົບທວນ ແລະ ປັບປຸງແຕ່ລະໄລຍະ ເພື່ອລາຍງານສະພາບບັນຫາຂອງການນຳໃຊ້ທີ່ດິນໃນປະຈຸບັນ ແລະ ທ່າອ່ຽງໃນອານາຄົດໃຫ້ສັງຄົມ ແລະ ພາກສ່ວນກ່ຽວຂ້ອງຮັບຮູ້ໂດຍຮວບຮວມເອົາຜົນການສຳຫຼວດ, ເກັບກຳຂໍ້ມູນການນຳໃຊ້ທີ່ດິນ ແລະ ສັງລວມເອົາບົດລາຍງານຕ່າງໆຂອງພາກສ່ວນທີ່ກ່ຽວຂ້ອງ.

ຕາງໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ ແຂວງສະຫວັນນະເຂດ ຂໍສະແດງຄວາມຂອບໃຈເປັນຢ່າງຍິ່ງມາຍັງຄະນະຮັບຜິດຊອບ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ສຸມເຫື່ອແຮງ, ສະຕິປັນຍາ ແລະ ຄວາມເປັນເຈົ້າການປະກອບສ່ວນໃນການແບ່ງປັນຄວາມຮູ້ ແລະ ຂໍ້ມູນຂ່າວສານໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນ ສະບັບນີ້. ພິເສດຂໍສະແດງຄວາມຂອບໃຈ ມາຍັງ ກົມຊັບພະຍາກອນນ້ຳ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ອົງການປົກຄອງເມືອງຊົນນະບູລີ ພາຍໃຕ້ ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບເວດ (IWRM-EbA Project) ທີ່ໄດ້ຮັບການສະໜັບສະໜູນຈາກ ກອງທຶນສິ່ງແວດລ້ອມໂລກ (GEF) ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ທີ່ໄດ້ປະກອບສ່ວນດ້ານວິຊາການ ແລະ ທຶນຮອນເຂົ້າໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນສະບັບນີ້ ແລະ ຫວັງຢ່າງຍິ່ງວ່າບັນດາທ່ານຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດແຜນດັ່ງກ່າວນີ້ໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ.

ທີ່ ເມືອງຊົນນະບູລີ, ວັນທີ 29 ກັນຍາ2025

**ຫົວໜ້າຫ້ອງການ**

ພູດິງ ວົງດາຣາສິນ

# ສັງລວມຫຍໍ້

ບ້ານ ນາຈານໃຫ່ຍ ຕັ້ງຫ່າງຈາກເທດສະບານເມືອງ ຊົນນະບູລີ ໄປທາງທາງທິດຕາເວັນອອກສ່ຽງໃຕ້ຂອງເມືອງ, ມີໄລຍະທາງແຕ່ປະມານ 65 ກິໂລແມັດ, ມີລະດັບຄວາມສູງ ສະເລ່ຍ 169 ແມັດ ທຽບໃສ່ລະດັບນໍ້າທະເລ, ສະພາບພູມສັນຖານເປັນເຂດທົ່ງພຽງໂນນສະຫຼັບພື້ນທີ່ຮາບພຽງໃນການປຸກສ້າງທີ່ຢູ່ອາໃສຂອງປະຊາຊົນສະພາບອາກາດຮ້ອນຊຸ່ມ, ມີເນື້ອທີ່ທັງໝົດ ມີ 2,476.62 ເຮັກຕາ ມີເຊິ່ງມີເຂດແດນຕິດຈອດກັບບັນດາບ້ານຂອງເມືອງຊົນນະບູລີ ແລະ ບັນດາບ້ານຂອງເມືອງໃກ້ຄຽງ ຄື: ທິດເໜືອ ຕິດກັບ ບ້ານກະລຶມ-ວັງແຂ້ ແລະ ບ້ານກະທອງເຊ ເມືອງຊົນນະບູລີ, ທິດໃຕ້ ຕິດກັບ ບ້ານນາທະມານ, ເມືອງທ່າປາງທອງ, ທິດຕາເວັນອອກ ຕິດກັ ບ້ານນາລະແອນ, ເມືອງຊົນນະບູລີ ແລະ ບ້ານແກ້ງສັງກູ, ເມືອງທ່າປາງທອງ ແຂວງສະຫວັນນະເຂດ ແລະ ທິດຕາເວັນຕົກ ຕິດກັບ ບ້ານຕັ່ງຫວາຍນໍ້າ, ເມືອງຊົນນະບູລີ

ບ້ານ ນາຈານໃຫ່ຍ ມີພົນລະເມືອງທັງໝົດ 1,077 ຄົນ, ຍິງ 537 ຄົນ, ມີ 172 ຫລັງຄາເຮືອນ,ມີ 146 ຄອບຄົວ. ເປັນບ້ານຊົນເຜົ່າ ບຣູ ມີຮີດຄອງປະເພນີ ແລະ ການນັບຖື ຜີ (ຜີສະວີ), ມີບຸນປະເພນີຄື: ລະບຶມ. ຊາວບ້ານປະກອບອາຊີບກະສິກຳເປັນຕົ້ນຕໍຄື: ແມ່ນຍຶດຖືເອົາການເຮັດນາ, ປູກພືດ ແລະ ສຳຣອງລ້ຽງມາແມ່ນລ້ຽງສັດ ແລະ ອື່ນໆ. ແຫຼ່ງລາຍຮັບຕົ້ນຕໍຂອງປະຊາຊົນພາຍໃນບ້ານແມ່ນມາຈາກ 2 ແຫຼ່ງລາຍຮັບຕົ້ນຕໍຄື: ມາຈາກການເຮັດນາ ແລະ ສຳຮອງລ້ຽງມາແມ່ນມາຈາກການຫາເຄື່ອງປ່າຂອງດົງ ແລະ ອື່ນໆ.

ແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານ ບ້ານນາຈານໃຫ່ຍ ປະກອບມີ 6 ປະເພດການນໍາໃຊ້ຫຼັກ ຊື່ງປະກອບມີດັ່ງນີ້: ເຂດທີ່ດິນກະສິກຳ ມີປະມານ 456.30 ເຮັກຕາ ກວມເອົາ 18.42% (ໃນນີ້ ນາ, ນາສາມາດເຮັດຊົນລະປະທານ ແລະ ໜອງປາ), ເຂດດິນປຸກສ້າງ ມີເນື້ອທີ່ 33.69 ເຮັກຕາ ກວມເອົາ 1.36% (ໃນນີ້, ມີດິນປຸກສ້າງບຸກຄົນ, ໂຮງຮຽນ, ດິນແຮ່ຂະຫຍາຍປຸກສ້າງ), ທີ່ດິນວັດທະນະທຳ ມີເນື້ອທີ່ 31.86 ເຮັກຕາ ກວມເອົາ 0.92% (ໃນນີ້, ປ່າມະເຫສັກ, ແລະ ປ່າຊ້າ), ເຂດດິນປ່າໄມ້ ມີເນື້ອທີ່ 1,716.44 ເຮັກຕາ ກວມເອົາ 69.31% (ໃນນີ້ມີ ປ່າຊົມໃຊ້, ປ່າສະຫງວນດົງສະມັນ, ເຂດຫວງຫ້າມເດັດຂາດ ແລະ ປ່າແຄມເຊບັ້ງຫຽງ), ທີ່ດິນໂຍທາທິການ ແລະ ຂົນສົ່ງ ມີເນື້ອທີ່ 11.67 ເຮັກຕາ. ກວມເອົາ 0.74% (ໃນນີ້, ເສັ້ນທາງດິນແດງ ແລະ ເສັ້ນທາງຈະຕັດໃໝ່) ແລະ ທີ່ດິນບໍລິເວນນໍ້າ ມີເນື້ອທີ່ 216.66 ເຮັກຕາ ກວມເອົາ 9.15% (ໃນນີ້, ຫ້ວຍ, ນໍ້າເຊບັ້ງຫຽງ, ເຂດຮັກສາຕານໍ້າອອກບໍ່, ໜອງຮັບນໍ້າ ແລະ ເຂດສະຫງວນແຄມເຊບັ້ງຫຽງ).

ພາຍຫຼັງຖືກຮັບຮອງ ແລະ ປະກາດນໍາໃຊ້ແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານດັ່ງກ່າວ ຈະໄດ້ລິ່ເລີ່ມວຽກການຕິດຕາມ-ກວດກາ ຄວາມຖືກຕ້ອງເໝາະສົມຕາມແຜນຈັດສັນທີ່ວາງໄວ້. ເຊິ່ງພາກສ່ວນຮັບຜິດຊອບຫຼັກແມ່ນຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ຮ່ວມກັບຄະນະກຳມະການອະນຸລັກຂັ້ນບ້ານ ເຊິ່ງຈະໄດ້ມີແບບແຜນໃນການເຄື່ອນໄຫວກວດກາ ແລະ ລາດຕະເວນໃນເຂດເປົ້າໝາຍ ຫຼື ພື້ນທີ່ມີຄວາມສຳຄັນໃນວຽກງານອະນຸລັກ ເຊັ່ນ: ເຂດວັງສະຫງວນສັດນໍ້າ, ເຂດປ່າໄມ້ຫວງຫ້າມເດັດຂາດ ແລະ ເຂດອື່ນໆທີ່ມີການຕິດຕັ້ງຫຼັກໝາຍບອກຂອບເຂດຫວງຫ້າມ. ນອກຈາກນັ້ນ, ຍັງກວມລວມໄປເຖິງການກວດກາການນໍາໃຊ້ເຄື່ອງມືແບບດັບສູນໃນການຫາ ການລ່າສັດນໍ້າ - ສັດປ່າ ແລະ ການກະທຳທີ່ເປັນການສູນເສຍຕໍ່ສະພາບແວດລ້ອມຫຼາຍເກີນໄປ ເປັນຕົ້ນ.

# ສາລະບານ

ຄໍານໍາ.......................................................................................................i
ສັງລວມຫຍໍ້..................................................................................................ii
I. ຈຸດປະສົງ ແລະ ລະດັບຄາດໝາຍ ...........................................................................1
1.1 ຈຸດປະສົງ .................................................................................................1
1.2 ລະດັບຄາດໝາຍ..........................................................................................1
1.3 ຂັ້ນຕອນໃນການຈັດຕັ້ງປະຕິບັດ .......................................................................2
1.4 ວິທີການໃນການຈັດຕັ້ງປະຕິບັດ ລວມທັງການນໍາໃຊ້ Program ຕ່າງໆເຂົ້າຊ່ວຍ. ..............................2
II. ສະພາບລວມຂອງບ້ານ...................................................................................3
2.1 ປະຫວັດຄວາມເປັນມາຂອງບ້ານ ........................................................................3
2.2 ທີ່ຕັ້ງພູມສັນຖານ.........................................................................................3
2.3 ດ້ານການປົກຄອງ.........................................................................................3
2.4 ດ້ານເສດຖະກິດ-ສັງຄົມ...................................................................................3
2.5 ດ້ານວັດທະນະທໍາ ແລະ ຮີດຄອງປະເພນີ ..............................................................4
III. ສະພາບການນໍາໃຊ້ທີ່ດິນປະຈຸບັນ ......................................................................4
3.1 ການກໍານົດຈຸດທີ່ຕັ້ງຂອງບ້ານ..........................................................................4
3.2 ເຂດຄຸ້ມຄອງຂອງບ້ານນາຈານໃຫຍ່....................................................................4
3.3 ການນໍາໃຊ້ທີ່ດິນໃນປະຈຸບັນຂອງບ້ານ ................................................................7
IV. ການຈັດສັນການນໍາໃຊ້ທີ່ດິນ ...........................................................................8
4.1 ການກໍານົດເຂດທີ່ດິນຂອງບ້ານ ນາຈານໃຫຍ່ ..........................................................8
4.1.1 ເຂດທີ່ດິນອະນຸລັກ.................................................................................8
4.1.2 ເຂດທີ່ດິນນໍາໃຊ້ນໍາ................................................................................8
4.1.3 ຄວາມຮັບຮູ້ໂດຍລວມໃນການສໍາຫຼວດຈັດສັນທີ່ດິນ ................................................9
4.2 ການກໍານົດປະເພດທີ່ດິນຂອງບ້ານ ...................................................................10
V. ທ່າແຮງໃນການພັດທະນາທີ່ດິນ.........................................................................13
5.1 ທ່າແຮງໃນການພັດທະນາທີ່ດິນຂອງບ້ານ.............................................................13
5.2 ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານນາຈານໃຫຍ່..............................13
VI. ລະບຽບການຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນໍາໃຊ້ທີ່ດິນ ..................................13
6.1 ການຄຸ້ມຄອງ ທີ່ດິນກະສິກໍາ ..........................................................................13
6.2 ການຄຸ້ມຄອງທີ່ດິນປຸກສ້າງ ...........................................................................14
6.3 ການຄຸ້ມຄອງ ທີ່ດິນວັດທະນາທໍາ.....................................................................14
6.4 ການຄຸ້ມຄອງ ທີ່ດິນປ່າໄມ້.............................................................................14
6.5 ການຄຸ້ມຄອງ ທີ່ດິນໂຍທາທິການ ແລະ ຂົນສົ່ງ.........................................................14
6.6 ການຄຸ້ມຄອງ ທີ່ດິນບໍລິເວນນໍ້າ........................................................................14
VII. ການຫັນປ່ຽນປະເພດທີ່ດິນ ............................................................................15
VIII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ.............................................................15
8.1. ການຈັດຕັ້ງ.............................................................................................15

8.2. ບຸກຄະລາກອນ ..... 15
8.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ..... 15
8.4. ຂອບເຂດສິດ ..... 16
8.5. ລະບອບແບບແຜນວິທີເຮັດວຽກ ..... 16
8.6. ການຕິດຕາມກວດກາ ..... 16
ເອກະສານອ້າງອີງ ..... 17

# ສາລະບານຕາຕະລາງ


ຕາຕະລາງທີ 1 ສະແດງດ້ານສາດສະໜາ ........ 4
ຕາຕະລາງທີ 2 ຄ່າພິກັດບ້ານກະລຶມ-ວັງແຂ້ ແລະ ບ້ານກະທອງເຊ ເມືອງຊົນນະບູລີ, ແຂວງສະຫວັນນະເຂດ ...... 4
ຕາຕະລາງທີ 3 ຄ່າພິກັດບ້ານນາທະມານ, ເມືອງທ່າປາງທອງ, ແຂວງສະຫວັນນເຂດ ........ 4
ຕາຕະລາງທີ 4 ຄ່າພິກັດບ້ານນາລະແອນ ເມືອງຊົນນະບູລີ ແລະ ບ້ານແກ້ງສັງກູ ເມືອງທ່າປາງທອງ ແຂວງສະຫວັນນະເຂດ ........ 5
ຕາຕະລາງທີ 5 ຄ່າພິກັດບ້ານຕັ່ງຫວາຍນ້ຳ ເມືອງຊົນນະບູລີ ແຂວງ ສະຫວັນນະເຂດ ........ 5
ຕາຕະລາງທີ 6 ຄ່າພິກັດບ້ານບ້ານໜອງແຂ້ ເມືອງຊົນນະບູລີ ແຂວງສະຫວັນນເຂດ ........ 5
ຕາຕະລາງທີ 7 ສັງລວມປະເພດການນຳໃຊ້ທີ່ດິນປະຈຸບັນ ບ້ານນາຈານໃຫ່ຍ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ ........ 7
ຕາຕະລາງທີ 8 ສັງລວມປະເພດການຈັດສັນທີ່ດິນບ້ານເມືອງໂຮງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ ...... 11
ຕາຕະລາງທີ 9 ສົມທຽບລະຫວ່າງເນື້ອທີ່ການນຳໃຊ້ດິນປະຈຸບັນ ແລະ ເນື້ອທີ່ການຈັດສັນທີ່ດິນ ........ 13

# ສາລະບານຮູບພາບ

ຮູບທີ 1 ແຜນທີ່ຂອບເຂດຄຸ້ມຄອງບ້ານນາຈານໃຫ່ຍ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ........................6
ຮູບທີ 2 ແຜນທີ່ການນຳໃຊ້ທີ່ດິນປະຈຸບັນ ບ້ານນາຈານໃຫ່ຍ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ...............8
ຮູບທີ 3 ແຜນທີ່ຈັດສັນການນຳໃຊ້ທີ່ດິນ ບ້ານນາຈານໃຫ່ຍ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ..............12

## I. ຈຸດປະສົງ ແລະ ລະດັບຄາດໝາຍ

### 1.1 ຈຸດປະສົງ

- ຈຸດປະສົງຂອງການສຳຫຼວດວາງແຜນຈັດສັນ ແລະ ການນຳໃຊ້ທີ່ດິນ ແມ່ນປັດໃຈຫຼັກທີ່ສຳຄັນໃນລະບົບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ທັງນີ້ກໍ່ເພື່ອເຮັດໃຫ້ການວາງແຜນຈັດສັນ ແລະ ການວາງແຜນການນຳໃຊ້ທີ່ດິນໃຫ້ມີການປະສົມປະສານຢ່າງກົມກຽວໂດຍພື້ນຖານກັບສະພາບຂອງພື້ນທີ່ໃນແຕ່ລະບ່ອນ ແລະ ໃຫ້ມີຄວາມດຸ່ນດ່ຽງຂອງຊັບພະຍາກອນທຳມະຊາດ, ພ້ອມດຽວກັນກໍ່ຕ້ອງໃຫ້ສອດຄ່ອງກັບທິດທາງແຜນການພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະເຂດ;
- ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາທີດິນ ແລະ ຊັບພະຍາກອນທຳມະຊາດອື່ນໆໃຫ້ມີຄວາມຍືນຍົງໂດຍຕິດພັນກັບການພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ເພື່ອກຳນົດພື້ນທີ່, ເຂດທີ່ເປັນທ່າແຮງກ່ຽວກັບເປົ້າໝາຍໃນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດອື່ນໆ ແນໃສ່ເຮັດໃຫ້ທີດິນໄດ້ຮັບການພັດທະນາແບບຍືນຍົງ, ເຮັດໃຫ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດສາມາດນຳຜົນປະໂຫຍດສູງສຸດ;
- ເພື່ອຫລຸດຜ່ອນການຈັບຈອງທີ່ດິນ, ການບຸກລຸກທີດິນ ແລະ ປ່າໄມ້ແບບຊະຊາຍ, ການສວຍໂອກາດໂອນເອົາທີ່ດິນຂອງລັດມາເປັນທີ່ດິນສ່ວນບຸກຄົນ ແລະ ການອະນຸຍາດໃຫ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດທີ່ມີເນື້ອທີ່ກ້ວາງຂວາງ ແລະ ຍາວນານ;
- ເພື່ອຈັດສັນ,ຈັດແບ່ງເຂດ,ຈັດແບ່ງປະເພດທີ່ດິນ ແລະ ສ້າງແຜນທີ່ນຳໃຊ້ທີ່ດິນແຕ່ລະທ້ອງຖິ່ນ, ໃນຂອບເຂດທົ່ວປະເທດ ແລ້ວນຳສະເໜີໄປຕາມແຕ່ລະຂັ້ນເພື່ອຮັບຮອງເອົາ.

### 1.2 ລະດັບຄາດໝາຍ

- ເຮັດໃຫ້ມີການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດອື່ນໆ ໃຫ້ມີລະບຽບຫຼັກການຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ;
- ສ້າງເປັນແຜນທີ່ກຳນົດຂອບເຂດ ແລະ ປະເພດທີ່ດິນໃນແຕ່ລະທ້ອງຖິ່ນ, ເຂດແຄ້ວນ ແລະ ແຫ່ງຊາດຕາມຫຼັກວິຊາການ ແລະ ລະບຽບກົດໝາຍຊຶ່ງມີຄວາມເປັນເອກະພາບກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນໂດຍອີງຕາມຈຸດພິເສດ, ທ່າແຮງ ແລະ ເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ;
- ເຮັດໃຫ້ບັນດາຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຮັບຮູ້ໄດ້ ແລະ ເຂົ້າໃຈບັນຫາຕ່າງໆເພື່ອວາງແຜນໃນການຄຸ້ມຄອງປົກປັກຮັກສາ, ພັດທະນາທີ່ດິນ ແລະ ຊັບພະຍາກອນທຳມະຊາດຢ່າງຖືກຕ້ອງ ແລະ ມີປະສິດທິຜົນຕາມເປົ້າໝາຍ ແລະ ລະບຽບກົດໝາຍທີ່ວາງອອກ;
- ຈັດຕັ້ງປະຕິບັດບັນດາລະບຽບກົດໝາຍຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢ່າງມີປະສິດທິຜົນ;
- ເສີມຂະຫຍາຍຄວາມເປັນເຈົ້າການຂອງປະຊາຊົນບັນດາເຜົ່າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ ເຂົ້າໃນການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດ-ສັງຄົມໃຫ້ດີຂຶ້ນເປັນກ້າວໆ.

ເພື່ອບັນລຸຕາມຈຸດປະສົງ ແລະ ທິດທາງຍຸດທະສາດທີ່ໄດ້ກ່າວມາຂ້າງເທິງນັ້ນໃນການຈັດຕັ້ງປະຕິບັດແມ່ນໃຫ້ທຸກໆພາກສ່ວນ ແລະ ຂະແໜງການທີ່ກ່ຽວຂ້ອງແຕ່ສູນກາງລົງຮອດທ້ອງຖິ່ນໃຫ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງຢ່າງຮອບດ້ານ ໃຫ້ອົງການຄຸ້ມຄອງທີ່ດິນເຊັ່ນວ່າ: ປັບປຸງກົງຈັກການຈັດຕັ້ງ, ປະກອບບຸກຄະລະກອນ, ສະໜອງງົບປະມານ ແລະ ພາຫະນະອຸປະກອນຮັບໃຊ້ຕ່າງໆ ເພື່ອໃຫ້ຈັດຕັ້ງປະຕິບັດວຽກງານການສຳຫຼວດຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນ, ສ້າງແຜນທີ່ນຳໃຊ້ທີ່ດິນ ແລະ ວາງແຜນຄຸ້ມຄອງປົກປັກຮັກສາ, ນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດຢູ່ໃນແຕ່ລະທ້ອງຖິ່ນໄດ້.

### 1.3 ຂັ້ນຕອນໃນການຈັດຕັ້ງປະຕິບັດ

- ຂັ້ນຕອນທີ 1: ກະກຽມສ້າງແຜນການ, ແຜນງານ, ແຜນຄົນ, ແຜນງົບປະມານ ແລະ ແຜນດຳເນີນງານໂຄງການສຳຫຼວດຈັດສັນທີ່ດິນ;
- ຂັ້ນຕອນທີ 2: ກະກຽມສ້າງຕັ້ງຄະນະຊີ້ນຳ, ຄະນະຮັບຜິດຊອບ ແລະ ຄະນະທີມງານວິຊາການຈາກພາກສ່ວນ/ຂະແໜງການທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນທີ່ມີຄວາມຈຳເປັນ;
- ຂັ້ນຕອນທີ 3: ກະກຽມເອກະສານເພື່ອຂໍອະນຸມັດຈາກທ່ານເຈົ້າເມືອງ ເພື່ອຈັດຕັ້ງປະຕິບັດແຜນໂຄງການຕາມແຜນການ, ແຜນດຳເນີນງານໂຄງການທີ່ໄດ້ກຳນົດໄວ້;
- ຂັ້ນຕອນທີ 4: ກະກຽມເອກະສານຂໍ້ຕົກລົງແຕ່ງຕັ້ງຄະນະທີມງານວິຊາການ ເພື່ອຂໍອະນຸມັດໃຫ້ຂັ້ນເທິງພິຈາລະນາຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບ ແລະ ຄະນະທີມງານວິຊາການ;
- ຂັ້ນຕອນທີ 5: ກະກຽມບັນດາເອກະສານຕ່າງໆ ທີ່ກ່ຽວພັນກັບທີ່ດິນເຊັ່ນ: ກົດໝາຍ, ດຳລັດ, ມະຕິ ແລະ ລະ ບຽບການຕ່າງໆທີ່ນຳໄປເຜີຍແຜ່ໃຫ້ພາກສ່ວນຂະແໜງການທີ່ກ່ຽວຂ້ອງກັບທີ່ດິນ, ບຸກຄົນ,ນິ ຕິບຸກຄົນ, ບໍລິສັດ ຕະຫຼອດເຖິງປະຊາຊົນຢູ່ໃນແຕ່ລະທ້ອງຖິ່ນເພື່ອໃຫ້ທຸກຄົນຮັບຮູ້ ແລະ ຮັບຊາບກ່ອນ ຫຼື ໄລຍະເວລາຈັດຕັ້ງປະຕິບັດໂຄງການຢູ່ໃນແຕ່ລະບ່ອນ;
- ຂັ້ນຕອນທີ 6: ກະກຽມແບບຟອມການສຳຫຼວດເກັບກຳຂໍ້ມູນການນຳໃຊ້ທີ່ດິນ ແລະ ສະພາບເສດຖະກິດ-ສັງຄົມ ຢູ່ແຕ່ລະບ້ານ ແລະ ເມືອງ;
- ຂັ້ນຕອນທີ 7: ກະກຽມແຜນດຳເນີນງານລະອຽດເພື່ອລົງສຳຫຼວດເກັບກຳຂໍ້ມູນ ໃນການນຳໃຊ້ທີ່ດິນ ແລະ ສະພາບເສດຖະກິດ-ສັງຄົມ.

### 1.4 ວິທີການໃນການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Program ຕ່າງໆເຂົ້າຊ່ວຍ.

- ຈັດກອງປະຊຸມຝຶກອົບຮົມດ້ານເຕັກນິກວິຊາການ ກ່ຽວກັບ ການຳໃຊ້ເຄື່ອງມື, ອຸປະກອນ ແລະ ໂປແກຼມຕ່າງໆ ພ້ອມດຽວກັນນັ້ນກໍ່ປຶກສາຫາລືກ່ຽວກັບແຜນວຽກແຜນຄົນ ແລະ ຄັດເລືອກກຸ່ມບ້ານເປົ້າໝາຍ;
- ແຈ້ງການໃຫ້ອຳນາດການປົກຄອງບ້ານ-ກຸ່ມບ້ານ ໃຫ້ຮັບຊາບລ່ວງໜ້າກ່ອນເພື່ອກະກຽມບັນດາເອກະ ສານ, ຂໍ້ມູນເສດຖະກິດ-ສັງຄົມ ແລະຂໍ້ມູນໃນການກຳນົດເຂດຄຸ້ມຄອງຂອງບ້ານໃນໄລຍະຜ່ານມາ;
- ເປີດກອງປະຊຸມຂັ້ນບ້ານ-ກຸ່ມບ້ານ ເພື່ອແຈ້ງຈຸດປະສົງ ການຈັດຕັ້ງປະຕິບັດວຽກງານຕໍ່ບ້ານເປົ້າໝາຍ;
- ເຊີນບັນດາອຳນາດການປົກຄອງບ້ານອ້ອມຂ້າງເຂົ້າຮ່ວມ ເພື່ອປຶກສາຫາລືກ່ຽວກັບກຳນົດເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ ແລ້ວສ້າງບົດບັນທຶກຮ່ວມກັນ;
- ລົງສຳຫຼວດເຂດຄຸ້ມຄອງຂອງບ້ານ ແລະ ປະເພດທີ່ດິນຕ່າງໆ ພ້ອມທັງເກັບກຳຂໍ້ມູນເສດຖະກິດ-ສັງຄົມ, ຂໍ້ມູນການນຳໃຊ້ຕອນດິນຂອງປະຊາຊົນພາຍໃນບ້ານ;
- ວິເຄາະ ແລະ ສຶກສາພູມມີປະເທດເພື່ອເປັນບ່ອນອີງໃນການກຳນົດວາງແຜນຈັດສັນການນຳໃຊ້ທີ່ດິນແຕ່ລະປະ ເພດຂອງບ້ານ;
- ສັງລວມຂໍ້ມູນພາກສະໜາມ ປ້ອນເຂົ້າໃນຄອມພິວເຕີ ແລ້ວສ້າງເປັນແຜນທີ່ ໂດຍນຳໃຊ້ລະບົບ GIS;
- ຮ່າງບົດລາຍງານ ເພື່ອສະເໜີຜ່ານແຜນຈັດສັນທີ່ດິນພ້ອມທັງກຳນົດລະບຽບ ແລະ ມາດຕະການຄຸ້ມຄອງການນຳໃຊ້ທີ່ດິນ;
- ຈັດກອງປະຊຸມສະເໜີຜ່ານແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານເພື່ອຄວາມເປັນເອກະພາບກັບຂະແໜງການ;
- ຜ່ານແຜນການຈັດສັນທີ່ດິນໃຫ້ອຳນາດການປົກຄອງຂັ້ນບ້ານ-ກຸ່ມບ້ານຮັບຮູ້ແລ້ວນຳສະເໜີຂັ້ນເມືອງຄົ້ນຄວ້າພິຈາລະນາຮັບຮອງ ແລະ ປະກາດໃຊ້ແຜນດັ່ງກ່າວຢ່າງເປັນທາງການ.

# II. ສະພາບລວມຂອງບ້ານ

## 2.1 ປະຫວັດຄວາມເປັນມາຂອງບ້ານ

ບ້ານນາຈານໃຫຍ່ ອີງຕາມການບອກເລົ່າຈາກອຳນາດການປົກຄອງບ້ານໃນເມືອກ່ອນ ຍົກຍ້າຍມາແຕ່ ບ້ານສະວີ ເມືອງນອງ ສາເຫດທີຍົກຍ້າຍມາຍ້ອນບໍ່ມີພື້ນທີ່ທຳການຜະລິດ ແລະ ມີຊ້າງເຂົ້າທຳລາຍຜົນຜະລິດ, ຈຶ່ງໄດ້ພາກັນຍົກຍ້າຍມາຕັ້ງຖິ່ນຖານຢູ່ບ້ານນາຈານໃຫຍ່ ຂຶ້ນກັບເມືອງພີ້ອງ (ຊື່ເດີມຊົນນະບູລີ) ເບື້ອງຕົ້ນມມີພຽງແຕ່ 2 ຄອບຄົວ ເຊິ່ງເຂດດັ່ງກ່າວແມ່ນຄວາມມີຄວາມອຸດົມສົມບູນໃນການຫາຢູ່ຫາກິນ ແລະ ພື້ນທີ່ກໍກວ້າງເໝາະສົມແກ່ການຜະລິດກະສິກຳ ປູກຝັງ ແລະ ລ້ຽງສັດ. ສາເຫດທີ່ໃສ່ຊື່ບ້ານນາຈານໃຫຍ່ ຍ້ອນວ່າຜູ້ຍົກຍ້າຍເບື້ອງຕົ້ນ ແມ່ນຕັ້ງເຮືອນຢູ່ແຄມໜອງຈິງໜອງຈານ ຈຶ່ງພາກັນເອີ້ນບ້ານນາຈິງນາຈານ ຫຼັງຈາກນັ້ນກໍ່ມີການຂະຫຍາຍຕົວຂຶ້ນຈຶ່ງປ່ຽນຊື່ບ້ານມາເປັນບ້ານນາຈານໃຫຍ່ ປະຈຸບັນມີ 146 ຄອບຄົວ.

## 2.2 ທີ່ຕັ້ງພູມສັນຖານ

ບ້ານນາຈານໃຫຍ່ ຕັ້ງຢູ່ທິດຕາເວັນອອກສ່ຽງໃຕ້ ຂອງເມືອງຊົນນະບູລີ, ແຂວງສະຫວັນນະເຂດ ຫ່າງຈາກເທດສະບານເມືອງປະມານ 65 ກິໂລແມັດ ແລະ ມີລະດັບຄວາມສູງທຽບໃສ່ລະດັບໜ້ານ້ຳທະເລ 169 ແມັດ. ສະພາບພູມສັນຖານເປັນເຂດຫຼຸບໂນນສະຫຼັບພື້ນທີ່ຮາບພຽງໃນການປຸກສ້າງທີ່ຢູ່ອາໃສຂອງປະຊາຊົນສະພາບອາກາດຮ້ອນຊຸ່ມ.

## 2.3 ດ້ານການປົກຄອງ

ບ້ານນາຈານໃຫຍ່ ດ້ານປະຊາກອນພາຍໃນບ້ານລວມມີປະຊາກອນທັງໝົດ 1.077 ຄົນ, ຍິງ 537 ຄົນ, ມີ 172 ຫລັງຄາເຮືອນ, ມີ 146 ຄອບຄົວ. ເປັນບ້ານຊົນເຜົ່າ ບຣູ ມີຮີດຄອງປະເພນີ ແລະ ການນັບຖື ຜີ (ຜີສະວີ), ມີບຸນປະເພນີ ຄື: ລະບຶມ.

ວຽກງານການສຶກສາທີການປະຈຸບັນໃນບ້ານມີໂຮງຮຽນປະຖົມສົມບູນ 03 ຫຼັງ (ນັບທັງອານຸບານ) ຫ້ອງຮຽນແມ່ນພຽງພໍກັບຄວາມຕ້ອງການ. ມີຈຳນວນນັກຮຽນ 112 ຄົນ, ຍິງ 58 ຄົນ, ມີຄູສອນ 4 ຄົນ, ຍິງ 3 ຄົນ ຫລັງຈາກຮຽນຈົບຊັ້ນປະຖົມ ແມ່ນໄດ້ປະສຶກສາຕໍ່ມັດທະຍົມຕົ້ນ ແລະ ມັດທະຍົມປາຍ ຢູ່ຈຸດສຸມຊະແຍະ.

ວຽກງານສາທາລະນະສຸກບ້ານແມ່ນບໍ່ມີສຸກສາລາໄປບໍລິການສຸກສາລາຈຸດສຸມຊະແຍະ. ໄລຍະທາງປະມານ 8 ກິໂລແມັດ, ປະຊາຊົນໄດ້ຊົມໃຊ້ນ້ຳບາດານ ແລະ ນ້ຳອອກບໍ່ 100% ແລະ ຊົມໃຊ້ວິດຖ່າຍ 5%. ນອກຈາກນັ້ນ, ອີງການຈັດຕັ້ງບ້ານໄດ້ລະດົມ ໃຫ້ແຕ່ລະຄອບຄົວປະຕິບັດຫລັກການອານາໄມ 3 ສະອາດ, ລຶບລ້າງການປິ່ນປົວຕາມຄວາມເຊື່ອຖືໄຊຍະສາດ ແລະ ລະດົມໃຫ້ປະຊາຊົນຫັນມາປິ່ນປົວ ໂດຍໃຊ້ຢາຫລວງ ແລະ ແບບວິທະຍາສາດ, ເດັກນ້ອຍໄດ້ຮັບການສັກຢາ, ຢອດຢາກັນພະຍາດ100%. ຜູ້ຍິງຖືພາໄດ້ຮັບການຝາກທ້ອງ ແລະ ປະຕິບັດຕາມຫລັກການແນະນຳຂອງແພດໝໍເປັນປົກກະຕິ ສືບຕໍ່ນຳເອົາບັນດາແຈ້ງການ, ນິຕິກຳຕ່າງໆ ລົງເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນໄດ້ຮັບຊາບ ໂດຍສະເພາະແມ່ນ ໂພສະນາການດ້ານສຸຂະພາບ, ການກິນ, ການຢູ່, ດ້ານພະຍາດແຜ່ລະບາດ, ຖອກທ້ອງ, ໄຂ້ຍຸງ.

## 2.4 ດ້ານເສດຖະກິດ-ສັງຄົມ

ແຫຼ່ງລາຍຮັບຕົ້ນຕໍຂອງປະຊາຊົນພາຍໃນບ້ານແມ່ນມາຈາກ 2 ແຫຼ່ງລາຍຮັບຕົ້ນຕໍຄື: ມາຈາກການເຮັດນາ ແລະ ສຳຮອງລົງມາແມ່ນມາຈາກການຫາເຄື່ອງປ່າຂອງດົງ ແລະ ອື່ນໆ ການພັດທະນາເສດຖະກິດ-ສັງຄົມແມ່ນມີການຂະ ຫຍາຍຕົວເພີ້ມຂຶ້ນສາມາດສ້າງລາຍຮັບໃຫ້ແຕ່ລະຄອບຄົບ ເພື່ອໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ ຕາມແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງມີຄອບຄົວທີ່ຫຼຸດພົ້ນອອກຈາກຄວາມທຸກຍາກ 133 ຄອບຄົວ ແລະ ຄອບຄົວທີ່ຍັງບໍ່ທັນພົ້ນທຸກມີ 02 ຄອບຄົວ.

### 2.5 ດ້ານວັດທະນະທຳ ແລະ ຮີດຄອງປະເພນີ

ປະຊາຊົນບ້ານ ນາຈານໃຫຍ່ ແມ່ນມີຄວາມສາມັກຄີຮັກແພງເຊິ່ງກັນ ແລະ ກັນທັງພາຍໃນ ແລະ ພາຍນອກ ມີວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ປະຕິບັດຕາມຮີດສິບສອງຄອງສິບສີ່ທີ່ບັນພະບູລຸດຂອງປະຊາຊົນລາວບັນດາເຜົ່າເຄີຍຈັດຕັ້ງປະຕິບັດມາເປັນຕົ້ນແມ່ນ ບຸນປີໃໝ່ລາວ ແລະ ອື່ນໆ.

ຕາຕະລາງທີ 1 ສະແດງດ້ານສາດສະໜາ

| ລ/ດ | ປະເພດຊົນເຜົ່າ | ສາດສະໜາ | ຈຳນວນຄອບຄົວ | ໝາຍເຫດ |
|---|---|---|---|---|
| 1 | ລາວລຸ່ມ | ຜີ | 146 | |
| ລວມ | | | 146 | |

## III. ສະພາບການນຳໃຊ້ທີ່ດິນປະຈຸບັນ

### 3.1 ການກຳນົດຈຸດທີ່ຕັ້ງຂອງບ້ານ

ຈຸດທີ່ຕັ້ງຊຶ່ງກຳນົດຈຸດໃຈກາງບ້ານ GPS ມີຄ່າພິກັດ: ເສັ້ນແວງທີ X = 572777 m; ເສັ້ນຂະໜານທີ Y = 1802715 m ແລະ ມີລວງຮອບທັງໝົດ = 26.53 ກິໂລແມັດ, ມີເນື້ອທີ່ທັງໝົດ = 2.477,38 ເຮັກຕາ.

### 3.2 ເຂດຄຸ້ມຄອງຂອງບ້ານນາຈານໃຫຍ່ ມີເຂດຄຸ້ມຄອງຕິດກັບ 6 ບ້ານຄື:

- ທິດເໜືອ (N) ຕິດກັບ ບ້ານກະລຶມ-ວັງແຂ້ ແລະ ບ້ານກະທອງເຊ ເມືອງຊົນນະບູລີ
- ທິດໃຕ້ (S) ຕິດກັບ ບ້ານນາທະມານ, ເມືອງທ່າປາງທອງ
- ທິດຕາເວັນອອກ (E) ຕິດກັບ ບ້ານນາລະແອນ, ເມືອງຊົນນະບູລີ ແລະ ບ້ານແກ້ງສັງກູ, ເມືອງທ່າປາງທອງ ແຂວງສະຫວັນນະເຂດ.
- ທິດຕາເວັນຕົກ (W) ຕິດກັບ ບ້ານຕັ່ງຫວາຍນ້ຳ, ເມືອງຊົນນະບູລີ

ຕາຕະລາງທີ 2 ຄ່າພິກັດບ້ານກະລຶມ-ວັງແຂ້ ແລະ ບ້ານກະທອງເຊ ເມືອງຊົນນະບູລີ, ແຂວງສະຫວັນນະເຂດ

| ຄ່າພິກັດ GPS (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| ລ/ດ | E | N | Distance (m) | ໝາຍເຫດ |
| 1 | 570277 | 1804120 | | ກຳນົດເອົາຈຸດເຊກຸມການເຊື່ອມ ຕໍ່ບ້ານກະທອງເຊ, ໜອງແຂ້ ແລະ ນາຈານໃຫຍ່ |
| 2 | 574172 | 1805691 | | ກຳນົດເອົາຈຸດເສັ້ນທາງຮ່ອມເປັນເຂດເຊື່ອມຕໍ່ບ້ານກະທອງເຊ, ນາລະແອນ ແລະ ນາຈານໃຫຍ່ |
| ລວມໄລຍະ | | | 5.346 | |

ຕາຕະລາງທີ 3 ຄ່າພິກັດບ້ານນາທະມານ, ເມືອງທ່າປາງທອງ, ແຂວງສະຫວັນນເຂດ

| ຄ່າພິກັດ GPS (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| ລ/ດ | E | N | Distance (m) | ໝາຍເຫດ |
| 1 | 573483 | 1799649 | | ກຳນົດເອົາເຊບັ້ງຫຽງເປັນເຂດເຊື່ອມຕໍ່ກັບບ້ານນາທະມານ, ແກ້ງສັງກູ, ນາຈານໃຫຍ່ |
| 2 | 569512 | 1799649 | | ກຳນົດເອົາເຊບັ້ງຫຽງເປັນເຂດເຊື່ອມຕໍ່ກັບບ້ານນາທະມານ, ຕັ່ງຫວາຍນ້ຳ, ນາຈານໃຫຍ່ |

| ລວມໄລຍະ | 4.294 | |
|---|---|---|

ຕາຕະລາງທີ 4 ຄ່າພິກັດບ້ານນາລະແອນ ເມືອງຊົນນະບູລີ ແລະ ບ້ານແກ້ງສັງກູ ເມືອງທ່າປາງທອງ ແຂວງສະຫວັນນະເຂດ

| ຄ່າພິກັດ GPS (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| ລ/ດ | E | N | Distance (m) | ໝາຍເຫດ |
| 1 | 574172 | 1805691 | | ກຳນົດເອົາຈຸດເສັ້ນທາງຮ່ອມເປັນເຂດເຊື່ອມຕໍ່ບ້ານກະທອງເຊ, ນາລະແອນ ແລະ ນາຈານໃຫຍ່ |
| 2 | 574202 | 1804375 | | ກຳນົດເອົາເຊບັ້ງຫຽງເປັນເຂດເຊື່ອມຕໍ່ກັບບ້ານນາລະແນ, ແກ້ງສັງກູ, ນາຈານໃຫຍ່ |
| ລວມໄລຍະ | | | 8.734 | |

ຕາຕະລາງທີ 5 ຄ່າພິກັດບ້ານຕັ່ງຫວາຍນໍ້າ ເມືອງຊົນນະບູລີ ແຂວງ ສະຫວັນນະເຂດ

| ຄ່າພິກັດ GPS (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| ລ/ດ | E | N | Distance (m) | ໝາຍເຫດ |
| 1 | 569512 | 1799649 | | ກຳນົດເອົາເຊບັ້ງຫຽງເປັນເຂດເຊື່ອມຕໍ່ກັບບ້ານຕັ່ງຫວາຍນໍ້າ, ນາທະມານ, ນາຈານໃຫຍ່ |
| 2 | 568950 | 1803450 | | ກຳນົດເອົາຈຸດເຊກຸມການເຊື່ອມຕໍ່ບ້ານຕັ່ງຫວາຍນໍ້າ, ໜອງແຂ້ ແລະ ນາຈານໃຫຍ່ |
| ລວມໄລຍະ | | | 4.529 | |

ຕາຕະລາງທີ 6 ຄ່າພິກັດບ້ານບ້ານໜອງແຂ້ ເມືອງຊົນນະບູລີ ແຂວງສະຫວັນນເຂດ

| ຄ່າພິກັດ GPS (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| ລ/ດ | E | N | Distance (m) | ໝາຍເຫດ |
| 1 | 568950 | 1803450 | | ກຳນົດເອົາຈຸດເຊກຸມການເຊື່ອມຕໍ່ບ້ານໜອງແຂ້, ຕັ່ງຫວາຍນໍ້າ ແລະ ນາຈານໃຫຍ່ |
| 2 | 570277 | 1804120 | | ກຳນົດເອົາຈຸດເຊກຸມການເຊື່ອມ ຕໍ່ບ້ານໜອງແຂ້, ກະທອງເຊ ແລະ ນາຈານໃຫຍ່ |
| ລວມໄລຍະ | | | 3.210 | |




ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025

ຮູບທີ 1 ແຜນທີ່ຂອບເຂດຄຸ້ມຄອງບ້ານນາຈານໃຫ່ຍ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ

### 3.3 ການນຳໃຊ້ທີ່ດິນໃນປະຈຸບັນຂອງບ້ານ

ການນຳໃຊ້ທີ່ດິນໃນໄລຍະຜ່ານມາຂອງບ້ານ ຕາມຕົວຈິງແລ້ວເຫັນໄດ້ວ່າປະຊາຊົນພາຍໃນບ້ານສ່ວນໃຫຍ່ແມ່ນຖືອາຊີບເຮັດນາເປັນສ່ວນໃຫຍ່ ແລະ ຖືເອົາການເຮັດກະສິກຳປູກຝັງລ້ຽງສັດເປັນສຳຮອງ ໃນໄລຍະຜ່ານມາການນຳໃຊ້ທີ່ດິນຂອງປະຊາຊົນພາຍໃນບ້ານມີຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຄື:

- **ຂໍ້ສະດວກ:** ເນື່ອງຈາກພື້ນທີ່ດັ່ງກ່າວສ່ວນໃຫຍ່ເປັນຮາບພຽງ ແລະ ມີພື້ນທີ່ເປັນລຸບໂນນຈຳນວນໜຶ່ງ ເຊິ່ງມີຄວາມເໝາະສົມສຳລັບການເຮັດກະສິກຳ ໂດຍສະເພາະການເຮັດນາ ແລະ ລ້ຽງສັດໃຫຍ່ເປັນຕົ້ນແມ່ນ ລ້ຽງງົວ, ລ້ຽງຄວາຍ ແລະ ສັດອື່ນໆ.
- **ຂໍ້ຫຍຸ້ງຍາກ:** ເນື້ອທີ່ດິນທີ່ຈະນຳໃຊ້ເຂົ້າໃນການຜະລິດກະສິກຳເຊັ່ນ: ເນື້ອທີ່ ດິນນາ ແລະ ດິນປູກພືດກະສິກຳທົ່ວໄປເພື່ອຮັບປະກັບທາງດ້ານສະບຽງອາຫານໃຫ້ແກ່ປະຊາຊົນພາຍໃນບ້ານກໍ່ຄືພາຍໃນເມືອງ ແມ່ນມີຂໍ້ຈຳກັດ ດັ່ງນັ້ນຈິ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການຜະລິດ ບໍ່ມີສາຍນ້ຳພຽງພໍ, ບໍ່ມີລະບົບຊົນລະປະທານ ເປັນສາເຫດໃຫ້ການປູກຟັງລ້ຽງສັດຂ້ອນຂ້າງຫຍຸ້ງຍາກ.

ຕາມການວິເຄາະຂໍ້ມູນຂອງບ້ານຕົວຈິງແລ້ວ ເຫັນໄດ້ວ່າປະຊາຊົນພາຍໃນບ້ານສ່ວນໃຫຍ່ແມ່ນຍຶດຖືເອົາການເຮັດກະສິກຳເປັນຕົ້ນ ດັ່ງນັ້ນເປີເຊັນການນຳໃຊ້ທີ່ດິນສ່ວນໃຫຍ່ແມ່ນເນື້ອທີ່ດິນກະສິກຳເຊິ່ງມີເນື້ອທີ່ 559,89 ເຮັກຕາ ກວມເຖິງ 22,61 ເປີເຊັນ ຂອງເນື້ອທີ່ທັງໝົດ ສ່ວນທີ່ເຫລືອ ແມ່ນເນື້ອທີ່ດິນປະເພດອື່ນໆ.

ຕາຕະລາງທີ 7 ສັງລວມປະເພດການນຳໃຊ້ທີ່ດິນປະຈຸບັນ ບ້ານນາຈານໃຫ່ຍ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ

| ຕາຕະລາງເນື້ອທີ່ ການນຳໃຊ້ທີ່ດິນປະຈຸບັນ | | | | | |
|---|---|---|---|---|---|
| ລ/ດ | ລະຫັດ | ສີ | ປະເພດທີ່ດິນ | ເນື້ອທີ່ ເຮັກຕາ | ເປີເຊັນ % |
| **I** | **A** | | **ທີ່ດິນກະສິກຳ** | **559.89** | **22.61** |
| 1 | A_1 | | ນາ | 463.27 | 18.71 |
| 2 | A_2 | | ສວນມັນຕົ້ນ | 90.98 | 3.67 |
| 3 | A_6 | | ໜອງປາ | 5.64 | 0.23 |
| **II** | **B** | | **ທີ່ດິນປຸກສ້າງ** | **14.72** | **0.59** |
| | B_1 | | ດິນປຸກສ້າງປຸກຄົນ | 14.72 | 0.59 |
| **III** | **C** | | **ທີ່ດິນວັດທະນະທຳ** | **31.16** | **1.26** |
| 1 | C_2 | | ປ່າຊ້າ | 11.40 | 0.46 |
| | C_2 | | ປ່າມະເຫສັກ | 19.76 | 0.80 |
| **IV** | **F** | | **ທີ່ດິນປ່າໄມ້** | **1702.90** | **68.76** |
| 1 | F_1 | | ປ່າຊົມໃຊ້ | 1169.62 | 47.23 |
| 2 | F_2 | | ປ່າສະຫງວນບ້ານ ດົງສະມັນ | 180.23 | 7.28 |
| | F_2 | | ປ່າສະຫງວນບ້ານ ດົງໃຫຍ່ | 230.09 | 9.29 |
| | F_2 | | ປ່າສະຫງວນບ້ານ ດົງນ້ອຍ | 117.04 | 4.73 |
| 3 | F_3 | | ປ່າປ້ອງກັນ(ບ່ອນພັກພິງເກີດໄຟພິບັດ) | 5.92 | 0.24 |
| **V** | **R** | | **ທີ່ດິນໂຍທາທິການ ແລະ ຂົນສົ່ງ** | **10.79** | **0.44** |
| 2 | R_2 | | ທາງດິນແດງ | 10.79 | 0.44 |
| **VI** | **W** | | **ທີ່ດິນບໍລິເວນນ້ຳ** | **157.16** | **6.35** |
| 1 | W_1 | | ຫ້ວຍ | 7.57 | 0.31 |
| | W_1 | | ນ້ຳເຊບັ້ງຫຽງ | 133.17 | 5.38 |
| 2 | W_3 | | ໜອງຮັບນ້ຳ | 16.42 | 0.66 |
| **ລວມເນື້ອທີ່** | | | | **2476.62** | **100.00** |
| **ລວງຮອບທັງໝົດ** | | | | **26.53 Km** | |

ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025




ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025

ຮູບທີ 2 ແຜນທີ່ການນຳໃຊ້ທີ່ດິນປະຈຸບັນ ບ້ານນາຈານໃຫຍ່, ເມືອງຊົນນະບູລີ ແຂວງສະຫວັນນະເຂດ

# IV. ການຈັດສັນການນຳໃຊ້ທີ່ດິນ

## 4.1 ການກຳນົດເຂດທີ່ດິນຂອງບ້ານ ນາຈານໃຫຍ່

ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃຫ້ຖືກກັບລະບຽບການ ແລະ ເຫມາະສົມກັບສະພາບຕົວຈິງຂອງແຜນພັດທະນາຂອງບ້ານໃຫ້ກາຍເປັນເຂດພັດທະນາເສດຖະກິດ-ສັງຄົມ ໃນອະນາຄົດ ທາງທີມງານຈັດສັນ ແລະ ສ້າງແຜນທີ່ຕາດິນ ໄດ້ປະສານສົມທົບກັບອົງການປົກຄອງບ້ານຂະແໜງການທີ່ກ່ຽວຂ້ອງ ໄດ້ກຳນົດມີ 3 ເຂດ ດັ່ງນີ້:

### 4.1.1 ເຂດທີ່ດິນອະນຸລັກ

ກ. ທີ່ດິນວັດທະນະທຳ ແມ່ນປະກອບມີ: ທີ່ດິນປ່າຊ້າ ແລະ ດິນປ່າມະເຫສັກ;

ຂ. ທີ່ດິນປ່າໄມ້ ປະກອບມີ: ປ່າສະຫງວນບ້ານ, ປ່າປ້ອງກັນໄຟພິບັດ, ປ່າປ້ອງກັນແຫຼ່ງນ້ຳ, ປ່າຊົມໃຊ້ຂອງບ້ານ.

ຄ. ດິນບໍລິເວນນ້ຳຂອງບ້ານ ປະກອບມີ: ເຂດສະຫງວນແຄມເຊບັ້ງຫຽງ

### 4.1.2 ເຂດທີ່ດິນນຳໃຊ້ນຳ

❖ **ທີ່ດິນກະສິກຳ**: ເຂດທີ່ດິນກະສິກຳຂອງ ບ້ານນາຈານໃຫຍ່ ປະກອບມີ: ດິນນາ ແມ່ນຢູ່ທາງທິດໃຕ້ຂອງບ້ານ, ທີ່ດິນສາມາດສົ່ງເສີມການລ້ຽງສັດ ແລະ ໜອງປາລວມບ້ານໃນອານາຄົດແມ່ນກຳນົດເອົາຢູ່ທາງທິດເໜືອ ແລະ ທິດຕາເວັນອອກຂອງບ້ານ.

❖ **ທີ່ດິນນຳໃຊ້ປຸກສ້າງທີ່ຢູ່ອາໃສປະຈຸບັນຂອງບ້ານ**: ແມ່ນຕັ້ງຢູ່ແຄມເຊບັ້ງຫຽງ ແລະ ແຄມດົງສະມັນ

- **ດິນປຸກສ້າງຂອງລັດປະກອບມີ:** ດິນໂຮງຮຽນ ປະຖົມສົມບູນ ບ້ານນາຈານໃຫຍ່ ແລະ ໂຮງຮຽນ ປະຖົມຕັ້ງຢູ່ແຄມເຊບັ້ງຫຽງ
- **ເຂດທີ່ດິນເພື່ອພັດທະນາ**

ໝາຍເຖິງເຂດພື້ນທີ່ຈະຂະຫຍາຍລະບົບພື້ນຖານໂຄງລ່າງຂອງບ້ານ, ເຂດທີ່ຂະຫຍາຍພື້ນທີ່ປຸກສ້າງ ຂອງບ້ານເພື່ອຮອງຮັບການເພີ່ມຂື້ນຂອງປະຊາກອນໃນອະນາຄົດ, ການຂະຫຍາຍພື້ນທີ່ດິນດັ່ງກ່າວ ແມ່ນໄດ້ກຳນົດເອົາລຽບຕາມແຄມສອງຝາກທາງແຍກໄປບ້ານກະທອງເຊ ແລະ ບ້ານກະລຶມ-ວັງແຂ້ (ໜອງແຂ້) ກຳນົດອອກໄປເບື້ອງລະ 50 ແມັດ, ສະເໜີຕັດເສັ້ນທາງຜ່ານກາງ.

### 4.1.3 ຄວາມຮັບຮູ້ໂດຍລວມໃນການສຳຫຼວດຈັດສັນທີ່ດິນ

ການສຳຫຼວດຈັດສັນແມ່ນຈຸດເລີ້ມຕົ້ນທີ່ຈະຕ້ອງໄດ້ເອົາໃຈໃສ່ເປັນບຸລິມະສິດທຳອິດຂອງວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃນແຕ່ລະປະເພດ ແລະ ແຕ່ລະທ້ອງຖິ່ນຕິດພັນກັບການປົກປັກຮັກສາ ແລະ ຄຸ້ມຄອງປ່າໄມ້ ເພື່ອຮັກສາແຫຼ່ງນໍ້າ, ຊີວະນາໆພັນ ແລະ ຄວາມອຸດົມສົມບູນຂອງດິນໃນແຕ່ລະເຂດໂດຍອີງໃສ່ຈຸດພິເສດ, ທີ່ຕັ້ງ ແລະພູມສັນຖານຂອງປະເທດເຮົາເຊິ່ງປະກອບມີເຂດທົ່ງພຽງ, ປ່າໂຄກ. ຊຶ່ງເຂດເຫຼົ່ານີ້, ລ້ວນແລ້ວແຕ່ແມ່ນເຂດທີ່ມີປະຊາຊົນບັນດາເຜົ່າໄດ້ຕັ້ງຖິ່ນຖານພູມລຳເນົາຢູ່ຢ່າງກະແຈກກະຈາຍ, ຊຶ່ງເຂົາເຈົ້າໄດ້ດຳລົງຊີວິດ, ທຳມາຫາກິນທີ່ຕິດພັນກັບປ່າໄມ້,ເຄື່ອງປ່າຂອງດົງ ແລະ ອາຫານຈາກທຳມະຊາດຕາມຫ້ວຍ, ໜອງ, ບຶງ ແລະ ແມ່ນໍ້າລຳເຊຕ່າງໆ, ທີ່ເພິ່ງພາອາໄສຄວາມອຸດົມສົມບູນຂອງທຳມະຊາດເປັນຕົ້ນຕໍ, ແຕ່ຖ້າຫາກມີການປ່ຽນແປງ ປະຊາຊົນກໍຈະມີຄວາມຫຍຸ້ງຍາກຂຶ້ນ ແລະ ອີກດ້ານໜຶ່ງການເພີ້ມຂຶ້ນຂອງພົນລະເມືອງກໍເປັນສາຍເຫດໜຶ່ງທີ່ພາໃຫ້ມີຄວາມການຕ້ອງນຳໃຊ້ທີ່ດິນ ແລະຊັບພະຍາກອນທຳມະຊາດເພີ້ມຂຶ້ນ, ມີການຈັບຈອງທີ່ດິນແບບຊະຊາຍອັນກໍ່ໃຫ້ເກີດມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ຖ້າຫາກບໍ່ມີການສຳຫຼວດຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນແລະວາງແຜນຄຸ້ມຄອງ, ປົກປັກຮັກສາ, ພັດທະນາແລະນຳໃຊ້ທີ່ດິນ, ຊັບພະຍາກອນທຳມະຊາດແລະແຫຼ່ງນໍ້າໃຫ້ເຂົ້າສູ່ລະບຽບຫຼັກການແລະກົດໝາຍທີ່ກຳນົດໄວ້.

ການສຳຫຼວດຈັດສັນທີ່ດິນແຕ່ລະເຂດແລະແຕ່ລະປະເພດ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍກະສິກຳ, ກົດໝາຍວ່າດ້ວຍປ່າໄມ້ , ກົດໝາຍວ່າດ້ວຍນໍ້າ, ກົດໝາຍວ່າດ້ວຍໄຟຟ້າ, ກົດໝາຍວ່າດ້ວຍບໍ່ແຮ່, ກົດໝາຍວ່າດ້ວຍການປົກປັກຮັກສິ່ງແວດລ້ອມ,ກົດໝາຍວ່າດ້ວຍຜັງເມືອງ, ກົດໝາຍວ່າດ້ວຍທາງຫຼວງ, ກົດໝາຍວ່າດ້ວຍອຸດສະຫະກຳປຸງແຕ່ງ, ບັນດາກົດໝາຍ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ ແລະ ນອກຈາກນີ້ຕ້ອງອີງໃສ່ຈຸດທີ່ຕັ້ງຂອງພື້ນທີ່ຕົວຈິງ ຕາມພູມສັນຖານ ແລະ ຄວາມຄ້ອຍຊັນທີ່ໄດ້ກຳນົດໄວ້ໃນມາດຕະການນຳໃຊ້ທີ່ດິນຄື:

- **ຄວາມຄ້ອຍຊັນແຕ່ 0-5%** ແມ່ນກຳນົດເປັນທີ່ດິນນາສຳລັບປູກເຂົ້າ ແລະ ກະສິກຳອື່ນໆ,ຖ້າຈະປູກພືດລົ້ມລຸກຄວນປຸກພືດຄຸມດິນ ແລະ ຖ້າຈະປູກໄມ້ຢືນຕົ້ນກໍຕ້ອງມີລະບົບລະບາຍນໍ້າຢ່າງເໝາະສົມ.
- **ຄວາມຄ້ອຍຊັນແຕ່ 5-15%** ແມ່ນກຳນົດເປັນພື້ນທີ່ກະສິກຳຫຼືປ່າໄມ້ທຸກປະເພດ(ນອກຈາກການເຮັດຊົນລະປະທານ) ແຕ່ຖ້າຈະປູກພືດລົ້ມລຸກຕ້ອງເຮັດຄັນຄູດິນຕາມແນວລະດັບຂວາງເພື່ອປ້ອງກັນການເຊາະເຈື່ອນ.
- **ຄວາມຄ້ອຍຊັນແຕ່ 15-25%** ແມ່ນກຳນົດເປັນພື້ນທີ່ປູກໄມ້ທຸກປະເພດແຕ່ວ່າຊັນໂພດສຳລັບທົ່ງຫຍ້າລ້ຽງສັດ,ຖ້າຈະປູກພືດລົ້ມລຸກຕ້ອງເຮັດເປັນນາຂັ້ນໄດເພື່ອເປັນການປົກປັກຮັກສາໜ້າດິນເສຍກ່ອນ.
- **ຄວາມຄ້ອຍຊັນແຕ່ 25-5%** ແມ່ນກຳນົດເປັນພື້ນທີ່ປູກຕົ້ນໄມ້ທຸກຊະນິດຫຼືຖ້າຈະປູກພືດປະສົມປະສານກັບການປູກປ່າຫຼືຈະປູກໄມ້ຊຸມຊົນກໍໄດ້,ຖ້າຈະປູກຫ້ຍາລ້ຽງສັດກໍຕ້ອງກ່ຽວເອົາຫຍ້າໄປໃຫ້ສັດກິນຢູ່ໃນຄອກ ແລະ ຖ້າຈະປູກໄມ້ສວນຕ້ອງມີພືດຄຸມດິນລະຫວ່າງກົກໄມ້ຕະຫຼອດແນວ.

- **ຄວາມຄ້ອຍຊັນສູງກ່ວາ 35-45%** ແມ່ນກຳນົດເປັນປ່າປ້ອງກັນການເຊາະເຈື່ອນຂອງດິນ, ປ່າປ້ອງກັນແຫຼ່ງນ້ຳແລະປ່າປົກປັກຮັກສາຊີວະນາໆພັນເທົ່ານັ້ນ,ໃນກໍລະນີໃຊ້ເປັນປ່າຜະລິດເຄື່ອງປ່າຂອງດົງ ກໍຈະຕ້ອງລະມັດລະວັງບໍ່ໃຫ້ທີ່ດິນເກີດການເຊາະເຈື່ອນໃນເວລາຂຸດຄົ້ນເຄື່ອງປ່າຂອງດົງນັ້ນ.
- **ຄວາມຄ້ອຍຊັນ 45% ຂຶ້ນໄປ** ແມ່ນບໍ່ເໝາະສົມສຳລັບປ່າຜະລິດແລ້ວ, ຕ້ອງເປັນປ່າສະຫງວນ,ປ່າປ້ອງກັນແຫຼ່ງນ້ຳ, ຊີວະນາໆພັນແລະປ້ອງກັນບໍ່ໃຫ້ດິນເຊາະເຈື່ອນ.

### 4.2 ການກຳນົດປະເພດທີ່ດິນຂອງບ້ານ

ອີງຕາມຂໍ້ມູນການສຳຫຼວດ ແມ່ນສາມາດສັງລວມ ແລະ ຈັດແບ່ງປະເພດການນຳໃຊ້ທີ່ດິນຂອງບ້ານນາຈານໃຫຍ່ ອອກເປັນ 6 ປະເພດທີ່ດິນ ເຊິ່ງລາຍລະອຽດຂອງປະເພດທີ່ດິນມີຄື:

❖ **ການກຳນົດ ທີ່ດິນກະສິກຳ**

ທີ່ດິນກະສິກຳ ແມ່ນທີ່ດິນທີ່ໄດ້ກຳນົດໄວ້ເພື່ອນຳໃຊ້ເຂົ້າໃນການປູກຝັງ, ລ້ຽງສັດ ແລະ ການຄົ້ນຄ້ວາທົດລອງທາງດ້ານກະສິກຳ. ເຂດທີ່ດິນກະສິກຳຂອງບ້ານນາຈານໃຫຍ່ ປະກອບມີ: ດິນນາ, ດິນປູກພືດກະສິກຳທົ່ວໄປ, ເຂດລ້ຽງສັດ ແລະ ໜອງລວມບ້ານແມ່ນກຳນົດເອົາຢູ່ທາງທິດເໜືອ ແລະ ທິດຕາເວັນຕົກຂອງບ້ານ.

❖ **ການກຳນົດ ທີ່ດິນປຸກສ້າງ**

ທີ່ດິນປຸກສ້າງແມ່ນທີ່ດິນທີ່ກຳນົດໄວ້ເພື່ອນຳໃຊ້ເຂົ້າໃນ ການປຸກສ້າງທີ່ຢູ່ອາໄສສຳນັກງານ, ອີງການ ແລະສະຖານທີ່ສາທາລະນະ. ເຂດທີ່ດິນປຸກສ້າງຂອງບ້ານ ແມ່ນລຽບຢູ່ຕາມສອງຟາກທາງເຂົ້າບ້ານ.

- ທີ່ດິນປຸກສ້າງທີ່ຢູ່ອາໃສປະຈຸບັນ:ກຳນົດຢູ່ແຄມເຊບັ້ງຫຽງ ແລະ ແຄມດົງສະມັນ.
- ດິນປຸກສ້າງຂະຫຍາຍໃໝ່ໄດ້ກຳນົດຕາມສອງຟາກທາງແຍກໄປບ້ານກະທອງເຊ ແລະ ໜອງແຂ້.
- ດິນປຸກສ້າງຂອງລັດປະກອບມີ: ດິນຫ້ອງການບ້ານ ແລະ ດິນປຸກສ້າງໂຮງຮຽນ ຕິດກັບແຄມເຊບັ້ງຫຽງ.

❖ **ການກຳນົດ ທີ່ດິນວັດທະນະທຳ**

ທີ່ດິນວັດທະນະທຳ ແມ່ນສະຖານທີ່ຕັ້ງ ຂອງມໍລະດົກທາງດ້ານວັດທະນະທຳ ທີ່ຕິດພັນກັບຮ່ອງຮອຍປະຫວັດ ສາດ, ວັດຖຸບູຮານ, ປູສະນີຍະສະຖານ, ທິວທັດທຳມະຊາດ, ສິ່ງປຸກສ້າງດ້ານວັດທະນະທຳ ແລະສະຖານ ທີ່ອື່ນໆ ທີ່ລັດກຳນົດໃຫ້ປັນທີ່ດິນວັດທະນະທຳ ແລະ ການທ່ອງທ່ຽວ. ທີ່ດິນວັດທະນະທຳຂອງບ້ານ ນາຈານໃຫຍ່ ປະກອບມີ:

- ດິນປ່າຊ້າ ກຳນົດຢູ່ທາງທິດຕາເວັນຕົກຂອງບ້ານໃກ້ເຂດລີ້ໄຟພີບັດ.
- ດິນປ່າມະເຫສັກ ກຳນົດຢູ່ທາງທິດຕາເວັນຕົກຂອງບ້ານ ແຄມດົງສະມັນ.

❖ **ການກຳນົດ ທີ່ດິນປ່າໄມ້**

ທີ່ດິນປ່າໄມ້ ແມ່ນເນື້ອທີ່ດິນທຸກຕອນທີ່ມີປ່າປົກຫຸ້ມ ຫຼື ທີ່ດິນບໍ່ມີປ່າປົກຫຸ້ມ ເຊິ່ງລັດກຳນົດໃຫ້ເປັນທີ່ດິນປ່າໄມ້ຂອງບ້ານ ແມ່ນປະກອບມີ :ປ່າສະຫງວນດົງສະມັນ, ເຂດຫວງຫ້າມເດັດຂາດ, ປ່າປ້ອງກັນແຫຼ່ງນ້ຳ, ປ່າຊົມໃຊ້.

❖ **ການກຳນົດ ທີ່ດິນໂຍທາທິການ ແລະ ຂົນສົ່ງ**

ທີ່ດິນໂຍທາທິການ ແລະ ຂົນສົ່ງ ແມ່ນທີ່ດິນສຳລັບໃຊ້ເປັນເສັ້ນທາງ, ຂອບທາງ, ຮ່ອງນ້ຳ, ເຂດສະຫງວນແລວ ທາງ, ສະຖານທີ່ຕັ້ງຂົວ ແລະ ທີ່ດິນອື່ນໆ ທີ່ໃຊ້ເຂົ້າໃນວຽກງານການຂົນສົ່ງ ປະກອບມີ 2 ປະເພດ:

- ເສັ້ນທາງ ມີຄວາມກວ້າງ 8 ແມັດ ຈາກໃຈກາງທາງເບື້ອງລະ 4 ແມັດ;
- ເສັ້ນທາງຕັດໃໝ່ ມີຄວາມກວ້າງ 8 ແມັດ ຈາກໃຈກາງທາງເບື້ອງລະ 4 ແມັດ;

❖ **ການກຳນົດ ທີ່ດິນບໍລິເວນນ້ຳ**

ທີ່ດິນບໍລິເວນນ້ຳ ແມ່ນທີ່ດິນເຊິ່ງຢູ່ພື້ນນ້ຳ ຫຼື ຢູ່ຂອບເຂດອ້ອມແອ້ມແຫຼ່ງນ້ຳເຊັ່ນ: ທີ່ດິນພື້ນນ້ຳ, ທີ່ດິນຍອດນ້ຳ,ທີ່ດິນແຄມນ້ຳ, ທີ່ດິນກາງນ້ຳ, ທີ່ດິນປົ່ງໃໝ່, ທີ່ດິນນ້ຳບົກປະ ຫຼື ທີ່ດິນທີ່ເກີດຂຶ້ນຈາກການດັດແປງ ທີ່ດິນ

ບໍລິເວນນ້ຳຂອງບ້ານ ແມ່ນປະກອບມີ: ຫ້ວຍ ແລະ ຮ່ອງຕ່າງໆ ຕ້ອງໄດ້ກຳນົດປ່າປ້ອງກັນການເຊາະເຈື່ອນ, ເພື່ອ ຮັກສາດິນແຄມນ້ຳເຊບັ້ງຫຽງ, ແຄມຫ້ວຍຕ່າງໆໃຫ້ມີຄວາມຍືນຍົງຕະຫຼອດໄປ.

ຕາຕະລາງທີ 8 ສັງລວມປະເພດການຈັດສັນທີ່ດິນບ້ານເມືອງໂຮງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ

| ລ/ດ | ລະຫັດ | ສີ | ປະເພດທີ່ດິນ | ເນື້ອທີ່ ເຮັກຕາ | ເປີເຊັນ % |
|---|---|---|---|---|---|
| **I** | **AZ** | | **ທີ່ດິນກະສິກຳ** | **456.30** | **18.42** |
| 1 | AZ_1 | | ນາ | 433.54 | 17.51 |
| | AZ_1 | | ນາສາມາດເຮັດຊົນລະປະທານ | 16.86 | 0.68 |
| 2 | AZ_6 | | ໜອງປາ | 5.90 | 0.24 |
| **II** | **BZ** | | **ທີ່ດິນປຸກສ້າງ** | **33.69** | **1.36** |
| 1 | BZ_1 | | ດິນປຸກສ້າງບຸກຄົນ | 14.20 | 0.57 |
| 2 | BZ_2 | | ໂຮງຮຽນ | 0.52 | 0.02 |
| 3 | BZ_3 | | ທີ່ດິນແຮຂະຫຍາຍປຸກສ້າງ | 18.98 | 0.77 |
| **III** | **CZ** | | **ທີ່ດິນວັດທະນະທຳ** | **31.86** | **1.29** |
| 1 | CZ_2 | | ປ່າມະເຫສັກ | 19.76 | 0.80 |
| | CZ_2 | | ປ່າຊ້າ | 12.10 | 0.49 |
| **IV** | **F** | | **ທີ່ດິນປ່າໄມ້** | **1716.44** | **69.31** |
| 1 | F_1 | | ປ່າຊົມໃຊ້ | 863.31 | 34.86 |
| 2 | F_3 | | ປ່າສະຫງວນ ດົງສະມັນ | 247.52 | 9.99 |
| | F_3 | | ເຂດຫວງຫ້າມເດັດຂາດ | 368.73 | 0.47 |
| | F_3 | | ປ່າປ້ອງແຄມເຊບັ້ງຫຽງ | 236.88 | 0.04 |
| **V** | **R** | | **ທີ່ດິນໂຍທາທິການ ແລະ ຂົນສົ່ງ** | **11.67** | **0.47** |
| 1 | R_2 | | ທາງດິນແດງ | 10.79 | 0.44 |
| | R_2 | | ເສັ້ນທາງຈະຕັດໃໝ່ | 0.88 | 0.04 |
| **VI** | **W** | | **ທີ່ດິນບໍລິເວນນ້ຳ** | **226.66** | **9.15** |
| 1 | W_1 | | ຫ້ວຍ | 10.03 | 0.40 |
| | W_1 | | ເຊບັ້ງຫຽງ | 126.07 | 5.09 |
| 2 | W_2 | | ເຂດຮັກສາຕານ້ຳອອກບໍ່ | 7.02 | 0.28 |
| 3 | W_3 | | ໜອງຮັບນ້ຳ | 21.35 | 0.86 |
| 4 | W_4 | | ເຂດສະຫງວນແຄມເຊບັ້ງຫຽງ | 62.18 | 2.51 |
| **ລວມເນື້ອທີ່** | | | | **2476.62** | **100.00** |
| **ລວງຮອບທັງໝົດ** | | | | **26.53 Km** | |

ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025




ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025

ຮູບທີ 3 ແຜນທີ່ຈັດສັນການນຳໃຊ້ທີ່ດິນ ບ້ານນາຈານໃຫ່ຍ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ

ພາຍຫຼັງໄດ້ມີການວາງແຜນຈັດສັນ, ຈັດແບ່ງເຂດ ແລະ ຈັດແບ່ງປະເພດທີ່ດິນຂອງບ້ານນາຈານໃຫຍ່ ແລ້ວເຫັນວ່າ: ເນື້ອທີ່ດິນແຕ່ລະປະເພດມີການປ່ຽນແປງບາງປະເພດທີ່ດິນກໍ່ມີການເພີ່ມຂຶ້ນ ແລະ ບາງປະເພດທີ່ດິນກໍ່ມີການລຸດລົງຍ້ອນວ່າ:

| | | |
|---|---|---|
| 1 | ທີ່ດິນກະສິກຳ | ເນື້ອທີ່ດິນກະສິກຳຫລຸດລົງຍ້ອນວ່າ: ບ້ານໄດ້ກຳນົດເຂດຈະຂະຫຍາຍການປຸກສ້າງ, ກຳນົດເຂດສະຫງວນແຄມນ້ຳເຊບັ້ງຫຽງ ແລະ ຟື້ນຟູເຂດບຸກລຸກປູກມັນຕົ້ນດົງສະມັນ, ດົງນ້ອຍ, ດົງໃຫຍ່. |
| 2 | ທີ່ດິນປຸກສ້າງ | ມີເນື້ອທີ່ເພີ່ມຂຶ້ນຍ້ອນວ່າ: ໄດ້ມີການກຳນົດເຂດຈະຂະຫຍາຍການປຸກສ້າງເພີ່ມຂຶ້ນ ເພື່ອຮອງຮັບການຍ້າຍບ້ານໃນອະນາຄົດ. |
| 3 | ທີ່ດິນວັດທະນະທຳ | ເພີ່ມຂຶ້ນເລັກໜ້ອຍຍ້ອນກຳນົດເຊື່ອມຕໍ່ເຂດປ່າຊ້າບ້ານນ້ອຍ. |
| 4 | ທີ່ດິນປ່າໄມ້ | ມີເນື້ອທີ່ເພີ່ມຂຶ້ນຍ້ອນໄດ້ກຳນົດເຂດປ່າປ້ອງກັນແຫລ່ງນ້ຳຕ່າງໆ. |
| 5 | ທີ່ດິນໂຍທາທິການແລະຂົນສົ່ງ | ມີເນື້ອທີ່ເພີ່ມຂຶ້ນຍ້ອນວ່າບ້ານໄດ້ສະເໜີຕັດເສັ້ນທາງໃໝ່ |
| 6 | ທີ່ດິນບໍລິເວນນ້ຳ | ມີເນື້ອທີ່ເພີ່ມຂຶ້ນ ຍ້ອນວ່າ: ໄດ້ມີການກຳນົດເຂດສະຫງວນແຄມນ້ຳເຊບັ້ງຫຽງ ແລະ ເຂດສະຫງວນແຄມ ຫ້ວຍນ້ຳນ້ອຍຕ່າງໆ ຈຶ່ງເຮັດໃຫ້ທີ່ດິນບໍລິເວນນ້ຳມີເນື້ອທີ່ເພີ່ມຂຶ້ນ. |

ຕາຕະລາງທີ 9 ສົມທຽບລະຫວ່າງເນື້ອທີ່ການນຳໃຊ້ດິນປະຈຸບັນ ແລະ ເນື້ອທີ່ການຈັດສັນທີ່ດິນ

| ລ/ດ | ປະເພດການນຳໃຊ້ | ເນື້ອທີ່ນຳໃຊ້ ປະຈຸບັນ(ha) | ກວມສ່ວນ ຮ້ອຍ (%) | ເນື້ອທີ່ແຜນ ຈັດສັນ (ha) | ກວມສ່ວນ ຮ້ອຍ (%) | ເປີເຊັນການ ປ່ຽນແປງ(%) |
|---|---|---|---|---|---|---|
| 1 | ທີ່ດິນທີ່ດິນກະສິກຳ | 559.89 | 22.61 | 456.30 | 18.42 | -4.18 |
| 2 | ທີ່ດິນປຸກສ້າງ | 14.72 | 0.59 | 33.69 | 1.36 | 0.77 |
| 3 | ທີ່ດິນວັດທະນະທຳ | 31.16 | 1.26 | 31.86 | 1.29 | 0.03 |
| 4 | ທີ່ດິນປ່າໄມ້ | 1702.90 | 68.76 | 1716.44 | 69.31 | 0.55 |
| 5 | ທີ່ດິນໂຍທາທິການ ແລະ ຂົນສົ່ງ | 10.79 | 0.44 | 11.67 | 0.47 | 0.04 |
| 6 | ທີ່ດິນບໍລິເວນນ້ຳ | 157.16 | 6.35 | 226.66 | 9.15 | 2.81 |
| *ລວມເນື້ອທີ່ທັງຫມົດ* | | *2476.62* | *100.00* | *2476.62* | *100* | |

ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025

## V. ທ່າແຮງໃນການພັດທະນາທີ່ດິນ

### 5.1 ທ່າແຮງໃນການພັດທະນາທີ່ດິນຂອງບ້ານ

ບ້ານ ນາຈານໃຫຍ່ ເປັນບ້ານໜຶ່ງທີ່ມີທ່າແຮງໃນການປູກພຶດອາຍຸສັ້ນ ເປັນຕົ້ນແມ່ນ ປູກເຂົ້າ ແລະ ພືດກະສິກຳທົ່ວໄປ ນອກຈາກນີ້ຍັງມີການລ້ຽງສັດນ້ອຍ ແລະ ຄ້າຂາຍທີ່ເປັນອາຊີບຫຼັກ.

1) ການປູກເຂົ້າ, ຢາສູບ ແລະ ສາລີ
2) ການລ້ຽງສັດໃຫ່ຍປະເພດງົວຄວາຍ ແລະ ຍັງມີສັດນ້ອຍທີ່ລ້ຽງຕາມບ້ານລະດັບຄອບຄົວ.

### 5.2 ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານນາຈານໃຫຍ່

ອີງໃສ່ທ່າແຮງໃນການພັດທະນາຂອງບ້ານ ແລະ ຄວາມສາມາດຕົວຈິງຂອງບ້ານທີ່ມີຢູ່ນັ້ນ ສາມາດກຳນົດໂຄງການພັດທະນາທີ່ດິນພາຍໃນບ້ານ ເຖິງ ໄດ້ຈັດໂຄງການບຸລິມະສິດຕົ້ນຕໍດັ່ງນີ້:

- ສືບຕໍ່ໂຄງການອອກໃບຢັ້ງຢືນສິດນຳໃຊ້ທີ່ດິນໃນສາມປະເພດປ່າ.
- ສົ່ງເສີມໂຄງການລ້ຽງສັດໃຫຍ່ ແລະ ສັດນ້ອຍ,
- ພື້ນຖານໂຄງລ່າງ ປັບປຸງ ແລະ ຂະຫຍາຍລະບົບຕາໜາງເສັ້ນທາງພາຍໃນບ້ານ;

ທັງ 3 ໂຄງການນີ້ ແມ່ນມອບໃຫ້ຂະແໜງການທີ່ກ່ຽວຂ້ອງຂອງເມືອງ ໃຫ້ພິຈາລະນາຄົ້ນຄ້ວາ ແລະ ຈັດຕັ້ງປະຕິບັດ ເພື່ອລົບລ້າງຄວາມທຸກຈົນຂອງທ້ອງຖິ່ນ ຕາມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານວາງອອກ.

## VI. ລະບຽບການຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ

ພາຍຫລັງທີ່ໄດ້ສຳເລັດ ແລະ ຮັບຮອງເອົາແຜນຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດ, ສ້າງເປັນແຜນທີ່ການນຳໃຊ້ທີ່ດິນຢ່າງເປັນທາງການແລ້ວ ມອບແຜນຈັດສັນທີ່ດິນດັ່ງກ່າວໃຫ້ແກ່ອົງການປົກຄອງທ້ອງຖິ່ນ ບັນດາຂະແໜງ ການຕ່າງໆ ຂອງເມືອງ, ບ້ານເປັນຜູ້ຄຸ້ມຄອງ, ນຳໃຊ້ ແລະ ຕິດຕາມກວດກາຕາມພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບໃຫ້ເຂົ້າສູ່ລະບຽບກົດໝາຍຕ່າງໆ ທີ່ກ່ຽວຂ້ອງກັບທີ່ດິນ ແລະ ນຳພາໃນການສ້າງກົດລະບຽບ ໃນການຄຸ້ມຄອງແຜນຈັດສັນທີ່ດິນດັ່ງກ່າວນີ້ໃຫ້ໄດ້ຮັບຜົນດີ.

### 6.1 ການຄຸ້ມຄອງ ທີ່ດິນກະສິກຳ

ທີ່ດິນກະສິກຳຂອງບ້ານນາຈານໃຫຍ່ ປະກອບມີ: ດິນນາ, ດິນສວນ, ດິນປູດພືດກະສິກຳທົ່ວໄປ, ດິນສົ່ງເສີມການລ້ຽງສັດນ້ອຍ, ການຄຸ້ມຄອງດິນກະສິກຳແມ່ນຫ້າມບໍ່ໃຫ້ປ່ຽນແປງດິນກະສິກຳໄປເປັນດິນປະເພດອື່ນ ຖ້າຈະຫັນປ່ຽນ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງເສຍກ່ອນ

### 6.2 ການຄຸ້ມຄອງທີ່ດິນປຸກສ້າງ

ດິນປຸກສ້າງຂອງບ້ານນາຈານໃຫຍ່ ປະຈຸບັນມີທີ່ດິນປຸກສ້າງທີ່ຢູ່ອາໃສ, ດິນຫ້ອງການບ້ານ, ດິນໂຮງຮຽນ, ດິນຕະຫຼາດ ແລະ ດິນແຮຂະຫຍາຍການປຸກສ້າງ; ການຄຸ້ມຄອງປົກປັກຮັກສາແມ່ນໃຫ້ປະຕິບັດຕາມ ກົດໝາຍ ວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ໂດຍສະເພາະ ຢ່າງເຂັ້ມງວດ. ຖ້າຈະມີການຫັນປ່ຽນດິນປະເພດນີ້ ໄປເປັນດິນປະເພດອື່ນໆ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງເສຍກ່ອນ.

### 6.3 ການຄຸ້ມຄອງ ທີ່ດິນວັດທະນາທຳ

ທີ່ດິນວັດທະນະທຳ ແມ່ນໄດ້ກຳນົດເປັນທີ່ດິນສັກສິດຂອງບ້ານນາຈານໃຫຍ່ ຕາມລະບຽບການຄວາມເຊື່ອຖືໃຫ້ຖືກ ຕ້ອງຕາມກົດໝາຍ, ທີ່ດິນປະຫວັດສາດ, ປົກປັກຮັກສາຄວາມອຸດົມສົມບູນຂອງພູມີປະເທດໃຫ້ຖືກຕາມລະບຽບກົດໝາຍ. ບ້ານນາຈານໃຫຍ່ປະກອບມີ: ດິນປ່າຊ້າ ແລະ ດິນປ່າມະເຫສັກ. ການຄຸ້ມຄອງປົກປັກຮັກສາແມ່ນມອບໃຫ້ການຈັດຕັ້ງຂອງບ້ານ ເປັນຜູ້ຄຸ້ມຄອງຕາມລະບຽບກົດໝາຍ ແລະ ຮີດຄອງປະເພນີ ຫ້າມນຳໃຊ້ທີ່ດິນດັ່ງກ່າວໃນຈຸດປະສົງອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

### 6.4 ການຄຸ້ມຄອງ ທີ່ດິນປ່າໄມ້

ທີ່ດິນປ່າໄມ້ປະກອບມີຄື: ດິນປ່າປ້ອງກັນ, ປ່າປ້ອງກັນແຫຼ່ງນ້ຳ ແລະ ປ່າຊົມໃຊ້. ທີ່ດິນປ່າໄມ້ແມ່ນຊັບພະຍາກອນອັນລ້ຳຄ່າ, ມີລະບົບນິເວດສະເພາະຂອງມັນ ຊຶ່ງປະກອບມີຊີວະນາໆພັນແຫຼ່ງນ້ຳ, ສັດປ່າ ແລະ ຕົ້ນໄມ້ຫຼາຍຊະນິດທີ່ເກີດຕາມທຳມະຊາດ; ການຄຸ້ມຄອງແມ່ນມອບໃຫ້ອຳນາດການປົກຄອງທ້ອງຖິ່ນ ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງຂອງຂັ້ນເມືອງ ແລະ ຂັ້ນແຂວງ ອອກລະບຽບການໃນການຄຸ້ມຄອງ ແລະ ປົກປັກຮັກສາ.

### 6.5 ການຄຸ້ມຄອງ ທີ່ດິນໂຍທາທິການ ແລະ ຂົນສົ່ງ

ລະບົບຕະໜ່າງເສັ້ນບ້ານນາຈານໃຫຍ່ ເມືອງຊົນນະບູລີ ແຂວງສະຫວັນນະເຂດ ແມ່ນປະກອບມີ 02 ປະເພດຄື:

- <u>**ທາງປະເພດທີ 2:**</u> ເສັ້ນທາງເຊື່ອມຕໍ່ລະຫວ່າງບ້ານຫາບ້ານກຳນົດ 16 ແມັດ, ຄືອອກຈາກໃຈກາງທາງເບື້ອງລະ 8 ແມັດ .
- <u>**ທາງປະເພດທີ 3**:</u> ແມ່ນເສັ້ນທາງຮ່ອມ, ທາງຊອຍພາຍໃນບ້ານ ແລະ ໄປເຂດທຳການຜະລິດ, ແມ່ນໄດ້ກຳນົດເອົາຄວາມກ້ວາງ 4 ຫາ 8 ແມັດ, ຄືອອກຈາກໃຈກາງທາງເບື້ອງລະ 2 ຫຼື 4 ແມັດ.

ທີ່ດິນປະເພດດັ່ງກ່າວມອບໃຫ້ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ເປັນຜູ້ຄຸ້ມຄອງຕາມກົດໝາຍ.

### 6.6 ການຄຸ້ມຄອງ ທີ່ດິນບໍລິເວນນ້ຳ

ສຳລັບທີ່ດິນບໍລິເວນນ້ຳ ປະກອບມີ: ຫວ້ຍປາເຫວ, ນອກນັ້ນຍັງມີການສະຫງວນແຄມຫ້ວຍຕ່າງໆໄວ້ເບື້ອງລະ 15 ແມັດ ເພື່ອເປັນການປ້ອງກັນການເຊາະເຈື່ອນ, ເພື່ອຮັກສາດິນແຄມນ້ຳ, ແຄມຫ້ວຍຕ່າງໆໃຫ້ມີຄວາມຍືນຍົງຕະຫຼອດໄປ. ດິນບໍລິເວນນ້ຳຂອງບ້ານ ແມ່ນໄດ້ກຳນົດຕາມແຜນຈັດສັນທີ່ ໝາຍໄວ້ຢູ່ໃນແຜນທີ່ ແລະ ມອບໃຫ້ບ້ານເປັນຜູ້ຄຸ້ມຄອງອອກລະບຽບການ ແລະ ມາດຕາການໃນການຄຸ້ມຄອງ.

## VII. ການຫັນປ່ຽນປະເພດທີ່ດິນ

ໃນກໍລະນີມີການຫັນປ່ຽນການນຳໃຊ້ທີ່ດິນປະເພດໜຶ່ງໄປສູ່ປະເພດອື່ນ ທີ່ໄດ້ກຳນົດໄວ້ໃນບົດແຜນຈັດສັນທີ່ດິນຂັ້ນບ້ານ/ກຸ່ມບ້ານ ແລະ ໄດ້ຮັບຮອງຈາກ ອົງການປົກຄອງທ້ອງຖິ່ນ ແມ່ນໃຫ້ປະຕິບັດຕາມລະບຽບການຂອງ ຂະແໜງ ການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້ວາງອອກ. (ມີເອກະສານແນະນຳສະເພາະ).

## VIII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ

ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້ຂັ້ນບ້ານເພື່ອໃຫ້ແຜນການດັ່ງກ່າວຖືກຈັດຕັ້ງປະຈັດຕັ້ງປະຕິບັດໄປຕາມແຜນທີ່ວາງໄວ້ໃຫ້ມີປະສິດທິຜົນ, ອຳນາດການປົກຄອງເມືອງ, ອຳນາດການປົກຄອງບ້ານ ແລະ ຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ຂອງບ້ານ ຕ້ອງໄດ້ເຮັດໜ້າທີ່ເປັນຜູ້ຊີ້ນຳ - ນຳພາ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນດັ່ງນີ້:

### 8.1. ການຈັດຕັ້ງ

ຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ຂອງບ້ານຕ້ອງປະກອບມີ: ບຸກຄົນທີ່ມີໜ້າທີ່ຕຳແໜ່ງທີ່ສຳຄັນໃນອຳນາດການປົກຄອງບ້ານ, ຮັບຜິດຊອບວຽກງານຊີ້ນຳ, ກວດກາ ແລະ ບໍລິຫານຕ່າງໆ (ເອກະສານຊ້ອນທ້າຍທີ 07)

### 8.2. ບຸກຄະລາກອນ

ນາຍບ້ານ, ຕາງໜ້າອົງການຈັດຕັ້ງມະຫາຊົນ (ຊາວໜຸ່ມ, ແມ່ຍິງ ແລະ ແນວໂຮມ), ກອງຫຼອນ, ປ້ອງກັນ, ປ່າໄມ້ບ້ານ ແລະ ທີ່ດິນບ້ານ.

### 8.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ

- ຈັດຕັ້ງປະຕິບັດມະຕິຄຳສັ່ງ, ແຈ້ງການ ຂອງເມືອງ, ແຂວງ ກ່ຽວກັບການຄຸ້ມຄອງນຳໃຊ້ທີ່ດິນແລະ ປ່າໄມ້.
- ຈັດຕັ້ງປະຕິບັດການກວດກາ, ຕິດຕາມ, ວັດແທກຂອບເຂດດິນທຳການຜະລິດ ໃຫ້ແຕ່ລະຄອບຄົວ,ຊີ້ນຳແຕ່ລະຄອບຄົວໃນການພັດທະນາທີ່ດິນ, ສົ່ງເສີມການປູກພືດເປັນສິນຄ້າ, ຄຸ້ມຄອງ, ປົກປັກຮັກສາ, ປູກໄມ້, ຟື້ນຟູປ່າ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ຢ່າງມີປະສິດທິຜົນ, ຕາມແຜນການ ແລະ ລະບຽບການທີ່ໄດ້ຮັບການອະນຸມັດແລ້ວ ຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
- ໂຄສະນາສຶກສາອົບຮົມກ່ຽວກັບຄວາມສຳຄັນ ແລະ ຄຸນປະໂຫຍດຂອງປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ,ສັດປ່າ, ແຫຼ່ງນ້ຳ ແລະ ສິ່ງແວດລ້ອມທຳມະຊາດ ໃຫ້ປະຊາຊົນໃນບ້ານຂອງຕົນເຂົ້າໃຈ.
- ຕິດຕາມ, ເກັບກຳສະພາບການປ່ຽນແປງຂອງປ່າໄມ້, ສິ່ງແວດລ້ອມ ແລະ ສະພາບການເຄື່ອນໄຫວວຽກງານປ່າໄມ້ ໃນຂອບເຂດບ້ານຂອງຕົນ ແລ້ວລາຍງານໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
- ຈັດຕັ້ງປະຊາຊົນຄຸ້ມຄອງ ປ່າໄມ້ ແລະ ທີ່ດິນປ່າໄມ້ໃນຂອບເຂດບ້ານຂອງຕົນ
- ສ້າງລະບຽບການສະເພາະໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້, ແຫຼ່ງນ້ຳ, ສັດນ້ຳ-ສັດປ່າ ແລະ ສິ່ງແວດລ້ອມທຳມະຊາດ ພາຍໃນບ້ານໃຫ້ຖືກຕ້ອງກັບສະພາບຕົວຈິງຂອງບ້ານຕົນ.
- ສົ່ງເສີມການເຮັດອາຊີບກະສິກຳຄົງທີ່ ໃຫ້ປະຊາຊົນພາຍໃນບ້ານ ແນໃສ່ຈຳກັດ ແລະ ກ້າວໄປເຖິງບ່ອນ ຍຸດຕິການຕັດໄມ້ທຳລາຍປ່າ ແລະ ເພື່ອປົກປັກຮັກສາສິ່ງແວດລ້ອມທຳມະຊາດ.

## 8.4. ຂອບເຂດສິດ

- ກວດກາການອະນຸມັດຕັດໄມ້ ຂອງປະຊາຊົນພາຍໃນບ້ານຕົນ ຕາມລະບຽບການ.
- ຕິດຕາມກວດກາ ແລະ ສະກັດກັ້ນ ການລ່າເນື້ອ ແລະ ຊື້ຂາຍສັດປ່າ ທີ່ບໍ່ຖືກຕ້ອງຕາມລະບຽບການ.
- ຕ້ານ ແລະ ສະກັດກັ້ນ ການເຄື່ອນໄຫວທີ່ມີຜົນກະທົບຕໍ່ຊັບພະຍາກອນປ່າໄມ້, ແຫຼ່ງນ້ຳ ແລະ ສິ່ງແວດລ້ອມ ເຊັ່ນ: ການທຳລາຍຕໍ່ຊັບພະຍາກອນປ່າໄມ້, ສັດນ້ຳ, ສັດປ່າ ແລະ ແຫຼ່ງນ້ຳຢ່າງທັນການ.
- ເຂົ້າຮ່ວມ ແລະ ປະກອບຄຳເຫັນຕໍ່ກອງປະຊຸມຕາມການເຊື້ອເຊີນ.
- ຮຽກປະຊຸມ, ຄົ້ນຄວ້າ, ແກ້ໄຂບັນຫາຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງນຳໃຊ້ທີ່ດິນ ແລະ ປ່າໄມ້ .
- ປະຕິບັດສິດອື່ນໆ ຕາມຂັ້ນເທິງມອບໝາຍສະເພາະ ຫຼື ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

## 8.5. ລະບອບແບບແຜນວິທີເຮັດວຽກ

- ແບບແຜນວິທີເຮັດວຽກຂອງຄະນະຮັບຜິດຊອບວາງແຜນຈັດສັນ ແລະ ຄຸ້ມຄອງນຳໃຊ້ທີ່ດິນຂອງບ້ານມີດັ່ງນີ້:
- ປະຕິບັດຫຼັກການເຮັດວຽກແບບລວມສູນປະຊາທິປະໄຕ,ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນ
- ມີແຜນການ, ແຜນກິດຈະກຳລະອຽດ, ການແກ້ໄຂວຽກງານຢ່າງມີຈຸດສຸມ, ເປົ້າໝາຍ ແລະ ຄາດໝາຍ.
- ການເຄື່ອນໄຫວວຽກງານ ບົນພື້ນຖານການປະສານສົມທົບ ແລະ ມີຄວາມເປັນເອກະພາບພາຍໃນ.
- ທຸກໜ້າວຽກຕ້ອງມີການສຳຫຼວດ, ກວດກາ, ສະຫຼຸບຖອດຖອນບົດຮຽນ ຕີລາຄາຜົນໄດ້ ຜົນເສຍລວມທັງ ສາເຫດຕ່າງໆຢ່າງຖືກຕ້ອງກັບສະພາບຕົວຈິງ, ປະຕິບັດລະບອບການລາຍງານເປັນປະຈຳ.

## 8.6. ການຕິດຕາມກວດກາ

ການຕິດຕາມກວດກາຈັດຕັ້ງປະຕິບັດ ແມ່ນຈະຕ້ອງໄດ້ດຳເນີນຫລັງຈາກສຳເລັດວຽກວາງແຜນການນຳໃຊ້ທີ່ດິນໄດ້ມີການຈັດພິທີປະກາດມອບຮັບ. ເພື່ອເປັນການກະຕຸ້ນ ແລະ ເຕືອນໃຫ້ຊາວບ້ານໃນການປະຕິບັດແຜນການນຳໃຊ້ທີ່ດິນ ແລະ ປ່າໄມ້ທີ່ໄດ້ປະກາດຮັບຮອງເອົາ, ເພື່ອກວດກາເບິ່ງຄວາມຖືກຕ້ອງ, ຊຶ່ງຖ້າຫາກຜົນການຕິດຕາມກວດກາອອກມາໃນທາງບວກແຜນການດັ່ງກ່າວກໍ່ຈະບໍ່ຖືກດັດແປງແກ້ໄຂແຕ່ຖ້າຫາກບໍ່ຖືກຕ້ອງກັບແຜນການດັ່ງກ່າວ ແມ່ນຈະຕ້ອງໄດ້ຖືກພິຈາລະນາຄືນ ແລະ ດັດແປງ ເພື່ອໃຫ້ອີງການ ຈັດຕັ້ງດັ່ງກ່າວນີ້ສາມາດເຄື່ອນໄຫວໄດ້ດີ ໃນໄລຍະທຳອິດຂອງການດຳເນີນການກວດກາ ແມ່ນຍັງຕ້ອງການຄວາມຊ່ວຍ ເຫລືອທັງທາງດ້ານວິຊາການ, ງົບປະມານຈາກພາກສ່ວນກ່ຽວຂ້ອງເຊັ່ນ: ແຂວງ , ເມືອງ, ກຸ່ມບ້ານຕະຫລອດຮອດໂຄງ ການທີ່ກ່ຽວຂ້ອງ.

# ເອກະສານອ້າງອີງ


1. ກົດໝາຍວ່າດ້ວຍທີ່ດິນ, ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019
2. ກົດໝາຍວ່າດ້ວຍທາງຫຼວງ ເລກທີ 04/99ສພຊ, ລົງວັນທີ 3 ເມສາ 1999
3. ກົດໝາຍ ວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບປັບປຸງ, ເລກທີ 23/ສພຊ, ລົງວັນທີ 11 ພຶດ ສະພາ 2017, 2020 ແລະ 2022
4. ກົດໝາຍວ່າດ້ວຍປ່າໄມ້, ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019
5. ດຳລັດວ່າດ້ວຍປ່າສະຫງວນ, ສະບັບເລກທີ 219/ລບ, ລົງວັນທີ 20 ມິຖຸນາ 2023.
6. ດຳລັດວ່າດ້ວຍ ທີ່ດິນບໍລິເວນນ້ຳ ສະບັບເລກທີ 350/ລບ, ລົງວັນທີ 13 ພະຈິກ 2023
7. ແຈ້ງການຂອງກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ 1585/ພບ.ຫກ,ລົງວັນທີ 12 ມັງກອນ 2018
8. ຄູ່ມືແນະນຳກ່ຽວກັບສ້າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ, ສະບັບເລກທີ 2191/ກຊສ.ກທດ, ລົງວັນທີ 12 ພຶດສະພາ 2022

ຈັດຕັ້ງປະຕິບັດໂດຍ:

ສະໜັບສະໜູນໂດຍ:

ໂຄງການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ

The Intergrated Water Resource Management and Ecosystem-based Adaptation in the Xe Bang Hieng River Basin and Luang Prabang City Project

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ

## "ບ້ານເມືອງໂຮງ" ເມືອງ ຊົນນະບູລີ ແຂວງ ສະຫວັນນະເຂດ




ຕາຕະລາງ ເນື້ອທີ່ຈັດສັນການນຳໃຊ້ທີ່ດິນ

| ລ/ດ | ປະເພດທີ່ດິນ | ລະຫັດທີ່ດິນ | ສີ | ເນື້ອທີ່ (ເຮັກຕາ) | ເປີເຊັນ % |
|---|---|---|---|---|---|
| I | **ທີ່ດິນກະສິກຳ** | **AZ** | | **390.85** | **17.17** |
| 1 | ນາ | AZ_1 | | 378.62 | 16.63 |
| 2 | ໜອງປາ | AZ_6 | | 12.23 | 0.54 |
| II | **ທີ່ດິນປຸກສ້າງ** | **BZ** | | **110.26** | **4.84** |
| 1 | ດິນປຸກສ້າງປູກດິນ | BZ_1 | | 40.48 | 1.78 |
| 2 | ໂຮງຮຽນ | BZ_2 | | 13.51 | 0.59 |
| 3 | ທີ່ດິນແຂະຂະຫຍາຍປຸກສ້າງ | BZ_3 | | 50.61 | 2.22 |
| | ບ່ອນຕັ້ງສູນສັກພິງໄພພິບັດ | BZ_3 | | 5.18 | 0.23 |
| | ສະໜາມຂີ້ເຫຍື້ອ | BZ_3 | | 0.47 | 0.02 |
| III | **ທີ່ດິນວັດທະນະທຳ** | **CZ** | | **20.83** | **0.92** |
| 1 | ວັດ | CZ_1 | | 2.65 | 0.12 |
| 2 | ປ່າມະເຫສັກ | CZ_2 | | 4.76 | 0.21 |
| | ປ່າຊ້າ | CZ_2 | | 13.42 | 0.59 |
| IV | **ທີ່ດິນປ່າໄມ້** | **F** | | **1615.96** | **70.99** |
| 1 | ປ່າຊົມໃຊ້ | F_1 | | 1018.87 | 44.76 |
| 2 | ປ່າປ້ອງກັນຫ້ວຍພະແລງ | F_3 | | 131.03 | 5.76 |
| | ປ່າປ້ອງກັນຫ້ວຍລະແກງ | F_3 | | 72.06 | 0.74 |
| | ປ່າປ້ອງແຄມເຊບັ້ງຫຽງ | F_3 | | 394.00 | 0.29 |
| V | **ທີ່ດິນໂຍທາທິການ ແລະ ຂົນສົ່ງ** | **R** | | **16.77** | **0.74** |
| 1 | ທາງດິນແດງ | R_2 | | 10.08 | 0.44 |
| | ເສັ້ນທາງຈະຕັດໃໝ່ | R_2 | | 6.69 | 0.29 |
| VI | **ທີ່ດິນບໍລິເວນນ້ຳ** | **W** | | **121.71** | **5.35** |
| 1 | ຫ້ວຍ | W_1 | | 4.51 | 0.20 |
| | ຫ້ວຍພະແລງ | W_1 | | 1.60 | 0.07 |
| | ຫ້ວຍລະແກງ | W_1 | | 1.44 | 0.06 |
| | ນໍ້າເຊບັ້ງຫຽງ | W_1 | | 71.65 | 3.15 |
| 2 | ໜອງຮັບນ້ຳ | W_3 | | 7.50 | 0.33 |
| 3 | ເຂດສະຫງວນແຄມເຊບັ້ງຫຽງ | W_4 | | 35.01 | 1.54 |
| | **ລວມເນື້ອທີ່** | | | **2276.39** | **100.00** |
| | **ລວງຮອບທັງໝົດ** | | | **26.15 Km** | |

ກະກຽມໂດຍ:

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ

ກັນຍາ 2025

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ

ເຈົ້າເມືອງ ຊົນນະບູລີ

ເລກທີ..518...../ຊບລ

ເມືອງຊົນນະບູລີ, ວັນທີ.2..10..2025

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້

## ແຜນຈັດສັນການນຳໃຊ້ທີ່ດິນບ້ານ ເມືອງໂຮງ, ເມືອງຊົນນະບູລີ, ແຂວງສະຫວັນນະເຂດ

- ອີງຕາມ ກົດໝາຍ ວ່າດ້ວຍ ປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກທີ IV ໝວດທີ 4, ມາດຕາ 40 ຂໍ້ທີ 7;
- ອີງຕາມ ກົດໝາຍ ວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານເມືອງໂຮງ, ເມືອງຊົນນະບູລີ, ແຂວງສະຫວັນນະເຂດ ສະບັບ ເດືອນ ກັນຍາ 2025;
- ອີງຕາມ ໜັງສືສະເໜີ ຂອງ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງຊົນນະບູລີ, ສະບັບເລກທີ 188 /ຫຊສ.ຊບລ, ວັນທີ 30 ກັນຍາ 2025.

### ເຈົ້າເມືອງຊົນນະບູລີ ຕົກລົງ:

ມາດຕາ 1 ຮັບຮອງ ແລະ ປະກາດໃຊ້ ແຜນຈັດສັນການນຳໃຊ້ທີ່ດິນ ຂອງ ບ້ານເມືອງໂຮງ, ເມືອງຊົນນະບູລີ, ແຂວງສະຫວັນນະເຂດ ສະບັບເດືອນ ກັນຍາ 2025.

ມາດຕາ 2 ມອບໃຫ້ຫ້ອງການທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຊີ້ນຳການຈັດຕັ້ງປະຕິບັດໄປຕາມແຜນທີ່ກຳນົດໄວ້ ແລະ ແຜນສະບັບນີ້ເປັນນິຕິກຳຄຸ້ມຄອງເພື່ອຮັບປະກັນສິດໃນການນຳໃຊ້ໃນອານາຄົດ.

ມາດຕາ 3 ອົງການປົກຄອງບ້ານ, ກຸ່ມບ້ານ ແລະ ປະຊາຊົນບັນດາເຜົ່າຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ, ການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ແຜນການດັ່ງກ່າວໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ມີຄວາມຮັບປະ ກັນ ທາງດ້ານການປົກປັກຮັກສາສະພາບແວດລ້ອມ, ລະບົບນິເວດກະສິກຳ ແລະ ປ່າໄມ້, ທຸກການປ່ຽນ ແປງ ຫຼື ການຫັນປ່ຽນປະເພດການນຳໃຊ້ທີ່ດິນຈະຕ້ອງໄດ້ຜ່ານການພິຈາລະນາ ແລະ ອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງຕາມລະບຽບກົດໝາຍກຳນົດ.

ມາດຕາ 4 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮກ. ເຈົ້າເມືອງຊົນນະບູລີ

ສຸບິນ ຫຼວງດ້ວງ

Souhinh LUANGDUANG

## ຄໍານໍາ

ເພື່ອຈັດຕັ້ງຜັນຂະຫຍາຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທີ່ດິນສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019, ມະຕິຂອງ ສະພາແຫ່ງຊາດ ເລກທີ 098/ສພຊ, ລົງວັນທີ 28 ມິຖຸນາ 2018 ວ່າດ້ວຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030. ພ້ອມທັງເປັນການຈັດຕັ້ງປະຕິບັດຄູ່ມືແນະນໍາກ່ຽວກັບການສ້າງແຜນຈັດສັນທີ່ດິນຂັ້ນບ້ານ ສະບັບປີ 2022 ແລະ ເປັນບ່ອນອີງໃນການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານຈັດສັນທີ່ດິນຂັ້ນບ້ານໃຫ້ມີປະສິດທິພາບ, ປະສິດທິຜົນ ແນໃສ່ຄຸ້ມຄອງ, ປົກປັກຮັກສາ, ພັດທະ ນາ ແລະ ນໍາໃຊ້ທີ່ດິນ ລວມທັງປົກປັກຮັກສາສິ່ງແວດລ້ອມ, ພ້ອມທັງເຮັດໃຫ້ທີ່ດິນມີມູນຄ່າ ເພີ່ມຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ.

ແຜນຈັດສັນການນໍາໃຊ້ທີ່ດິນ ສະບັບນີ້ ຈະເປັນເອກະພສານພື້ນຖານສໍາຄັນ ປະກອບດ້ວຍ 8 ພາກ ແລະ ສ້າງຂຶ້ນບົນພື້ນຖານຄວາມຮຽກຮ້ອງຕ້ອງການທາງດ້ານວິຊາການໃນການສ້າງແຜນທີ່ການນໍາໃຊ້ທີ່ດິນຂັ້ນບ້ານຂຶ້ນ ຊຶ່ງໃນນັ້ນລວມມີ ຫຼັກການ, ວິທີການທີ່ຈໍາເປັນ ຊຶ່ງມີບາດກ້າວ ແລະ ຂັ້ນຕອນໃນການສໍາຫຼວດ, ການຈັດແບ່ງເຂດທີ່ດິນ, ການຈັດປະເພດທີ່ດິນໃນພາກປະຕິບັດຕົວຈິງ ແລະ ໃຫ້ຖືກຕ້ອງຕາມເນື້ອໃນຂອງກົດໝາຍ, ດໍາລັດ ແລະ ລະບຽບການ ຕ່າງໆ ທີ່ພົວພັນກັບວຽກງານດັ່ງກ່າວນີ້ ໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ມີປະສິດທິຜົນສູງ ຂຶ້ນເລື້ອຍໆ. ແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານ ຈະມີການທົບທວນ ແລະ ປັບປຸງແຕ່ລະໄລຍະ ເພື່ອລາຍງານສະພາບບັນຫາຂອງການນໍາໃຊ້ທີ່ດິນໃນປະຈຸບັນ ແລະ ທ່າອ່ຽງໃນອານາຄົດໃຫ້ສັງຄົມ ແລະ ພາກສ່ວນກ່ຽວຂ້ອງຮັບຮູ້ໂດຍຮວບຮວມເອົາຜົນການສໍາຫຼວດ, ເກັບກໍາຂໍ້ມູນການນໍາໃຊ້ທີ່ດິນ ແລະ ສັງລວມເອົາບົດລາຍງານຕ່າງໆຂອງພາກສ່ວນທີ່ກ່ຽວຂ້ອງ.

ຕາງໜ້າຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ ແຂວງສະຫວັນນະເຂດ ຂໍສະແດງຄວາມຂອບໃຈເປັນຢ່າງຍິ່ງມາຍັງຄະນະຮັບຜິດຊອບ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ສຸມເຫື່ອແຮງ, ສະຕິປັນຍາ ແລະ ຄວາມເປັນເຈົ້າການປະກອບສ່ວນໃນການແບ່ງປັນຄວາມຮູ້ ແລະ ຂໍ້ມູນຂ່າວສານໃນການສ້າງແຜນຈັດສັນການນໍາໃຊ້ທີ່ດິນ ສະບັບນີ້. ພິເສດຂໍສະແດງຄວາມຂອບໃຈ ມາຍັງ ກົມຊັບພະຍາກອນນໍ້າ, ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ອົງການປົກຄອງເມືອງຊົນນະບູລີ ພາຍໃຕ້ ໂຄງການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບເວດ (IWRM-EbA Project) ທີ່ໄດ້ຮັບການສະໜັບສະໜູນຈາກ ກອງທຶນສິ່ງແວດລ້ອມໂລກ (GEF) ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ທີ່ໄດ້ປະກອບສ່ວນດ້ານວິຊາການ ແລະ ທຶນຮອນເຂົ້າໃນການສ້າງແຜນຈັດສັນການນໍາໃຊ້ທີ່ດິນສະບັບນີ້ ແລະ ຫວັງຢ່າງຍິ່ງວ່າບັນດາທ່ານຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດແຜນດັ່ງກ່າວນີ້ໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ.

ທີ່ ເມືອງຊົນນະບູລີ, ວັນທີ 29 ກັນຍາ2025

**ຫົວໜ້າຫ້ອງການ**

ຫ້ອງການ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເມືອງຊົນນະບູລີ

ພູດົງ ວົງດາຣາສິນ

# ສັງລວມຫຍໍ້

ບ້ານ ເມືອງໂຮງ ຕັ້ງຫ່າງຈາກເທດສະບານເມືອງ ຊົນນະບູລີ ໄປທາງທາງທິດຕາເວັນອອກຊຽງໃຕ້ຂອງເມືອງ, ມີໄລຍະທາງແຕ່ປະມານ 37 ກິໂລແມັດ, ມີລະດັບຄວາມສູງ ສະເລ່ຍ 152 ຫາ 172 ແມັດ ທຽບໃສ່ລະດັບນໍ້າທະເລ, ມີເນື້ອທີ່ທັງໝົດ ມີ 2,276.39 ເຮັກຕາ ມີເຊິ່ງມີເຂດແດນຕິດຈອດກັບບັນດາບ້ານຂອງເມືອງຊົນນະບູລີ ແລະ ບັນດາບ້ານຂອງເມືອງໃກ້ຄຽງ ຄື: ທິດເໜືອ ຕິດກັບ ບ້ານ ໜອງສອງຫ້ອງ ແລະ ບ້ານດົງໜອງແຄນ ເມືອງຊົນນະບູລີ, ທິດໃຕ້ ຕິດກັບ ບ້ານດອນຂາວ ເມືອງທ່າປາງທອງ, ທິດຕາເວັນອອກ ຕິດກັບ ບ້ານດົງໜອງແຄນ ເມືອງຊົນນະບູລີ ແລະ ທິດຕາເວັນຕົກ ຕິດກັບ ບ້ານໜອງສອງຫ້ອງ ເມືອງຊົນນະບູລີ ແລະ ບ້ານນາທັງ ເມືອງສອງຄອນ.

ບ້ານ ເມືອງໂຮງ ມີ 1 ຊົນເຜົ່າຄື: ຊົນເຜົ່າ ລາວລຸ່ມ ນັບຖື ສາດສະໜາ ພຸດ ປະກອບ ມີ 172 ຫຼັງຄາເຮືອນ, ມີ 146 ຄອບຄົວ ມີພົນລະເມືອງທັງໝົດ 1,077 ຄົນ, ຍິງ 537 ຄົນ. ຊາວບ້ານປະກອບອາຊີບກະສິກຳເປັນຕົ້ນຕໍຄື: ແມ່ນຢຶດຖືເອົາການເຮັດນາ, ປູກພືດ ແລະ ສຳຮອງລົງມາແມ່ນລ້ຽງສັດ ແລະ ອື່ນໆ. ແຫຼ່ງລາຍຮັບຕົ້ນຕໍຂອງປະຊາຊົນພາຍໃນບ້ານແມ່ນມາຈາກ 2 ແຫຼ່ງລາຍຮັບຕົ້ນຕໍຄື: ມາຈາກການເຮັດນາ ແລະ ສຳຮອງລົງມາແມ່ນມາຈາກການຫາເຄື່ອງປ່າຂອງດົງ ແລະ ອື່ນໆ.

ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ ບ້ານເມືອງໂຮງ ປະກອບມີ 6 ປະເພດການນຳໃຊ້ຫຼັກ ຊຶ່ງປະກອບມີດັ່ງນີ້: ເຂດທີ່ດິນກະສິກຳ ມີປະມານ 390.85 ເຮັກຕາ ກວມເອົາ 17.17% (ໃນນີ້ ດິນນາ ແລະ ໜອງປາ), ເຂດດິນປຸກສ້າງ ມີເນື້ອທີ່ 110.26 ເຮັກຕາ ກວມເອົາ 4.84% (ໃນນີ້, ມີດິນປຸກສ້າງບຸກຄົນ, ໂຮງຮຽນ, ດິນແຮ່ຂະຫຍາຍປຸກສ້າງ, ດິນຕັ້ງສູນພັກພິງໄພພິບັດ ແລະ ສະໜາມຂີ້ເຫຍື້ອຍ), ທີ່ດິນວັດທະນະທຳ ມີເນື້ອທີ່ 20.83 ເຮັກຕາ ກວມເອົາ 0.92% (ໃນນີ້, ມີວັດ, ປ່າມະເຫສັກ ແລະ ປ່າຊ້າ), ເຂດດິນປ່າໄມ້ ມີເນື້ອທີ່ 1,615.96 ເຮັກຕາ ກວມເອົາ 70.99% (ໃນນີ້ມີ ປ່າຊົມໃຊ້, ປ່າປ້ອງກັນຫ້ວຍພະແລງ, ປ່າປ້ອງກັນຫ້ວຍລະແກງ ແລະ ປ່າແຄມເຊບັ້ງຫຽງ), ທີ່ດິນໂຍທາທິການ ແລະ ຂົນສົ່ງ ມີເນື້ອທີ່ 16.77 ເຮັກຕາ. ກວມເອົາ 0.74% (ໃນນີ້, ເສັ້ນທາງດິນແດງ ແລະ ເສັ້ນທາງຈະຕັດໃໝ່) ແລະ ທີ່ດິນບໍລິເວນນໍ້າ ມີເນື້ອທີ່ 121.71 ເຮັກຕາ ກວມເອົາ 5.35% (ໃນນີ້, ຫ້ວຍ, ຫ້ວຍພະແລງ, ຫ້ວຍລະແກງ, ນໍ້າເຊບັ້ງຫຽງ, ໜອງຮັບນໍ້າ ແລະ ເຂດສະຫງວນແຄມເຊບັ້ງຫຽງ).

ພາຍຫຼັງຖືກຮັບຮອງ ແລະ ປະກາດນຳໃຊ້ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານດັ່ງກ່າວ ຈະໄດ້ລິເລີ່ມວຽກການຕິດຕາມ-ກວດກາ ຄວາມຖືກຕ້ອງເໝາະສົມຕາມແຜນຈັດສັນທີ່ວາງໄວ້. ເຊິ່ງພາກສ່ວນຮັບຜິດຊອບຫຼັກແມ່ນຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ຮ່ວມກັບຄະນະກຳມະການອະນຸລັກຂັ້ນບ້ານ ເຊິ່ງຈະໄດ້ມີແບບແຜນໃນການເຄື່ອນໄຫວກວດກາ ແລະ ລາດຕະເວນໃນເຂດເປົ້າໝາຍ ຫຼື ພື້ນທີ່ມີຄວາມສຳຄັນໃນວຽກງານອະນຸລັກ ເຊັ່ນ: ເຂດວັງສະຫງວນສັດນໍ້າ, ເຂດປ່າໄມ້ຫວງຫ້າມເດັດຂາດ ແລະ ເຂດອື່ນໆທີ່ມີການຕິດຕັ້ງຫຼັກໝາຍບອກຂອບເຂດຫວງຫ້າມ. ນອກຈາກນັ້ນ, ຍັງກວມລວມໄປເຖິງການກວດກາການນຳໃຊ້ເຄື່ອງມືແບບດັບສູນໃນການຫາ ການລ່າສັດນໍ້າ - ສັດປ່າ ແລະ ການກະທຳທີ່ເປັນການສູນເສຍຕໍ່ສະພາບແວດລ້ອມຫຼາຍເກີນໄປ ເປັນຕົ້ນ.

# ສາລະບານ


ຄຳນຳ ……………………………………………………………………………….i

ສັງລວມຫຍໍ້......................................................................................................ii

I. ຈຸດປະສົງ ແລະ ລະດັບຄາດໝາຍ .................................................................... 1

1.1 ຈຸດປະສົງ........................................................................................................ 1

1.2 ລະດັບຄາດໝາຍ ................................................................................................ 1

1.3 ຂັ້ນຕອນໃນການຈັດຕັ້ງປະຕິບັດ........................................................................ 2

1.4 ວິທີການໃນການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Program ຕ່າງໆເຂົ້າຊ່ວຍ ................... 2

II. ສະພາບລວມຂອງບ້ານ ........................................................................................ 3

2.1 ປະຫວັດຄວາມເປັນມາຂອງບ້ານ ............................................................................ 3

2.2 ທີ່ຕັ້ງພູມສັນຖານ.............................................................................................. 3

2.3 ດ້ານການປົກຄອງ ............................................................................................. 3

2.4 ດ້ານເສດຖະກິດ - ສັງຄົມ.................................................................................... 4

2.5 ດ້ານວັດທະນະທຳ ແລະ ຮີດຄອງປະເພນີ .............................................................. 4

III. ສະພາບການນຳໃຊ້ທີ່ດິນປະຈຸບັນ ...................................................................... 4

3.1 ການກຳນົດຈຸດທີ່ຕັ້ງຂອງບ້ານ ............................................................................. 4

3.2 ເຂດຄຸ້ມຄອງຂອງບ້ານ ........................................................................................ 4

3.3 ການນຳໃຊ້ທີ່ດິນໃນປະຈຸບັນຂອງບ້ານ.................................................................... 7

IV. ການຈັດສັນການນຳໃຊ້ທີ່ດິນ.............................................................................. 8

4.1 ການກຳນົດເຂດທີ່ດິນຂອງບ້ານ ............................................................................ 8

4.1.1 ເຂດທີ່ດິນອະນຸລັກ....................................................................................... 8

4.1.2 ເຂດທີ່ດິນນຳໃຊ້ນຳ ...................................................................................... 8

4.1.3 ຄວາມຮັບຮູ້ໂດຍລວມໃນການສຳຫຼວດຈັດສັນທີ່ດິນ.............................................. 9

4.2 ການກຳນົດປະເພດທີ່ດິນຂອງບ້ານ....................................................................... 10

V. ທ່າແຮງໃນການພັດທະນາທີ່ດິນ .......................................................................... 13

5.1 ທ່າແຮງໃນການພັດທະນາທີ່ດິນຂອງບ້ານ............................................................... 13

5.2 ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານເມືອງໂຮງ.................................. 13

VI. ລະບຽບການຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ ............................. 13

6.1 ການຄຸ້ມຄອງ ທີ່ດິນກະສິກຳ.............................................................................. 14

6.2 ການຄຸ້ມຄອງທີ່ດິນປຸກສ້າງ.................................................................................. 14

6.3 ການຄຸ້ມຄອງ ທີ່ດິນວັດທະນາທຳ ........................................................................ 14

6.4 ການຄຸ້ມຄອງ ທີ່ດິນປ່າໄມ້.................................................................................. 14

6.5 ການຄຸ້ມຄອງ ທີ່ດິນໂຍທາທິການ ແລະ ຂົນສົ່ງ......................................................... 14

6.6 ການຄຸ້ມຄອງ ທີ່ດິນບໍລິເວນນໍ້າ ..... 14
VII. ການຫັນປ່ຽນປະເພດທີ່ດິນ ..... 15
VIII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ..... 15
8.1. ການຈັດຕັ້ງ ..... 15
8.2. ບຸກຄະລາກອນ ..... 15
8.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ..... 15
8.4. ຂອບເຂດສິດ ..... 16
8.5. ລະບອບແບບແຜນວິທີເຮັດວຽກ ..... 16
ເອກະສານອ້າງອີງ ..... 17

## ສາລະບານຕາຕະລາງ


ຕາຕະລາງທີ 1 ດ້ານສາດສະໜາ ..... 4

ຕາຕະລາງທີ 2 ຄ່າພິກັດ GPS (ລະບົບ WGS984 UTM Zone 48) ບ້ານໜອງສອງຫ້ອງ ແລະ ບ້ານດົງໜອງແຄນ, ເມືອງຊົນນະບູລີ ..... 4

ຕາຕະລາງທີ 3 ຄ່າພິກັດ GPS (ລະບົບ WGS984 UTM Zone 48) ບ້ານດອນຂາວ ເມືອງທ່າປາງທອງ ..... 5

ຕາຕະລາງທີ 4 ຄ່າພິກັດ GPS (ລະບົບ WGS984 UTM Zone 48) ບ້ານໜອງສອງຫ້ອງ ເມືອງຊົນນະບູລີ ແລະ ບ້ານນາທັງ ເມືອງສອງຄອນ ..... 5

ຕາຕະລາງທີ 5 ຄ່າພິກັດ GPS (ລະບົບ WGS984 UTM Zone 48) ບ້ານດົງໜອງແຄນ ເມືອງຊົນນະບູລີ ..... 5

ຕາຕະລາງທີ 6 ສັງລວມປະເພດການນຳໃຊ້ທີ່ດິນປະຈຸບັນ ບ້ານເມືອງໂຮງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ ..... 7

ຕາຕະລາງທີ 7 ສັງລວມປະເພດການຈັດສັນທີ່ດິນບ້ານເມືອງໂຮງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ ..... 11

ຕາຕະລາງທີ 8 ສົມທຽບລະຫວ່າງເນື້ອທີ່ການນຳໃຊ້ດິນປະຈຸບັນ ແລະ ເນື້ອທີ່ການຈັດສັນທີ່ດິນ ..... 13

# ສາລະບານຮູບພາບ

ຮູບທີ່ 1 ແຜນທີ່ຂອບເຂດຄຸ້ມຄອງບ້ານເມືອງໂຮງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ ........................... 6
ຮູບທີ່ 2 ແຜນທີ່ການນຳໃຊ້ທີ່ດິນປະຈຸບັນ ບ້ານເມືອງໂຮງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ.................. 8
ຮູບທີ່ 3 ແຜນທີ່ການຈັດສັນທີ່ດິນບ້ານເມືອງໂຮງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ........................... 12

## I. ຈຸດປະສົງ ແລະ ລະດັບຄາດໝາຍ

### 1.1 ຈຸດປະສົງ

- ຈຸດປະສົງຂອງການສໍາຫຼວດວາງແຜນຈັດສັນ ແລະການນໍາໃຊ້ທີ່ດິນ ແມ່ນປັດໃຈຫຼັກທີ່ສໍາຄັນໃນລະບົບການຄຸ້ມຄອງ, ການປົກປັກຮັກສາ,ການພັດທະນາ ແລະການນໍາໃຊ້ທີ່ດິນ ແລະຊັບພະຍາກອນທໍາມະຊາດ,ທັງນີ້ກໍ່ເພື່ອເຮັດໃຫ້ການວາງແຜນຈັດສັນ ແລະ ການວາງແຜນການນໍາໃຊ້ທີ່ດິນໃຫ້ມີການປະສົມປະສານຢ່າງກົມກຽວໂດຍພື້ນ ຖານກັບສະພາບຂອງພື້ນທີ່ໃນແຕ່ລະບ່ອນ ແລະໃຫ້ມີຄວາມດຸ່ນດ່ຽງຂອງຊັບພະຍາກອນທໍາມະຊາດ,ພ້ອມດຽວກັນກໍ່ຕ້ອງໃຫ້ສອດຄ່ອງກັບທິດທາງແຜນການພັດທະນາເສດຖະກິດ-ສັງຄົມຂອງແຕ່ລະເຂດ.
- ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາທີດິນ ແລະ ຊັບພະຍາກອນທໍາມະຊາດອື່ນໆ ໃຫ້ມີຄວາມຍືນຍົງ ໂດຍຕິດພັນກັບການພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ເພື່ອກໍານົດພື້ນທີ່, ເຂດທີ່ເປັນທ່າແຮງກງ່ວກັບເປົ້າໝາຍໃນການນໍາໃຊ້ທີ່ດິນ ແລະ ຊັບພະຍາກອນທໍາມະຊາດອື່ນໆ ແນໃສ່ເຮັດໃຫ້ທີດິນໄດ້ຮັບການພັດທະນາແບບຍືນຍົງ, ເຮັດໃຫ້ທີ່ດິນ ແລະຊັບພະຍາກອນທໍາມະຊາດສາມາດນໍາຜົນປະໂຫຍດສູງສຸດ.
- ເພື່ອຫລຸດຜ່ອນການຈັບຈອງທີ່ດິນ, ການບຸກລຸກທີດິນ ແລະ ປ່າໄມ້ແບບຊະຊາຍ, ການສວຍໂອກາດໂອນເອົາທີ່ດິນຂອງລັດມາເປັນທີ່ດິນສ່ວນບຸກຄົນແລະການອະນຸຍາດໃຫ້ເຊົ່າຫຼືສໍາປະທານທີ່ດິນຂອງລັດທີ່ມີເນື້ອທີ່ກ້ວາງຂວາງ ແລະ ຍາວນານ.
- ເພື່ອຈັດສັນ,ຈັດແບ່ງເຂດ,ຈັດແບ່ງປະເພດທີ່ດິນ ແລະ ສ້າງແຜນທີ່ນໍາໃຊ້ທີ່ດິນແຕ່ລະທ້ອງຖິ່ນ, ໃນຂອບເຂດທົ່ວປະເທດ ແລ້ວນໍາສະເໜີໄປຕາມແຕ່ລະຂັ້ນເພື່ອຮັບຮອງເອົາ.

### 1.2 ລະດັບຄາດໝາຍ

- ເຮັດໃຫ້ມີການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ການນໍາໃຊ້ທີ່ດິນ ແລະ ຊັບພະຍາກອນທໍາມະຊາດ ອື່ນໆ ໃຫ້ມີລະບຽບຫຼັກການຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.
- ສ້າງເປັນແຜນທີ່ກໍານົດຂອບເຂດ ແລະ ປະເພດທີ່ດິນໃນແຕ່ລະທ້ອງຖິ່ນ, ເຂດແຄ້ວນ ແລະ ແຫ່ງຊາດຕາມຫຼັກວິຊາການ ແລະ ລະບຽບກົດໝາຍຊຶ່ງມີຄວາມເປັນເອກະພາບກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນໂດຍອີງຕາມຈຸດພິເສດ, ທ່າແຮງ ແລະ ເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ.
- ເຮັດໃຫ້ບັນດາຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຮັບຮູ້ໄດ້ ແລະ ເຂົ້າໃຈບັນຫາຕ່າງໆ ເພື່ອວາງແຜນໃນການຄຸ້ມຄອງປົກປັກຮັກສາ, ພັດທະນາທີ່ດິນ ແລະ ຊັບພະຍາກອນທໍາມະຊາດຢ່າງຖືກຕ້ອງ ແລະ ມີປະສິດທິຜົນຕາມເປົ້າໝາຍ ແລະ ລະບຽບກົດໝາຍທີ່ວາງອອກ.
- ຈັດຕັ້ງປະຕິບັດບັນດາລະບຽບກົດໝາຍຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງທີ່ດິນ, ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຢ່າງມີປະສິດທິຜົນ.
- ເສີມຂະຫຍາຍຄວາມເປັນເຈົ້າການຂອງປະຊາຊົນບັນດາເຜົ່າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ທີ່ດິນເຂົ້າໃນການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດ - ສັງຄົມໃຫ້ດີຂຶ້ນເປັນກ້າວໆ.

ເພື່ອບັນລຸຕາມຈຸດປະສົງ ແລະ ທິດທາງຍຸດທະສາດທີ່ໄດ້ກ່າວມາຂ້າງເທິງນັ້ນໃນການຈັດຕັ້ງປະຕິບັດແມ່ນ ໃຫ້ທຸກໆພາກສ່ວນ ແລະ ຂະແໜງການທີ່ກ່ຽວຂ້ອງແຕ່ສູນກາງລົງຮອດທ້ອງຖິ່ນໃຫ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງຢ່າງຮອບດ້ານ ໃຫ້ອົງການຄຸ້ມຄອງທີ່ດິນເຊັ່ນວ່າ: ປັບປຸງກົງຈັກການຈັດຕັ້ງ, ປະກອບບຸກຄະລະກອນ, ສະໜອງງົບປະມານ ແລະ ພາຫະນະອຸປະກອນຮັບໃຊ້ຕ່າງໆ ເພື່ອໃຫ້ຈັດຕັ້ງປະຕິບັດວຽກງານການສໍາຫຼວດຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນ, ສ້າງແຜນທີ່ນໍາໃຊ້ທີ່ດິນ ແລະ ວາງແຜນຄຸ້ມຄອງປົກປັກຮັກສາ, ນໍາໃຊ້ທີ່ດິນ ແລະ ຊັບພະຍາກອນທໍາມະ ຊາດ ຢູ່ໃນແຕ່ລະທ້ອງຖິ່ນໄດ້.

### 1.3 ຂັ້ນຕອນໃນການຈັດຕັ້ງປະຕິບັດ

- ຂັ້ນຕອນທີ 1: ກະກຽມສ້າງແຜນການ, ແຜນງານ, ແຜນຄົນ, ແຜນງົບປະມານ ແລະ ແຜນດຳເນີນງານໂຄງການສຳຫຼວດຈັດສັນທີ່ດິນ;
- ຂັ້ນຕອນທີ 2: ກະກຽມສ້າງຕັ້ງຄະນະຊີ້ນຳ, ຄະນະຮັບຜິດຊອບ ແລະ ຄະນະທີມງານວິຊາການຈາກພາກສ່ວນ/ຂະແໜງການທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນທີ່ມີຄວາມຈຳເປັນ;
- ຂັ້ນຕອນທີ 3: ກະກຽມເອກະສານເພື່ອຂໍອະນຸມັດຈາກທ່ານເຈົ້າເມືອງ ເພື່ອຈັດຕັ້ງປະຕິບັດແຜນໂຄງການຕາມແຜນການ, ແຜນດຳເນີນງານໂຄງການທີ່ໄດ້ກຳນົດໄວ້;
- ຂັ້ນຕອນທີ 4: ກະກຽມເອກະສານຂໍ້ຕົກລົງແຕ່ງຕັ້ງຄະນະທີມງານວິຊາການ ເພື່ອຂໍອະນຸມັດໃຫ້ຂັ້ນເທິງພິຈາລະນາຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບ ແລະ ຄະນະທີມງານວິຊາການ;
- ຂັ້ນຕອນທີ 5: ກະກຽມບັນດາເອກະສານຕ່າງໆ ທີ່ກ່ຽວພັນກັບທີ່ດິນເຊັ່ນ: ກົດໝາຍ, ດຳລັດ, ມະຕິ ແລະ ລະບຽບການຕ່າງໆທີ່ນຳໄປເຜີຍແຜ່ໃຫ້ພາກສ່ວນຂະແໜງການທີ່ກ່ຽວຂ້ອງກັບທີ່ດິນ, ບຸກຄົນ,ນິຕິບຸກຄົນ, ບໍລິສັດ ຕະຫຼອດເຖິງປະຊາຊົນຢູ່ໃນແຕ່ລະທ້ອງຖິ່ນເພື່ອໃຫ້ທຸກຄົນຮັບຮູ້ ແລະ ຮັບຊາບກ່ອນ ຫຼື ໄລຍະເວລາຈັດຕັ້ງປະຕິບັດໂຄງການຢູ່ໃນແຕ່ລະບ່ອນ;
- ຂັ້ນຕອນທີ 6: ກະກຽມແບບຟອມການສຳຫຼວດເກັບກຳຂໍ້ມູນການນຳໃຊ້ທີ່ດິນ ແລະ ສະພາບເສດຖະກິດ-ສັງຄົມ ຢູ່ແຕ່ລະບ້ານ ແລະ ເມືອງ;
- ຂັ້ນຕອນທີ 7: ກະກຽມແຜນດຳເນີນງານລະອຽດເພື່ອລົງສຳຫຼວດເກັບກຳຂໍ້ມູນ ໃນການນຳໃຊ້ທີ່ດິນ ແລະ ສະພາບເສດຖະກິດ-ສັງຄົມ.

### 1.4 ວິທີການໃນການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Program ຕ່າງໆເຂົ້າຊ່ວຍ

- ຈັດກອງປະຊຸມຝຶກອົບຮົມດ້ານເຕັກນິກວິຊາການກ່ຽວກັບການນຳໃຊ້ເຄື່ອງມື, ອຸປະກອນ ແລະ ໂປແກຼມຕ່າງໆ ພ້ອມດຽວກັນນັ້ນກໍ່ປຶກສາຫາລືກ່ຽວກັບແຜນວຽກແຜນຄົນ ແລະ ຄັດເລືອກກຸ່ມບ້ານເປົ້າໝາຍ;
- ແຈ້ງການໃຫ້ອຳນາດການປົກຄອງ ບ້ານ-ກຸ່ມບ້ານ ໃຫ້ຮັບຊາບລ່ວງໜ້າກ່ອນເພື່ອກະກຽມບັນດາເອກະ ສານ, ຂໍ້ມູນເສດຖະກິດ-ສັງຄົມ ແລະຂໍ້ມູນໃນການກຳນົດເຂດຄຸ້ມຄອງຂອງບ້ານໃນໄລຍະຜ່ານມາ;
- ເປີດກອງປະຊຸມຂັ້ນບ້ານ-ກຸ່ມບ້ານ ເພື່ອແຈ້ງຈຸດປະສົງ ການຈັດຕັ້ງປະຕິບັດວຽກງານຕໍ່ບ້ານເປົ້າໝາຍ;
- ເຊີນບັນດາອຳນາດການປົກຄອງບ້ານອ້ອມຂ້າງເຂົ້າຮ່ວມ ເພື່ອປຶກສາຫາລືກ່ຽວກັບກຳນົດເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ ແລ້ວສ້າງບົດບັນທຶກຮ່ວມກັນ;
- ລົງສຳຫຼວດເຂດຄຸ້ມຄອງຂອງບ້ານ ແລະ ປະເພດທີ່ດິນຕ່າງໆ ພ້ອມທັງເກັບກຳຂໍ້ມູນເສດຖະກິດ-ສັງຄົມ, ຂໍ້ມູນການນຳໃຊ້ຕອນດິນຂອງປະຊາຊົນພາຍໃນບ້ານ;
- ວິເຄາະ ແລະ ສຶກສາພູມມີປະເທດເພື່ອເປັນບ່ອນອີງໃນການກຳນົດວາງແຜນຈັດສັນການນຳໃຊ້ທີ່ດິນແຕ່ລະປະເພດຂອງບ້ານ;
- ສັງລວມຂໍ້ມູນພາກສະໜາມ ປ້ອນເຂົ້າໃນຄອມພິວເຕີ ແລ້ວສ້າງເປັນແຜນທີ່ ໂດຍນຳໃຊ້ລະບົບ GIS;
- ຮ່າງບົດລາຍງານ ເພື່ອສະເໜີຜ່ານແຜນຈັດສັນທີ່ດິນພ້ອມທັງກຳນົດລະບຽບ ແລະ ມາດຕະການຄຸ້ມຄອງການນຳໃຊ້ທີ່ດິນ;
- ຈັດກອງປະຊຸມສະເໜີຜ່ານແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານເພື່ອຄວາມເປັນເອກະພາບກັບຂະແໜງການ;
- ຜ່ານແຜນການຈັດສັນທີ່ດິນໃຫ້ອຳນາດການປົກຄອງຂັ້ນບ້ານ-ກຸ່ມບ້ານຮັບຮູ້ແລ້ວນຳສະເໜີຂັ້ນເມືອງຄົ້ນຄວ້າພິຈາລະນາຮັບຮອງເອົາ.

# II. ສະພາບລວມຂອງບ້ານ

## 2.1 ປະຫວັດຄວາມເປັນມາຂອງບ້ານ

ບ້ານເມືອງໂຮງ ອີງຕາມການບອກເລົ່າຈາກອຳນາດການປົກຄອງບ້ານໃນເມື່ອກ່ອນ ຍົກຍ້າຍມາແຕ່ ເມືອງນອງ ສາເຫດທີ່ຍົກຍ້າຍມາຍ້ອນບໍ່ມີພື້ນທີ່ທຳການຜະລິດ ຈຶ່ງໄດ້ພາກັນຍົກຍ້າຍມາຕັ້ງຖິ່ນຖານຢູ່ບ້ານເມືອງໂຮງ ຂຶ້ນກັບເມືອງ ພີ້ອງ (ຊື່ເດີມຊົນນະບູລີ) ເບື້ອງຕົ້ນມມີພຽງແຕ່ 5 ຄອບຄົວ ເຊິ່ງເຂດດັ່ງກ່າວແມ່ນຄວາມມີຄວາມອຸດົມສົມບູນໃນການ ຫາຢູ່ຫາກິນ ແລະ ພື້ນທີ່ກໍກວ້າງເໝາະສົມແກ່ການຜະລິດກະສິກຳ ປູກຝັງ ແລະ ລ້ຽງສັດ. ສາເຫດທີ່ໃສ່ຊື່ບ້ານເມືອງ ໂຮງ ຍ້ອນວ່າຜູ້ຍົກຍ້າຍເບື້ອງຕົ້ນ ຍ້ອນມີຫລາຍກຸ່ມຄົນຍົກຍ້າຍມາຕັ້ງຖິ່ນຖານໂຮມກັນ ຕາມຕຳນານທີ່ຜູ້ເຖົ້າແກ່ພາຍ ໃນບ້ານບອກເລົ່າ ຜູ້ພາສ້າງທຳອິກ ແມ່ນພະຍາລິມໂບ (ຄົນຂອມ) ມາຈາກເຂດໜອງຫລວງ ມາຂັບໄລ່ທະຫານສະ ຫຍາມຢູ່ໜອງຮັງກາກົງກັນຂ້າຝາກເຊບັ້ງຫຽງ ຫຼັງຈາກນັ້ນ ກໍໄດ້ຕັ້ງບ້ານຢູ່ແຄມເຊບັ້ງຫຽງ ພາຍຫລັງບ້ານກໍ່ໄດ້ມີການ ຂະຫຍາຍຕົວຂຶ້ນຜູ້ຄົນຈາກຫລາຍທ້ອງຖິ່ນຍົກຍ້າຍເຂົ້າມາຢູ່ຈຶ່ງປ່ຽນຊື່ບ້ານມາເປັນບ້ານເມືອງໂຮງ 146 ຄອບຄົວ.

## 2.2 ທີ່ຕັ້ງພູມສັນຖານ

ບ້ານເມືອງໂຮງ ຕັ້ງຢູ່ທິດຕາເວັນອອກຊຽງໃຕ້ຂອງເມືອງຊົນນະບູລີ ແຂວງສະຫວັນນະເຂດ ຫ່າງຈາກເທດ ສະບານເມືອງປະມານ 37 ກິໂລແມັດ ແລະ ສະພາບພູມີປະເທດຂອງບ້ານພື້ນທີ່ສ່ວນໃຫຍ່ເປັນເຂດຮາບພຽງ, ມີ ລະດັບຄວາມສູງ ສະເລ່ຍ 152 ຫາ 172 ແມັດ ທຽບໃສ່ລະດັບນ້ຳທະເລ, ເປັນເຂດທີ່ມີຊັບພະຍາກອນທຳມະຊາດທີ່ ອຸດົມສົມບູນພໍສົມຄວນ ເຊັ່ນ: ດິນ, ນ້ຳ, ປ່າໄມ້ ແລະ ເຄື່ອງປ່າຂອງດົງ. ນອກນັ້ນ, ຍັງມີສາຍນ້ຳທີ່ໄຫຼຜ່ານເປັນຕົ້ນແມ່ນ ນ້ຳເຊບັ້ງຫຽງ, ຫ້ວຍພະແລງ, ຫ້ວຍລັງກາໃຫຍ່, ຫ້ວຍລັງການ້ອຍ, ຫ້ວຍຍາງ, ຫ້ວຍລະແກນ ເໝາະສົມສຳລັບການ ສ້າງເປັນຝາຍກັກເກັບນ້ຳເພື່ອໃຊ້ຕ້ານແລງ ແລະ ລ້ຽງສັດ.

## 2.3 ດ້ານການປົກຄອງ

ດ້ານປະຊາກອນພາຍໃນບ້ານລວມມີປະຊາກອນທັງໝົດ 1,077 ຄົນ, ຍິງ 537 ຄົນ, ມີ 172 ຫລັງຄາເຮືອນ,ມີ 146 ຄອບຄົວ. ເປັນບ້ານຊົນເຜົ່າລາວລຸ່ມ ມີຮີດຄອງປະເພນີ ແລະ ການນັບຖືພຸດ, ມີບຸນປະເພນີຄື: ..........

ວຽກງານການສຶກສາທີ່ການປະຈຸບັນໃນບ້ານມີໂຮງຮຽນປະຖົມສົມບູນ 03 ຫຼັງ(ນັບທັງອານຸບານ) ຫ້ອງຮຽນ ແມ່ນພຽງພໍກັບຄວາມຕ້ອງການ. ມີຈຳນວນນັກຮຽນ 112 ຄົນ, ຍິງ 58 ຄົນ, ມີຄູສອນ 4 ຄົນ, ຍິງ 3 ຄົນ ຫລັງຈາກ ຮຽນຈົບຊັ້ນປະຖົມ ແມ່ນໄດ້ປະສຶກສາຕໍ່ມັດທະຍົມຕົ້ນ ແລະ ມັດທະຍົມປາຍ ຢູ່ຈຸດສຸມຊະແຍະ.

ວຽກງານສາທາລະນະສຸກບ້ານແມ່ນບໍ່ມີສຸກສາລາໄປບໍລິການສຸກສາລາຈຸດສຸມຊະແຍະ. ໄລຍະທາງປະມານ 8 ກິໂລແມັດ, ປະຊາຊົນໄດ້ຊົມໃຊ້ນ້ຳບາດານ ແລະ ນ້ຳອອກບໍ່ 100% ແລະ ຊົມໃຊ້ວິດຖ່າຍ 5%. ນອກຈາກນັ້ນ, ອີງ ການຈັດຕັ້ງບ້ານໄດ້ລະດົມ ໃຫ້ແຕ່ລະຄອບຄົວປະຕິບັດຫລັກການອານາໄມ 3 ສະອາດ, ລົບລ້າງການປິ່ນປົວຕາມ ຄວາມເຊື່ອຖືໄຊຍະສາດ ແລະ ລະດົມໃຫ້ປະຊາຊົນຫັນມາປິ່ນປົວ ໂດຍໃຊ້ຢາຫລວງ ແລະ ແບບວິທະຍາສາດ, ເດັກນ້ອຍໄດ້ຮັບການສັກຢາ, ປອດຢາກັນພະຍາດ 100%. ຜູ້ຍິງຖືພາໄດ້ຮັບການຝາກທ້ອງ ແລະ ປະຕິບັດຕາມ ຫລັກການແນະນຳຂອງແພດໝໍເປັນປົກກະຕິ ສືບຕໍ່ນຳເອົາບັນດາແຈ້ງການ, ນິຕິກຳຕ່າງໆ ລົງເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນ ໄດ້ຮັບຊາບ ໂດຍສະເພາະແມ່ນ ໂພສະນາການດ້ານສຸຂະພາບ, ການກິນ, ການຢູ່, ຕ້ານພະຍາດແຜ່ລະບາດ, ຖອກທ້ອງ, ໄຂ້ຍຸງ.

### 2.4 ດ້ານເສດຖະກິດ - ສັງຄົມ

ແຫຼ່ງລາຍຮັບຕົ້ນຕໍຂອງປະຊາຊົນພາຍໃນບ້ານແມ່ນມາຈາກ 2 ແຫຼ່ງລາຍຮັບຕົ້ນຕໍຄື: ມາຈາກການເຮັດນາ ແລະ ສໍາຮອງລົງມາແມ່ນມາຈາກການຫາເຄື່ອງປ່າຂອງດົງ ແລະ ອື່ນໆ ການພັດທະນາເສດຖະກິດ-ສັງຄົມແມ່ນມີການຂະຫຍາຍຕົວເພີ້ມຂຶ້ນສາມາດສ້າງລາຍຮັບໃຫ້ແຕ່ລະຄອບຄົບ ເພື່ອໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ ຕາມແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງມີຄອບຄົວທີ່ຫຼຸດພົ້ນອອກຈາກຄວາມທຸກຍາກ 133 ຄອບຄົວ ແລະ ຄອບຄົວທີ່ຍັງບໍ່ທັນພົ້ນທຸກມີ 2 ຄອບຄົວ.

### 2.5 ດ້ານວັດທະນະທໍາ ແລະ ຮີດຄອງປະເພນີ

ປະຊາຊົນບ້ານເມືອງໂຮງ ແມ່ນມີຄວາມສາມັກຄີຮັກແພງເຊິ່ງກັນ ແລະ ກັນທັງພາຍໃນ ແລະ ພາຍນອກ ມີວັດທະນະທໍາ ແລະ ຮີດຄອງປະເພນີອັນດີງາມ ປະຕິບັດຕາມຮີດສິບສອງຄອງສິບສີ່ທີ່ບັນພະບູລຸດຂອງປະຊາຊົນລາວບັນດາເຜົ່າເຄີຍຈັດຕັ້ງປະຕິບັດມາເປັນຕົ້ນແມ່ນ ບູນປີໃໝ່ລາວ ແລະ ອື່ນໆ.

ຕາຕະລາງທີ 1 ດ້ານສາດສະໜາ

| ລ/ດ | ປະເພດຊົນເຜົ່າ | ສາດສະໜາ | ຈໍານວນຄອບຄົວ | ໝາຍເຫດ |
|---|---|---|---|---|
| 1 | ລາວລຸ່ມ | ພຸດ | 146 | |
| ລວມ | | | 146 | |

## III. ສະພາບການນໍາໃຊ້ທີ່ດິນປະຈຸບັນ

### 3.1 ການກໍານົດຈຸດທີ່ຕັ້ງຂອງບ້ານ

ຈຸດທີ່ຕັ້ງຊຶ່ງກໍານົດຈຸດໃຈກາງບ້ານ GPS ມີຄ່າພິກັດ: ເສັ້ນແວງທີ X = 560230 m; ເສັ້ນຂະໜານທີ Y = 1794899 m.

### 3.2 ເຂດຄຸ້ມຄອງຂອງບ້ານ

ບ້ານເມືອງໂຮງປະກອບມີເຂດຄຸ້ມຄອງຕິດກັບ 6 ບ້ານ, ມີລວງຮອບທັງໝົດ = 26.15 ກິໂລແມັດ, ມີເນື້ອທີ່ທັງໝົດ = 2.276 ເຮັກຕາ ຊຶ່ງມີລາຍລະອຽດລຸ່ມນີ້:

- ທິດເໜືອ (N) ຕິດກັບ ບ້ານ ໜອງສອງຫ້ອງ ແລະ ບ້ານດົງໜອງແຄນ ເມືອງຊົນນະບູລີ
- ທິດໃຕ້ (S) ຕິດກັບ ບ້ານດອນຂາວ ເມືອງທ່າປາງທອງ
- ທິດຕາເວັນອອກ (E) ຕິດກັບ ບ້ານດົງໜອງແຄນ ເມືອງຊົນນະບູລີ
- ທິດຕາເວັນຕົກ (W) ຕິດກັບ ບ້ານໜອງສອງຫ້ອງ ເມືອງຊົນນະບູລີ ແລະ ບ້ານນາທັງ ເມືອງສອງຄອນ

ຕາຕະລາງທີ 2 ຄ່າພິກັດ GPS (ລະບົບ WGS984 UTM Zone 48) ບ້ານໜອງສອງຫ້ອງ ແລະ ບ້ານດົງໜອງແຄນ, ເມືອງຊົນນະບູລີ

| ຄ່າພິກັດ GPS (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| ລ/ດ | E | N | Distance(m) | ໝາຍເຫດ |
| 1 | 557471 | 1804099 | | ຫ້ວຍພະແລງຈຸດເຊື່ອມຕໍ່ກັບບ້ານດົງໜອງແຄນ, ສອງຫ້ອງ ກັບ ບ້ານເມືອງໂຮງ. |
| 2 | 561483 | 1794368 | | ເຊບັ້ງຫຽງຈຸດເຊື່ອມຕໍ່ກັບບ້ານ ດົງໜອງແຄນ, ດອນຂາວ ກັບ ບ້ານເມືອງໂຮງ. |
| **ລວມໄລຍະ** | | | **10.711** | |

ແຫຼ່ງຂໍ້ມູນ: ອໍານາດການປົກຄອງບ້ານ ແລະ ການວິເຄາະຂໍ້ມູນທີ່ງານຈັດສັນທີ່ດິນຂັ້ນເມືອງ ປີ 2025

ຕາຕະລາງທີ 3 ຄ່າພິກັດ GPS (ລະບົບ WGS984 UTM Zone 48) ບ້ານດອນຂາວ ເມືອງທ່າປາງທອງ

| ຄ່າພິກັດ GPS (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| ລ/ດ | E | N | Distance (m) | ໝາຍເຫດ |
| 1 | 561483 | 1794368 | | ເຊບັ້ງຫຽງຈຸດເຊື່ອມຕໍ່ກັບບ້ານ ດອນຂາວ, ດົງໜອງແຄນ ກັບ ບ້ານເມືອງໂຮງ. |
| 2 | 556408 | 1797917 | | ເຊບັ້ງຫຽງຈຸດເຊື່ອມຕໍ່ກັບບ້ານ ດອນຂາວ, ນາທັງ ກັບ ບ້ານເມືອງໂຮງ. |
| **ລວມໄລຍະ** | | | **7.925** | |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະຂໍ້ມູນທີມງານຈັດສັນທີ່ດິນຂັ້ນເມືອງ ປີ 2025

ຕາຕະລາງທີ 4 ຄ່າພິກັດ GPS (ລະບົບ WGS984 UTM Zone 48) ບ້ານໜອງສອງຫ້ອງ ເມືອງຊົນນະບູລີ ແລະ ບ້ານນາທັງ ເມືອງສອງຄອນ

| ຄ່າພິກັດ GPS (ລະບົບ WGS 1984 UTM Zone 48 ) | | | | |
|---|---|---|---|---|
| ລ/ດ | E | N | Distance (m) | ໝາຍເຫດ |
| 1 | 555640 | 1800198 | | ເຊບັ້ງຫຽງຈຸດເຊື່ອມຕໍ່ກັບບ້ານນາທັງ, ດອນຂາວ ກັບ ບ້ານເມືອງໂຮງ. |
| 2 | 557471 | 1804099 | | ສາຍຫ້ວຍຈຸດເຊື່ອມຕໍ່ກັບບ້ານ ນາທັງ, ສອງຫ້ອງ ກັບ ບ້ານເມືອງໂຮງ. |
| **ລວມໄລຍະ** | | | **2.417** | |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະຂໍ້ມູນທີມງານຈັດສັນທີ່ດິນຂັ້ນເມືອງ ປີ 2025

ຕາຕະລາງທີ 5 ຄ່າພິກັດ GPS (ລະບົບ WGS984 UTM Zone 48) ບ້ານດົງໜອງແຄນ ເມືອງຊົນນະບູລີ

| ຄ່າພິກັດ GPS (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| ລ/ດ | E | N | Distance (m) | ໝາຍເຫດ |
| 1 | 557471 | 1804099 | | ສາຍຫ້ວຍຈຸດເຊື່ອມຕໍ່ກັບບ້ານສອງຫ້ອງ, ນາທັງ ກັບ ບ້ານເມືອງໂຮງ. |
| 2 | 557471 | 1804099 | | ສາຍຫ້ວຍຈຸດເຊື່ອມຕໍ່ກັບບ້ານສອງຫ້ອງ, ດົງໜອງແຄນ ກັບ ບ້ານເມືອງໂຮງ. |
| **ລວມໄລຍະ** | | | **5.106** | |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະຂໍ້ມູນທີມງານຈັດສັນທີ່ດິນຂັ້ນເມືອງ ປີ 2025




ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025

ຮູບທີ່ 1 ແຜນທີ່ຂອບເຂດຄຸ້ມຄອງບ້ານເມືອງໂຮງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ

## 3.3 ການນຳໃຊ້ທີ່ດິນໃນປະຈຸບັນຂອງບ້ານ

ການນຳໃຊ້ທີ່ດິນໃນໄລຍະຜ່ານມາຂອງບ້ານ ຕາມຕົວຈິງແລ້ວເຫັນໄດ້ວ່າປະຊາຊົນພາຍໃນບ້ານສ່ວນໃຫຍ່ແມ່ນຖືອາຊີບເຮັດນາເປັນສ່ວນໃຫຍ່ ແລະ ຖືເອົາການເຮັດກະສິກຳປູກຝັງລ້ຽງສັດເປັນສຳຮອງ ໃນໄລຍະຜ່ານມາການນຳໃຊ້ທີ່ດິນຂອງປະຊາຊົນພາຍໃນບ້ານມີຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຄື:

- **ຂໍ້ສະດວກ:** ເນື່ອງຈາກພື້ນທີ່ດັ່ງກ່າວສ່ວນໃຫຍ່ເປັນຮາບພຽງ ແລະ ມີພື້ນທີ່ເປັນລຸບໂນນຈຳນວນໜຶ່ງ ເຊິ່ງມີຄວາມເໝາະສົມສຳລັບການເຮັດກະສິກຳ ໂດຍສະເພາະການເຮັດນາ ແລະ ລ້ຽງສັດໃຫຍ່ເປັນຕົ້ນແມ່ນ ລ້ຽງງົວ, ລ້ຽງຄວາຍ ແລະ ສັດອື່ນໆ.
- **ຂໍ້ຫຍຸ້ງຍາກ:** ເນື້ອທີ່ດິນທີ່ຈະນຳໃຊ້ເຂົ້າໃນການຜະລິດກະສິກຳເຊັ່ນ: ເນື້ອທີ່ ດິນນາ ແລະ ດິນປູກພືດກະສິກຳທົ່ວໄປເພື່ອຮັບປະກັບທາງດ້ານສະບຽງອາຫານໃຫ້ແກ່ປະຊາຊົນພາຍໃນບ້ານກໍ່ຄືພາຍໃນເມືອງ ແມ່ນມີຂໍ້ຈຳກັດດັ່ງນັ້ນຈິ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການຜະລິດ ບໍ່ມີສາຍນ້ຳພຽງພໍ, ບໍ່ມີລະບົບຊົນລະປະທານເປັນສາເຫດໃຫ້ການປູກຟັງລ້ຽງສັດຂ້ອນຂ້າງຫຍຸ້ງຍາກ.

ສະພາບການນຳໃຊ້ທີ່ດິນໃນປະຈຸບັນຂອງບ້ານ, ອີງຕາມການວິເຄາະຂໍ້ມູນຂອງບ້ານຕົວຈິງແລ້ວ ເຫັນໄດ້ວ່າ: ປະຊາຊົນພາຍໃນບ້ານສ່ວນໃຫຍ່ແມ່ນຍຶດຖືເອົາການເຮັດກະສິກຳເປັນຕົ້ນ. ດັ່ງນັ້ນ, ການນຳໃຊ້ທີ່ດິນປະຈຸບັນ ມີທັງໝົດ 6 ປະເພດຄື: ທີ່ດິນກະສິກກຳ, ມີເນື້ອທີ 413.91 ເຮັກຕາ, ກວມເອົາ 18,18 ເປີເຊັນ, ທີ່ດິນປຸກສ້າງ, ມີເນື້ອທີ 44.32 ເຮັກຕາ, ກວມເອົາ 1,95 ເປີເຊັນ, ທີ່ດິນວັດທະນາທຳ, ມີເນື້ອທີ 21.01 ເຮັກຕາ, ກວມເອົາ 0,92 ເປີເຊັນ, ທີ່ດິນປ່າໄມ້, ມີເນື້ອທີ 1.680,64 ເຮັກຕາ, ກວມເອົາ 73.83 ເປີເຊັນ, ທີ່ດິນໂຍທາທິການ ແລະ ຂົນສົ່ງ, ມີເນື້ອທີ 8.85 ເຮັກຕາ, ກວມເອົາ 0.37 ເປີເຊັນ ແລະ ທີ່ດິນບໍລິເວນນ້ຳ, ມີເນື້ອທີ 108,06 ເຮັກຕາ, ກວມເອົາ 4.75 ເປີເຊັນ ດັ່ງລາຍລະອຽດຕາຕະລາງ ແລະ ແຜນທີ່ລຸ່ມນີ້:

ຕາຕະລາງທີ 6 ສັງລວມປະເພດການນຳໃຊ້ທີ່ດິນປະຈຸບັນ ບ້ານເມືອງໂຮງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ

| ລ/ດ | ປະເພດທີ່ດິນ | ລະຫັດດິນ | ສີ | ເນື້ອທີ່ ເຮັກຕາ | ເປີເຊັນ % |
|---|---|---|---|---|---|
| **I** | **ທີ່ດິນກະສິກຳ** | **A** | | **413.91** | **18.18** |
| 1 | ນາ | A_1 | | 378.20 | 16.61 |
| 2 | ສວນມັນຕົ້ນ | A_2 | | 14.20 | 0.62 |
| 3 | ໜອງປາ | A_6 | | 21.51 | 0.94 |
| **II** | **ທີ່ດິນປຸກສ້າງ** | **B** | | **44.32** | **1.95** |
| 1 | ດິນປຸກສ້າງບຸກຄົນ | B_1 | | 44.32 | 1.95 |
| 2 | ໂຮງຮຽນ | B_2 | | 1.28 | 0.06 |
| **III** | **ທີ່ດິນວັດທະນະທຳ** | **C** | | **21.01** | **0.92** |
| 1 | ວັດ | C_1 | | 2.65 | 0.12 |
| 2 | ປ່າຊ້າ | C_2 | | 13.42 | 0.59 |
| | ປ່າມະເຫສັກ | C_2 | | 7.60 | 0.33 |
| **IV** | **ທີ່ດິນປ່າໄມ້** | **F** | | **1680.64** | **73.83** |
| 1 | ປ່າຊົມໃຊ້ | F_1 | | 1675.45 | 73.60 |
| 2 | ປ່າປ້ອງກັນ (ສູນພັກພິງໄຟພິບັດ) | F_3 | | 5.18 | 0.23 |
| **V** | **ທີ່ດິນໂຍທາທິການ ແລະ ຂົນສົ່ງ** | **R** | | **8.45** | **0.37** |
| 1 | ທາງດິນແດງ | R_2 | | 8.45 | 0.37 |
| **VI** | **ທີ່ດິນບໍລິເວນນ້ຳ** | **W** | | **108.06** | **4.75** |
| 1 | ຫ້ວຍ | W_1 | | 7.82 | 0.34 |
| | ນ້ຳເຊບັ້ງຫຽງ | W_1 | | 91.20 | 4.01 |
| 2 | ໜອງຮັບນ້ຳ | W_3 | | 9.04 | 0.40 |
| **ລວມເນື້ອທີ່** | | | | **2,276.39** | **100.00** |
| **ລວງຮອບທັງໝົດ** | | | | **26.15 Km** | |

ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025




ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025

ຮູບທີ່ 2 ແຜນທີ່ການນຳໃຊ້ທີ່ດິນປະຈຸບັນ ບ້ານເມືອງໂຮງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ

# IV. ການຈັດສັນການນຳໃຊ້ທີ່ດິນ

## 4.1 ການກຳນົດເຂດທີ່ດິນຂອງບ້ານ

ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃຫ້ຖືກກັບລະບຽບການ ແລະ ເຫມາະສົມກັບສະພາບຕົວຈິງຂອງແຜນພັດທະນາຂອງບ້ານໃຫ້ກາຍເປັນເຂດພັດທະນາເສດຖະກິດ-ສັງຄົມ ໃນອະນາຄົດ ທາງທີມງານຈັດສັນ ແລະ ສ້າງແຜນທີ່ຕາດິນ ໄດ້ປະສານສົມທົບກັບອົງການປົກຄອງບ້ານຂະແໜງການທີ່ກ່ຽວຂ້ອງ ໄດ້ກຳນົດມີ 3 ເຂດ ດັ່ງນີ້:

### 4.1.1 ເຂດທີ່ດິນອະນຸລັກ

ກ. ທີ່ດິນວັດທະນະທຳ: ແມ່ນປະກອບມີ: ທີ່ດິນວັດ, ປ່າຊ້າ ແລະ ດິນປ່າມະເຫສັກ;

ຂ. ທີ່ດິນປ່າໄມ້: ປະກອບມີ: ປ່າປ້ອງກັນໄຟພິບັດ, ປ່າປ້ອງກັນແຫຼ່ງນ້ຳ, ປ່າຊົມໃຊ້ຂອງບ້ານ.

ຄ. ດິນບໍລິເວນນ້ຳຂອງບ້ານແມ່ນປະກອບມີ: ເຂດສະຫງວນແຄມເຊບັ້ງຫຽງ

### 4.1.2 ເຂດທີ່ດິນນຳໃຊ້ນຳ

- **ທີ່ດິນກະສິກຳ**: ເຂດທີ່ດິນກະສິກຳຂອງ ບ້ານເມືອງໂຮງ ປະກອບມີ: ດິນນາ ແມ່ນຢູ່ທາງທິດໃຕ້ຂອງບ້ານ, ທີ່ດິນສາມາດສົ່ງເສີມການລ້ຽງສັດ ແລະ ໜອງປາລວມບ້ານໃນອານາຄົດແມ່ນກຳນົດເອົາຢູ່ທາງທິດເໜືອ ແລະ ທິດຕາເວັນອອກຂອງບ້ານ.
- **ທີ່ດິນນຳໃຊ້ປຸກສ້າງທີ່ຢູ່ອາໃສປະຈຸບັນຂອງບ້ານ**: ແມ່ນຕັ້ງຢູ່ແຄມເຊບັ້ງຫຽງ ແລະ ແຄມດົງສະມັນ
- **ດິນປຸກສ້າງຂອງລັດປະກອບມີ:** ດິນໂຮງຮຽນ ປະຖົມສົມບູນ ບ້ານເມືອງໂຮງ

❖ **ເຂດທີ່ດິນເພື່ອພັດທະນາ:** ໝາຍເຖິງເຂດພື້ນທີ່ຈະຂະຫຍາຍລະບົບພື້ນຖານໂຄງລ່າງຂອງບ້ານ, ເຂດທີ່ຂະຫຍາຍພື້ນທີ່ປຸກສ້າງ ຂອງບ້ານເພື່ອຮອງຮັບການເພີ່ມຂື້ນຂອງປະຊາກອນໃນອະນາຄົດ, ການຂະຫຍາຍພື້ນທີ່ດິນດັ່ງກ່າວ ແມ່ນໄດ້ກຳນົດເອົາ ລຽບຕາມແຄມສອງຝາກທາງແຍກໄປບ້ານກະທອງເຊ ແລະ ບ້ານກະລຶມ-ວັງແຂ້ (ໜອງແຂ້) ກຳນົດອອກໄປເບື້ອງລະ 50 ແມັດ, ສະເໜີຕັດເສັ້ນທາງຜ່ານກາງ.

### 4.1.3 ຄວາມຮັບຮູ້ໂດຍລວມໃນການສຳຫຼວດຈັດສັນທີ່ດິນ

ການສຳຫຼວດຈັດສັນແມ່ນຈຸດເລີ້ມຕົ້ນທີ່ຈະຕ້ອງໄດ້ເອົາໃຈໃສ່ເປັນບຸລິມະສິດທຳອິດຂອງວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃນແຕ່ລະປະເພດ ແລະ ແຕ່ລະທ້ອງຖິ່ນຕິດພັນກັບການປົກປັກຮັກສາແລະຄຸ້ມຄອງປ່າໄມ້ເພື່ອຮັກສາແຫຼ່ງນ້ຳ,ຊີວະນາໆພັນແລະຄວາມອຸດົມສົມບູນຂອງດິນໃນແຕ່ລະເຂດໂດຍອີງໃສ່ຈຸດພິເສດ, ທີ່ຕັ້ງ ແລະ ພູມສັນຖານຂອງປະເທດເຮົາເຊິ່ງປະກອບມີເຂດທົ່ງພຽງ, ປ່າໂຄກ.ຂົງເຂດເຫຼົ່ານີ້, ລ້ວນແລ້ວແຕ່ແມ່ນເຂດທີ່ມີປະຊາຊົນບັນດາເຜົ່າໄດ້ຕັ້ງຖິ່ນຖານພູມລຳເນົາຢູ່ຢ່າງກະແຈກກະຈາຍ, ຊຶ່ງເຂົາເຈົ້າໄດ້ດຳລົງຊີວິດ, ທຳມາຫາກິນທີ່ຕິດພັນກັບປ່າໄມ້,ເຄື່ອງປ່າຂອງດົງແລະອາຫານຈາກທຳມະຊາດຕາມຫ້ວຍໜອງຄອງບຶງ ແລະ ແມ່ນ້ຳລຳເຊຕ່າງໆ, ການດຳລົງຊີວິດລັກ ສະນະນີ້ແມ່ນໄດ້ເພິ່ງພາອາໄສຄວາມອຸດົມສົມບູນຂອງທຳມະຊາດເປັນຕົ້ນຕໍ, ແຕ່ຖ້າຫາກຍາມໃດຄວາມອຸດົມສົມບູນເຫຼົ່ານັ້ນຫາກມີການປ່ຽນແປງ ຫຼື ຫຼຸດນ້ອຍຖອຍລົງການດຳລົງຊີວິດຂອງປະຊາຊົນກໍຈະມີຄວາມຫຍຸ້ງຍາກຂຶ້ນ ແລະ ອີກດ້ານໜຶ່ງການເພີ້ມຂື້ນຂອງພົນລະເມືອງກໍເປັນສາຍເຫດໜຶ່ງທີ່ພາໃຫ້ມີຄວາມການຕ້ອງນຳໃຊ້ທີ່ດິນ ແລະຊັບພະຍາກອນທຳມະຊາດເພີ້ມຂຶ້ນ, ມີການຈັບຈອງທີ່ດິນແບບຊະຊາຍອັນກໍ່ໃຫ້ເກີດມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດໃນສັງຄົມຫຼາຍຂຶ້ນ,ການຄຸ້ມຄອງແລະປົກປັກຮັກສາຄວາມອຸດົມສົມບູນຂອງທຳມະຊາດກໍ່ເປັນບັນຫາຍາກ,ຖ້າຫາກບໍ່ມີການສຳຫຼວດຈັດສັນ,ຈັດແບ່ງເຂດ,ຈັດແບ່ງປະ ເພດທີ່ດິນແລະວາງແຜນຄຸ້ມຄອງ, ປົກປັກຮັກສາ, ພັດທະນາແລະນຳໃຊ້ທີ່ດິນ, ຊັບພະຍາກອນທຳມະຊາດແລະແຫຼ່ງນ້ຳໃຫ້ເຂົ້າສູ່ລະບຽບຫຼັກການແລະກົດໝາຍທີ່ກຳນົດໄວ້.

ການສຳຫຼວດຈັດສັນທີ່ດິນແຕ່ລະເຂດແລະແຕ່ລະປະເພດ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍກະສິກຳ, ກົດໝາຍວ່າດ້ວຍປ່າໄມ້ , ກົດໝາຍວ່າດ້ວຍນ້ຳ, ກົດໝາຍວ່າດ້ວຍໄຟຟ້າ, ກົດໝາຍວ່າດ້ວຍບໍ່ແຮ່, ກົດໝາຍວ່າດ້ວຍການປົກປັກຮັກສິ່ງແວດລ້ອມ,ກົດໝາຍວ່າດ້ວຍຜັງເມືອງ, ກົດໝາຍວ່າດ້ວຍທາງຫຼວງ, ກົດໝາຍວ່າດ້ວຍອຸດສະຫະກຳປຸງແຕ່ງ, ບັນດາກົດໝາຍແລະນິຕິກຳອື່ນໆທີ່ກ່ຽວຂ້ອງ.

ການສຳຫຼວດຈັດສັນທີ່ດິນແມ່ນຕ້ອງອີງໃສ່ຈຸດທີ່ຕັ້ງຂອງພື້ນທີ່ຕົວຈິງ ຕາມພູມສັນຖານ ແລະ ຄວາມຄ້ອຍຊັນທີ່ໄດ້ກຳນົດໄວ້ໃນມາດຕະການນຳໃຊ້ທີ່ດິນຄື:

- **ຄວາມຄ້ອຍຊັນແຕ່ 0-5%** ແມ່ນກຳນົດເປັນທີ່ດິນນາສຳລັບປູກເຂົ້າ ແລະການກະສິກຳອື່ນໆທຸກປະເພດ, ຖ້າຈະປູກພືດລົ້ມລຸກຄວນປຸກພືດຄຸມດິນເພື່ອບໍ່ໃຫ້ຫຍ້າຂຶ້ນ ແລະ ຖ້າຈະປູກໄມ້ຢືນຕົ້ນກໍຕ້ອງມີລະບົບລະ ບາຍນ້ຳຢ່າງເໝາະສົມ.
- **ຄວາມຄ້ອຍຊັນແຕ່ 5-15 %** ແມ່ນກຳນົດເປັນພື້ນທີ່ກະສິກຳຫຼືປ່າໄມ້ທຸກປະເພດ (ນອກຈາກການເຮັດຊົນລະປະທານ) ແຕ່ຖ້າຈະປູກພືດລົ້ມລຸກ ເພື່ອປ້ອງກັນການເຊາະເຈື່ອນ.
- **ຄວາມຄ້ອຍຊັນແຕ່ 15-25%** ແມ່ນກຳນົດເປັນພື້ນທີ່ປູກໄມ້ທຸກປະເພດແຕ່ວ່າຊັນໂພດສຳລັບທົ່ງຫ້ຍາລ້ຽງສັດ,ຖ້າຈະປູກພືດລົ້ມລຸກຕ້ອງເຮັດເປັນນາຂັ້ນໄດເພື່ອເປັນການປົກປັກຮັກສາໜ້າດິນເສຍກ່ອນ.
- **ຄວາມຄ້ອຍຊັນແຕ່ 25-35%** ແມ່ນກຳນົດເປັນພື້ນທີ່ປູກຕົ້ນໄມ້ທຸກຊະນິດ ຫຼື ຖ້າຈະປູກພືດປະສົມປະສານກັບການປູກປ່າ ຫຼື ຈະປູກໄມ້ຊຸມຊົນກໍໄດ້,ຖ້າຈະປູກຫ້ຍາລ້ຽງສັດ ກໍຕ້ອງກ່ຽວເອົາຫຍ້າໄປໃຫ້ສັດກິນຢູ່ໃນຄອກ ແລະ ຖ້າຈະປູກໄມ້ສອນຕ້ອງມີພືດຄຸມດິນລະຫວ່າງກົກໄມ້ຕະຫຼອດແນວ.

- **ຄວາມຄ້ອຍຊັນສູງກ່ວາ 35-45%** ແມ່ນກຳນົດເປັນປ່າປ້ອງກັນການເຊາະເຈື່ອນຂອງດິນ, ປ່າປ້ອງກັນແຫຼ່ງນ້ຳແລະປ່າປົກປັກຮັກສາຊີວະນາໆພັນເທົ່ານັ້ນ,ໃນກໍລະນີໃຊ້ເປັນປ່າຜະລິດເຄື່ອງປ່າຂອງດົງ ກໍຈະຕ້ອງລະມັດລະວັງບໍ່ໃຫ້ທີ່ດິນເກີດການເຊາະເຈື່ອນໃນເວລາຂຸດຄົ້ນເຄື່ອງປ່າຂອງດົງນັ້ນ.
- **ຄວາມຄ້ອຍຊັນ 45% ຂຶ້ນໄປ** ແມ່ນບໍ່ເໝາະສົມສໍາລັບປ່າຜະລິດແລ້ວ, ຕ້ອງເປັນປ່າສະຫງວນ, ປ່າປ້ອງກັນແຫຼ່ງນ້ຳ, ຊີວະນາໆພັນ ແລະ ປ້ອງກັນບໍ່ໃຫ້ດິນເຊາະເຈື່ອນ.

## 4.2 ການກຳນົດປະເພດທີ່ດິນຂອງບ້ານ

ອີງຕາມຂໍ້ມູນການສໍາຫຼວດ ແມ່ນສາມາດສັງລວມ ແລະ ຈັດແບ່ງປະເພດການນໍາໃຊ້ທີ່ດິນຂອງບ້ານເມືອງໂຮງອອກເປັນ 6 ປະເພດທີ່ດິນ ເຊິ່ງລາຍລະອຽດຂອງປະເພດທີ່ດິນມີຄື:

❖ **<u>ການກຳນົດ ທີ່ດິນກະສິກຳ</u>**

ທີ່ດິນກະສິກຳ ແມ່ນທີ່ດິນທີ່ໄດ້ກຳນົດໄວ້ເພື່ອນໍາໃຊ້ເຂົ້າໃນການປູກຝັງ, ລ້ຽງສັດ ແລະ ການຄົ້ນຄ້ວາທົດລອງທາງດ້ານກະສິກໍາ. ເຂດທີ່ດິນກະສິກໍາຂອງບ້ານເມືອງໂຮງ ປະກອບມີ: ດິນນາ, ດິນປູກພືດກະສິກໍາທົ່ວໄປ, ເຂດລ້ຽງສັດ ແລະ ໜອງລວມບ້ານແມ່ນກຳນົດເອົາຢູ່ທາງທິດເໜືອ ແລະ ທິດຕາເວັນຕົກຂອງບ້ານ.

❖ **<u>ການກຳນົດ ທີ່ດິນປຸກສ້າງ</u>**

ທີ່ດິນປຸກສ້າງແມ່ນທີ່ດິນທີ່ກຳນົດໄວ້ເພື່ອນໍາໃຊ້ເຂົ້າໃນ ການປຸກສ້າງທີ່ຢູ່ອາໄສສໍານັກງານ, ອົງການ ແລະ ສະຖານທີ່ສາທາລະນະ. ເຂດທີ່ດິນປຸກສ້າງຂອງບ້ານ ແມ່ນລຽບຢູ່ຕາມສອງຝາກທາງເຂົ້າບ້ານ.

- ທີ່ດິນປຸກສ້າງທີ່ຢູ່ອາໃສປະຈຸບັນ:ກໍານົດຢູ່ແຄມເຊບັ້ງຫຽງ,
- ດິນປຸກສ້າງຂະຫຍາຍໃໝ່ໄດ້ກໍານົດຕາມສອງຝາກທາງແຍກໄປບ້ານໜອງສອງຫ້ອງ
- ດິນປຸກສ້າງຂອງລັດປະກອບມີ:ທີ່ດິນຫ້ອງການບ້ານ ແລະ ທີ່ດິນປຸກສ້າງໂຮງຮຽນ

❖ **<u>ການກຳນົດ ທີ່ດິນວັດທະນະທຳ</u>**

ທີ່ດິນວັດທະນະທໍາ ແມ່ນສະຖານທີ່ຕັ້ງຂອງມໍລະດົກທາງດ້ານວັດທະນະທໍາ ທີ່ຕິດພັນກັບຮ່ອງຮອຍປະຫວັດສາດ, ວັດຖຸບູຮານ, ປູສະນີຍະສະຖານ, ທິວທັດທຳມະຊາດ, ສິ່ງປຸກສ້າງດ້ານວັດທະນະທໍາ ແລະ ສະຖານທີ່ອື່ນໆ ທີ່ລັດກຳນົດໃຫ້ປັນທີ່ດິນວັດທະນະທໍາ ແລະ ການທ່ອງທ່ຽວ. ທີ່ດິນວັດທະນະທຳຂອງບ້ານເມືອງໂຮງປະກອບມີ: ດິນວັດ, ປ່າຊ້າ ແລະ ດິນປ່າມະເຫສັກ ແຄມເຊບັ້ງຫຽງ

❖ **<u>ການກຳນົດ ທີ່ດິນປ່າໄມ້</u>**

ທີ່ດິນປ່າໄມ້ ແມ່ນເນື້ອທີ່ດິນທຸກຕອນທີ່ມີປ່າປົກຫຸ້ມ ຫຼື ທີ່ດິນບໍ່ມີປ່າປົກຫຸ້ມ ເຊິ່ງລັດກຳນົດໃຫ້ເປັນທີ່ດິນປ່າໄມ້ຂອງບ້ານ ແມ່ນປະກອບມີ : ປ່າປ້ອງກັນນ້ຳເຊບັ້ງຫຽງ, ປ່າປ້ອງກັນຫ້ວຍພະແລງ, ຫ້ວຍລະແກງ, ປ່າຊົມໃຊ້.

❖ **<u>ການກຳນົດ ທີ່ດິນໂຍທາທິການ ແລະ ຂົນສົ່ງ</u>**

ທີ່ດິນໂຍທາທິການ ແລະ ຂົນສົ່ງ ແມ່ນທີ່ດິນສໍາລັບໃຊ້ເປັນເສັ້ນທາງ, ຂອບທາງ, ຮ່ອງນ້ຳ, ເຂດສະຫງວນແລວ ທາງ, ສະຖານທີ່ຕັ້ງຂົວ ແລະ ທີ່ດິນອື່ນໆ ທີ່ໃຊ້ເຂົ້າໃນວຽກງານການຂົນສົ່ງ ປະກອບມີ 2 ປະເພດ:

- ເສັ້ນທາງ ມີຄວາມກວ້າງ 8 ແມັດ ຈາກໃຈກາງທາງເບື້ອງລະ 4 ແມັດ;
- ເສັ້ນທາງຕັດໃໝ່ ມີຄວາມກວ້າງ 8 ແມັດ ຈາກໃຈກາງທາງເບື້ອງລະ 4 ແມັດ;

❖ **<u>ການກຳນົດ ທີ່ດິນບໍລິເວນນ້ຳ</u>**

ທີ່ດິນບໍລິເວນນ້ຳ ແມ່ນທີ່ດິນເຊິ່ງຢູ່ພື້ນນ້ຳ ຫຼື ຢູ່ຂອບເຂດອ້ອມແອ້ມແຫຼ່ງນ້ຳເຊັ່ນ: ທີ່ດິນພື້ນນ້ຳ, ທີ່ດິນຍອດນ້ຳ,ທີ່ດິນແຄມນ້ຳ, ທີ່ດິນກາງນ້ຳ, ທີ່ດິນປົ່ງໃໝ່, ທີ່ດິນນ້ຳບົກປະ ຫຼື ທີ່ດິນທີ່ເກີດຂຶ້ນຈາກການດັດແປງ ທີ່ດິນບໍລິເວນນ້ຳຂອງບ້ານ ແມ່ນປະກອບມີ: ຫ້ວຍ ແລະ ຮ່ອງຕ່າງໆ ຕ້ອງໄດ້ກໍານົດປ່າປ້ອງກັນການເຊາະເຈື່ອນ, ເພື່ອຮັກສາດິນແຄມນ້ຳເຊບັ້ງຫຽງ, ແຄມຫ້ວຍຕ່າງໆໃຫ້ມີຄວາມຍືນຍົງຕະຫຼອດໄປ.

ຕາຕະລາງທີ 7 ສັງລວມປະເພດການຈັດສັນທີ່ດິນບ້ານເມືອງໂຮງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ

| ລ/ດ | ປະເພດທີ່ດິນ | ລະຫັດທີ່ດິນ | ສີ | ເນື້ອທີ່ ເຮັກຕາ | ເປີເຊັນ % |
|---|---|---|---|---|---|
| **I** | **ທີ່ດິນກະສິກຳ** | **AZ** | | **390.85** | **17.17** |
| 1 | ນາ | AZ_1 | | 378.62 | 16.63 |
| 2 | ໜອງປາ | AZ_6 | | 12.23 | 0.54 |
| **II** | **ທີ່ດິນປຸກສ້າງ** | **BZ** | | **110.26** | **4.84** |
| 1 | ດິນປຸກສ້າງບຸກຄົນ | BZ_1 | | 40.48 | 1.78 |
| 2 | ໂຮງຮຽນ | BZ_2 | | 13.51 | 0.59 |
| 3 | ທີ່ດິນແຮຂະຫຍາຍປຸກສ້າງ | BZ_3 | | 50.61 | 2.22 |
| | ບ່ອນຕັ້ງສູນພັກພິງໄຟພິບັດ | BZ_3 | | 5.18 | 0.23 |
| | ສະໜາມຂີ້ເຫຍື່ອ | BZ_3 | | 0.47 | 0.02 |
| **III** | **ທີ່ດິນວັດທະນະທຳ** | **CZ** | | **20.83** | **0.92** |
| 1 | ວັດ | CZ_1 | | 2.65 | 0.12 |
| 2 | ປ່າມະເຫສັກ | CZ_2 | | 4.76 | 0.21 |
| | ປ່າຊ້າ | CZ_2 | | 13.42 | 0.59 |
| **IV** | **ທີ່ດິນປ່າໄມ້** | **F** | | **1615.96** | **70.99** |
| 1 | ປ່າຊົມໃຊ້ | F_1 | | 1018.87 | 44.76 |
| 2 | ປ່າປ້ອງກັນຫ້ວຍພະແລງ | F_3 | | 131.03 | 5.76 |
| | ປ່າປ້ອງກັນຫ້ວຍລະແກງ | F_3 | | 72.06 | 0.74 |
| | ປ່າປ້ອງແຄມເຊບັ້ງຫຽງ | F_3 | | 394.00 | 0.29 |
| **V** | **ທີ່ດິນໂຍທາທິການ ແລະ ຂົນສົ່ງ** | **R** | | **16.77** | **0.74** |
| 1 | ທາງດິນແດງ | R_2 | | 10.08 | 0.44 |
| | ເສັ້ນທາງຈະຕັດໃໝ່ | R_2 | | 6.69 | 0.29 |
| **VI** | **ທີ່ດິນບໍລິເວນນ້ຳ** | **W** | | **121.71** | **5.35** |
| 1 | ຫ້ວຍ | W_1 | | 4.51 | 0.20 |
| | ຫ້ວຍພະແລງ | W_1 | | 1.60 | 0.07 |
| | ຫ້ວຍລະແກງ | W_1 | | 1.44 | 0.06 |
| | ນ້ຳເຊບັ້ງຫຽງ | W_1 | | 71.65 | 3.15 |
| 2 | ໜອງຮັບນ້ຳ | W_3 | | 7.50 | 0.33 |
| 3 | ເຂດສະຫງວນແຄມເຊບັ້ງຫຽງ | W_4 | | 35.01 | 1.54 |
| | **ລວມເນື້ອທີ່** | | | **2276.39** | **100.00** |
| | **ລວງຮອບທັງໝົດ** | | | **26.15 Km** | |

ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025




ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົນນະບູລີ, ປີ 2025

ຮູບທີ່ 3 ແຜນທີ່ການຈັດສັນທີ່ດິນບ້ານເມືອງໂຮງ, ເມືອງຊົນນະບູລີ ແຂວງສະຫວັນນະເຂດ

ພາຍຫຼັງໄດ້ມີການວາງແຜນຈັດສັນ, ຈັດແບ່ງເຂດ ແລະ ຈັດແບ່ງປະເພດທີ່ດິນຂອງບ້ານເມືອງໂຮງ ແລ້ວເຫັນວ່າ: ເນື້ອທີ່ດິນແຕ່ລະປະເພດມີການປ່ຽນແປງບາງປະເພດທີ່ດິນກໍ່ມີການເພີ່ມຂຶ້ນ ແລະ ບາງປະເພດທີ່ດິນກໍ່ມີການລຸດລົງຍ້ອນວ່າ:

| | | |
|---|---|---|
| 1 | ທີ່ດິນກະສິກຳ | ເນື້ອທີ່ດິນກະສິກຳຫລຸດລົງຍ້ອນວ່າ: ບ້ານໄດ້ກຳນົດເຂດຈະຂະຫຍາຍການປຸກສ້າງ, ກຳນົດເຂດສະຫງວນແຄມນ້ຳເຊບັ້ງຫຽງ ແລະ ຟື້ນຟູເຂດບຸກລຸກປູກມັນຕົ້ນ. |
| 2 | ທີ່ດິນປຸກສ້າງ | ມີເນື້ອທີ່ເພີ່ມຂຶ້ນຍ້ອນວ່າ: ໄດ້ມີການກຳນົດເຂດຈະຂະຫຍາຍການປຸກສ້າງເພີ່ມຂຶ້ນ ເພື່ອຮອງຮັບການຍ້າຍບ້ານໃນອະນາຄົດ. |
| 3 | ທີ່ດິນວັດທະນະທຳ | ຫລຸດລົງເລັກໜ້ອຍຍ້ອນກຳນົດເຂດສະຫງວນແຄມນ້ຳເຊບັ້ງຫຽງ |
| 4 | ທີ່ດິນປ່າໄມ້ | ມີເນື້ອທີ່ເພີ່ມຂຶ້ນຍ້ອນໄດ້ກຳນົດເຂດປ່າປ້ອງກັນແຫລ່ງນ້ຳຕ່າງໆ ແລະ ຕັດເສັ້ນທາງໃໝ່, ຂະຫຍາຍເນື້ອທີ່ປຸກສ້າງ. |
| 5 | ທີ່ດິນໂຍທາທິການແລະຂົນສົ່ງ | ມີເນື້ອທີ່ເພີ່ມຂຶ້ນຍ້ອນວ່າບ້ານໄດ້ສະເໜີຕັດເສັ້ນທາງໃໝ່ |
| 6 | ທີ່ດິນບໍລິເວນນ້ຳ | ມີເນື້ອທີ່ເພີ່ມຂຶ້ນ ຍ້ອນວ່າ: ໄດ້ມີການກຳນົດເຂດສະຫງວນແຄມນ້ຳເຊບັ້ງຫຽງ ແລະ ເຂດສະຫງວນແຄມຫ້ວຍນ້ຳນ້ອຍຕ່າງໆ ຈຶ່ງເຮັດໃຫ້ທີ່ດິນບໍລິເວນນ້ຳມີເນື້ອທີ່ເພີ່ມຂຶ້ນ |

ຕາຕະລາງທີ 8 ສົມທຽບລະຫວ່າງເນື້ອທີ່ການນຳໃຊ້ດິນປະຈຸບັນ ແລະ ເນື້ອທີ່ການຈັດສັນທີ່ດິນ

| ລ/ດ | ປະເພດການນຳໃຊ້ | ເນື້ອທີ່ການນຳໃຊ້ທີ່ດິນປະຈຸບັນ (ha) | ກວມສ່ວນຮ້ອຍ (%) | ເນື້ອທີ່ການຈັດສັນນຳໃຊ້ທີ່ດິນ (ha) | ກວມສ່ວນຮ້ອຍ(%) | ການປ່ຽນແປງ (%) |
|---|---|---|---|---|---|---|
| 1 | ທີ່ດິນທີ່ດິນກະສິກຳ | 413.91 | 18.18 | 390.85 | 17.17 | -1.01 |
| 2 | ທີ່ດິນປຸກສ້າງ | 44.32 | 1.95 | 110.26 | 4.84 | 2.90 |
| 3 | ທີ່ດິນວັດທະນະທຳ | 21.01 | 0.92 | 20.83 | 0.92 | -0.01 |
| 4 | ທີ່ດິນປ່າໄມ້ | 1680.64 | 73.83 | 1615.96 | 70.99 | -2.84 |
| 5 | ທີ່ດິນໂຍທາທິການ ແລະ ຂົນສົ່ງ | 8.45 | 0.37 | 16.77 | 0.74 | 0.37 |
| 6 | ທີ່ດິນບໍລິເວນນ້ຳ | 108.06 | 4.75 | 121.71 | 5.35 | 0.60 |
| **ລວມເນື້ອທີ່ທັງໝົດ** | | **2276.39** | **100.00** | **2276.39** | **100.00** | |

ແຫຼ່ງຂໍ້ມູນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊົມນະບູລີ, ປີ 2025

## V. ທ່າແຮງໃນການພັດທະນາທີ່ດິນ

### 5.1 ທ່າແຮງໃນການພັດທະນາທີ່ດິນຂອງບ້ານ

ບ້ານເມືອງໂຮງ ເປັນບ້ານໜຶ່ງທີ່ມີທ່າແຮງໃນການປູກພືດອາຍຸສັ້ນ ເປັນຕົ້ນແມ່ນ ປູກເຂົ້າ ແລະ ພືດກະສິກຳທົ່ວໄປ ນອກຈາກນີ້ຍັງມີການລ້ຽງສັດນ້ອຍ ແລະ ຄ້າຂາຍທີ່ເປັນອາຊີບຫຼັກ.

1) ການປູກເຂົ້າ, ຢາສູບ ແລະ ສາລີ
2) ການລ້ຽງສັດໃຫ່ຍປະເພດງົວຄວາຍ ແລະ ຍັງມີສັດນ້ອຍທີ່ລ້ຽງຕາມບ້ານລະດັບຄອບຄົວ.

### 5.2 ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານເມືອງໂຮງ

ອີງໃສ່ທ່າແຮງໃນການພັດທະນາຂອງບ້ານ ແລະ ຄວາມສາມາດຕົວຈິງຂອງບ້ານທີ່ມີຢູ່ນັ້ນ ສາມາດກຳນົດໂຄງການພັດທະນາທີ່ດິນພາຍໃນບ້ານ ເຖິງ ໄດ້ຈັດໂຄງການບຸລິມະສິດຕົ້ນຕໍດັ່ງນີ້:

- ສືບຕໍ່ໂຄງການອອກໃບຢັ້ງຢືນສິດນຳໃຊ້ທີ່ດິນໃນສາມປະເພດປ່າ.
- ສົ່ງເສີມໂຄງການລ້ຽງສັດໃຫຍ່ ແລະ ສັດນ້ອຍ,
- ພື້ນຖານໂຄງລ່າງ ປັບປຸງ ແລະ ຂະຫຍາຍລະບົບຕາໜາງເສັ້ນທາງພາຍໃນບ້ານ;

ທັງ 3 ໂຄງການນີ້ ແມ່ນມອບໃຫ້ຂະແໜງການທີ່ກ່ຽວຂ້ອງຂອງເມືອງ ໃຫ້ພິຈາລະນາຄົ້ນຄ້ວາ ແລະ ຈັດຕັ້ງປະຕິ ບັດ ເພື່ອແນ່ໃສ່ການລົບລ້າງຄວາມທຸກຈົນຂອງທ້ອງຖິ່ນ ກໍຄືເມືອງ ຕາມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານວາງອອກ.

## VI. ລະບຽບການຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ

ພາຍຫລັງທີ່ໄດ້ສຳເລັດ ແລະ ຮັບຮອງເອົາແຜນຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດ, ສ້າງເປັນແຜນທີ່ການນຳໃຊ້ທີ່ດິນຢ່າງເປັນທາງການແລ້ວ ມອບແຜນຈັດສັນທີ່ດິນດັ່ງກ່າວໃຫ້ແກ່ອົງການປົກຄອງທ້ອງຖິ່ນ ບັນດາຂະແໜງ ການຕ່າງໆ ຂອງເມືອງ, ບ້ານເປັນຜູ້ຄຸ້ມຄອງ, ນຳໃຊ້ ແລະ ຕິດຕາມກວດກາຕາມພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບໃຫ້ເຂົ້າສູ່ລະບຽບກົດໝາຍຕ່າງໆ ທີ່ກ່ຽວຂ້ອງກັບທີ່ດິນ ແລະ ນຳພາໃນການສ້າງກົດລະບຽບ ໃນການຄຸ້ມຄອງແຜນຈັດສັນທີ່ດິນດັ່ງກ່າວນີ້ໃຫ້ໄດ້ຮັບຜົນດີ.

**6.1 ການຄຸ້ມຄອງ ທີ່ດິນກະສິກຳ**

ທີ່ດິນກະສິກຳຂອງບ້ານເມືອງໂຮງ ປະກອບມີ: ດິນນາ, ດິນສວນ, ດິນປູດພືດກະສິກຳທົ່ວໄປ, ດິນສົ່ງເສີມການລ້ຽງສັດນ້ອຍ, ການຄຸ້ມຄອງດິນກະສິກຳແມ່ນຫ້າມບໍ່ໃຫ້ປ່ຽນແປງດິນກະສິກຳໄປເປັນດິນປະເພດອື່ນ ຖ້າຈະຫັນປ່ຽນ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງເສຍກ່ອນ

**6.2 ການຄຸ້ມຄອງທີ່ດິນປຸກສ້າງ**

ດິນປຸກສ້າງຂອງບ້ານເມືອງໂຮງ ປະຈຸບັນມີທີ່ດິນປຸກສ້າງທີ່ຢູ່ອາໃສ, ດິນຫ້ອງການບ້ານ, ດິນໂຮງຮຽນ, ດິນຕະຫຼາດ ແລະ ດິນແຮຂະຫຍາຍການປຸກສ້າງ; ການຄຸ້ມຄອງປົກປັກຮັກສາແມ່ນໃຫ້ປະຕິບັດຕາມ ກົດໝາຍ ວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ຢ່າງເຂັ້ມງວດ. ຖ້າຈະມີການຫັນປ່ຽນດິນປະເພດນີ້ ໄປເປັນດິນປະເພດອື່ນໆ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງເສຍກ່ອນ.

**6.3 ການຄຸ້ມຄອງ ທີ່ດິນວັດທະນາທຳ**

ທີ່ດິນວັດທະນະທຳ ແມ່ນໄດ້ກຳນົດເປັນທີ່ດິນສັກສິດຂອງບ້ານເມືອງໂຮງ ຕາມລະບຽບການຄວາມເຊື່ອຖືໃຫ້ຖືກ ຕ້ອງຕາມກົດໝາຍ, ທີ່ດິນປະຫວັດສາດເປັນບ່ອນທ່ຽວຊົມຄວາມສວຍງາມຂອງທຳມະຊາດ, ປົກປັກຮັກສາຄວາມອຸດົມສົມບູນຂອງພູມີປະເທດໃຫ້ຖືກຕາມລະບຽບກົດໝາຍ. ທີ່ດິນວັດທະນາທຳຂອງບ້ານເມືອງໂຮງປະກອບມີ: ດິນວັດ, ດິນປ່າຊ້າ ແລະ ດິນປ່າມະເຫສັກ. ການຄຸ້ມຄອງປົກປັກຮັກສາແມ່ນມອບໃຫ້ການຈັດຕັ້ງຂອງບ້ານ ເປັນຜູ້ຄຸ້ມຄອງຕາມລະບຽບກົດໝາຍ ແລະ ຮີດຄອງປະເພນີ ຫ້າມນຳໃຊ້ທີ່ດິນດັ່ງກ່າວໃນຈຸດປະສົງອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

**6.4 ການຄຸ້ມຄອງ ທີ່ດິນປ່າໄມ້**

ທີ່ດິນປ່າໄມ້ປະກອບມີຄື: ດິນປ່າປ້ອງກັນ (ປ່າປ້ອງກັນຂອງເມືອງ), ປ່າປ້ອງກັນແຫຼ່ງນ້ຳ ແລະ ປ່າຊົມໃຊ້. ທີ່ດິນປ່າໄມ້ແມ່ນຊັບພະຍາກອນອັນລ້ຳຄ່າ, ມີລະບົບນິເວດສະເພາະຂອງມັນ ຊຶ່ງປະກອບມີຊີວະນາໆພັນແຫຼ່ງນ້ຳ, ສັດປ່າ ແລະ ຕົ້ນໄມ້ຫຼາຍຊະນິດທີ່ເກີດຕາມທຳມະຊາດ; ການຄຸ້ມຄອງແມ່ນມອບໃຫ້ອຳນາດການປົກຄອງທ້ອງຖິ່ນປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງຂອງຂັ້ນເມືອງ ແລະ ຂັ້ນແຂວງ ອອກລະບຽບການໃນການຄຸ້ມຄອງ ແລະ ປົກປັກຮັກສາ.

**6.5 ການຄຸ້ມຄອງ ທີ່ດິນໂຍທາທິການ ແລະ ຂົນສົ່ງ**

ລະບົບຕະໜ່າງເສັ້ນທາງຢູ່ບ້ານເມືອງໂຮງ ເມືອງຊົນນະບູລີ ແຂວງສະຫວັນນະເຂດ ແມ່ນປະກອບມີເສັ້ນທາງຢູ່ 03 ປະເພດຄື:

- **<u>ທາງປະເພດທີ 2:</u>** ເສັ້ນທາງເຊື່ອມຕໍ່ລະຫວ່າງບ້ານຫາບ້ານກຳນົດ 16 ແມັດ, ຄືອອກຈາກໃຈກາງທາງເບື້ອງລະ 8 ແມັດ.
- **<u>ທາງປະເພດທີ 3</u>**: ແມ່ນເສັ້ນທາງຮ່ອມ, ທາງຊອຍພາຍໃນບ້ານ ແລະ ໄປເຂດທຳການຜະລິດ, ແມ່ນໄດ້ກຳນົດເອົາຄວາມກ້ວາງ 4 ຫາ 8 ແມັດ, ຄືອອກຈາກໃຈກາງທາງເບື້ອງລະ 2 ຫຼື 4 ແມັດ.

ທີ່ດິນປະເພດດັ່ງກ່າວແມ່ນມອບໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄຸ້ມຄອງເລີຍ ແລະ ໃຫ້ປະຕິບັດຕາມກົດໝາຍທາງຫຼວງ.

**6.6 ການຄຸ້ມຄອງ ທີ່ດິນບໍລິເວນນ້ຳ**

ສຳລັບທີ່ດິນບໍລິເວນນ້ຳ ປະກອບມີ: ຫ້ວຍປາເຫວ, ນອກນັ້ນຍັງມີການສະຫງວນແຄມຫ້ວຍຕ່າງໆໄວ້ເບື້ອງລະ 15 ແມັດ ເພື່ອເປັນການປ້ອງກັນການເຊາະເຈື່ອນ, ເພື່ອຮັກສາດິນແຄມນ້ຳ, ແຄມຫ້ວຍຕ່າງໆໃຫ້ມີຄວາມຍືນຍົງຕະຫຼອດໄປ. ດິນບໍລິເວນນ້ຳຂອງບ້ານ ແມ່ນໄດ້ກຳນົດຕາມແຜນຈັດສັນທີ່ ໝາຍໄວ້ຢູ່ໃນແຜນທີ່ ແລະ ມອບໃຫ້ບ້ານເປັນຜູ້ຄຸ້ມຄອງອອກລະບຽບການ ແລະ ມາດຕາການໃນການຄຸ້ມຄອງ.

## VII. ການຫັນປ່ຽນປະເພດທີ່ດິນ

ໃນກໍລະນີມີການຫັນປ່ຽນການນໍາໃຊ້ທີ່ດິນປະເພດໜຶ່ງໄປສູ່ປະເພດອື່ນ ທີ່ໄດ້ກໍານົດໄວ້ໃນບົດແຜນຈັດສັນທີ່ດິນຂັ້ນບ້ານ/ກຸ່ມບ້ານ ແລະ ໄດ້ຮັບຮອງຈາກ ອົງການປົກຄອງທ້ອງຖິ່ນ ແມ່ນໃຫ້ປະຕິບັດຕາມລະບຽບການຂອງ ຂະແໜງ ການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມໄດ້ວາງອອກ. (ມີເອກະສານແນະນໍາສະເພາະສະບັບເລກທີ່1095/ກຊສ,ລົງວັນທີ 18 ມິຖຸນາ 2024).

## VIII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ

ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງການນໍາໃຊ້ທີ່ດິນ ແລະ ປ່າໄມ້ຂັ້ນບ້ານເພື່ອໃຫ້ແຜນການດັ່ງກ່າວຖືກຈັດຕັ້ງປະຈັດຕັ້ງປະຕິບັດໄປຕາມແຜນທີ່ວາງໄວ້ໃຫ້ມີປະສິດທິຜົນ, ອໍານາດການປົກຄອງເມືອງ, ອໍານາດການປົກຄອງບ້ານ ແລະ ຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ຂອງບ້ານ ຕ້ອງໄດ້ເຮັດໜ້າທີ່ເປັນຜູ້ຊີ້ນໍາ-ນໍາພາ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນດັ່ງນີ້:

### 8.1. ການຈັດຕັ້ງ

ຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ ຂອງບ້ານຕ້ອງປະກອບມີ: ບຸກຄົນທີ່ມີໜ້າທີ່ຕໍາແໜ່ງທີ່ສໍາຄັນໃນອໍານາດການປົກຄອງບ້ານ, ຮັບຜິດຊອບວຽກງານຊີ້ນໍາ, ກວດກາ ແລະ ບໍລິຫານຕ່າງໆ (ເອກະສານຊ້ອນທ້າຍທີ 07)

### 8.2. ບຸກຄະລາກອນ

ນາຍບ້ານ, ຕາງໜ້າອົງການຈັດຕັ້ງມະຫາຊົນ (ຊາວໜຸ່ມ, ແມ່ຍິງ ແລະ ແນວໂຮມ), ກອງຫຼອນ, ປ້ອງກັນ, ປ່າໄມ້ບ້ານ ແລະ ທີ່ດິນບ້ານ.

### 8.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ

- ຈັດຕັ້ງປະຕິບັດມະຕິຄໍາສັ່ງ, ແຈ້ງການ ຂອງເມືອງ, ແຂວງ ກ່ຽວກັບການຄຸ້ມຄອງນໍາໃຊ້ທີ່ດິນແລະ ປ່າໄມ້.
- ຈັດຕັ້ງປະຕິບັດການກວດກາ, ຕິດຕາມ, ວັດແທກຂອບເຂດດິນທໍາການຜະລິດ ໃຫ້ແຕ່ລະຄອບຄົວ,ຊີ້ນໍາແຕ່ລະຄອບຄົວໃນການພັດທະນາທີ່ດິນ, ສົ່ງເສີມການປູກພືດເປັນສິນຄ້າ, ຄຸ້ມຄອງ, ປົກປັກຮັກສາ, ປູກໄມ້, ຟື້ນຟູປ່າ ແລະ ນໍາໃຊ້ຊັບພະຍາກອນປ່າໄມ້ຢ່າງມີປະສິດທິຜົນ, ຕາມແຜນການ ແລະ ລະບຽບການທີ່ໄດ້ຮັບການອະນຸມັດແລ້ວ ຈາກຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ.
- ໂຄສະນາສຶກສາອົບຮົມກ່ຽວກັບຄວາມສໍາຄັນ ແລະ ຄຸນປະໂຫຍດຂອງປ່າໄມ້, ທີ່ດິນປ່າໄມ້, ສັດນໍ້າ,ສັດປ່າ, ແຫຼ່ງນໍ້າ ແລະ ສິ່ງແວດລ້ອມທໍາມະຊາດ ໃຫ້ປະຊາຊົນໃນບ້ານຂອງຕົນເຂົ້າໃຈ.
- ຕິດຕາມ, ເກັບກໍາສະພາບການປ່ຽນແປງຂອງປ່າໄມ້, ສິ່ງແວດລ້ອມ ແລະ ສະພາບການເຄື່ອນໄຫວວຽກງານປ່າໄມ້ ໃນຂອບເຂດບ້ານຂອງຕົນ ແລ້ວລາຍງານໃຫ້ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ.
- ຈັດຕັ້ງປະຊາຊົນຄຸ້ມຄອງ ປ່າໄມ້ ແລະ ທີ່ດິນປ່າໄມ້ໃນຂອບເຂດບ້ານຂອງຕົນ
- ສ້າງລະບຽບການສະເພາະໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້, ແຫຼ່ງນໍ້າ, ສັດນໍ້າ, ສັດປ່າ ແລະ ສິ່ງແວດລ້ອມທໍາມະຊາດ ພາຍໃນບ້ານໃຫ້ຖືກຕ້ອງກັບສະພາບຕົວຈິງຂອງບ້ານຕົນ.
- ສົ່ງເສີມການເຮັດອາຊີບກະສິກໍາຄົງທີ່ ໃຫ້ປະຊາຊົນໃນບ້ານຕົນ ແນໃສ່ຈໍາກັດ ແລະ ກ້າວໄປເຖິງບ່ອນ ຍຸດຕິການຕັດໄມ້ທໍາລາຍປ່າ ແລະ ເພື່ອປົກປັກຮັກສາສິ່ງແວດລ້ອມທໍາມະຊາດ ເຮັດໃຫ້ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ມີຄວາມອຸດົມສົມບູນ.

### 8.4. ຂອບເຂດສິດ

- ກວດກາການອະນຸມັດຕັດໄມ້ ຂອງປະຊາຊົນພາຍໃນບ້ານຕົນ ຕາມລະບຽບການ.
- ຕິດຕາມກວດກາ ແລະ ສະກັດກັ້ນ ການລ່າເນື້ອ ແລະ ຊື້ຂາຍສັດປ່າ ທີ່ບໍ່ຖືກຕ້ອງຕາມລະບຽບການ.
- ຕ້ານ ແລະ ສະກັດກັ້ນ ການເຄື່ອນໄຫວອັນບໍ່ດີ ທີ່ມີຜົນກະທົບຕໍ່ຊັບພະຍາກອນປ່າໄມ້, ແຫຼ່ງນໍ້າ ແລະ ສິ່ງແວດ ລ້ອມເຊັ່ນ: ການລັກລອບຕັດໄມ້, ຈູດປ່າ ແລະ ສະກັດກັ້ນທຸກການກະທຳ ທີ່ເປັນການທຳລາຍຕໍ່ຊັບພະຍາກອນປ່າໄມ້, ສັດນໍ້າ, ສັດປ່າ ແລະ ແຫຼ່ງນໍ້າຢ່າງທັນການ.
- ເຂົ້າຮ່ວມ ແລະ ປະກອບຄຳເຫັນຕໍ່ກອງປະຊຸມຕາມການເຊື້ອເຊີນ.
- ຮຽກປະຊຸມ, ຄົ້ນຄວ້າ, ແກ້ໄຂບັນຫາຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງນຳໃຊ້ທີ່ດິນ ແລະ ປ່າໄມ້.
- ປະຕິບັດສິດອື່ນໆ ຕາມຂັ້ນເທິງມອບໝາຍສະເພາະ ຫຼື ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

### 8.5. ລະບອບແບບແຜນວິທີເຮັດວຽກ

- ລະບອບແບບແຜນວິທີເຮັດວຽກ ຂອງຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ຂອງບ້ານ ມີດັ່ງນີ້:
- ປະຕິບັດຫຼັກການເຮັດວຽກແບບລວມສູນປະຊາທິປະໄຕ,ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນ
- ເຮັດວຽກຢ່າງມີແຜນການ, ມີແຜນກິດຈະກຳລະອຽດ, ການແກ້ໄຂວຽກງານຢ່າງມີຈຸດສຸມ, ມີເປົ້າໝາຍ ແລະ ຄາດໝາຍແຕ່ລະໄລຍະ.
- ການເຄື່ອນໄຫວວຽກງານ ບົນພື້ນຖານການປະສານສົມທົບ ແລະ ມີຄວາມເປັນເອກະພາບພາຍໃນ.
- ທຸກໜ້າວຽກຕ້ອງມີການສຳຫຼວດ, ກວດກາ, ສະຫຼຸບຖອດຖອນບົດຮຽນ ຕີລາຄາຜົນໄດ້ ຜົນເສຍລວມທັງສາເຫດຕ່າງໆຢ່າງຖືກຕ້ອງ ແທດເໝາະກັບສະພາບຕົວຈິງ, ປະຕິບັດລະບອບການລາຍງານ, ຂໍຄຳເຫັນ ແລະ ທິດຊີ້ນຳຈາກຂັ້ນເທິງເປັນປະຈຳ.

### 8.6. ການຕິດຕາມກວດກາ

ການຕິດຕາມ ກວດກາ ການຈັດຕັ້ງປະຕິບັດແຜນການ ແມ່ນຈະຕ້ອງໄດ້ດຳເນີນຫລັງຈາກສຳເລັດວຽກວາງແຜນການນຳໃຊ້ທີ່ດິນ ໄດ້ມີການຈັດພິທີປະກາດມອບຮັບ. ການຕິດຕາມກວດກາ ແມ່ນເພື່ອເປັນການກະຕຸ້ນ ແລະ ເຕືອນໃຫ້ຊາວບ້ານໃນການປະຕິບັດແຜນການນຳໃຊ້ທີ່ດິນ ແລະ ປ່າໄມ້ທີ່ໄດ້ປະກາດຮັບຮອງເອົາ, ເພື່ອກວດກາເບິ່ງຄວາມຖືກຕ້ອງ, ຊຶ່ງຖ້າຫາກຜົນການຕິດຕາມກວດກາອອກມາໃນທາງບວກແຜນການດັ່ງກ່າວກໍ່ຈະບໍ່ຖືກດັດແປງແກ້ໄຂແຕ່ຖ້າຫາກບໍ່ຖືກຕ້ອງ ກັບແຜນການດັ່ງກ່າວ ແມ່ນຈະຕ້ອງໄດ້ຖືກພິຈາລະນາຄືນ ແລະ ດັດແປງ ເພື່ອໃຫ້ອົງການ ຈັດຕັ້ງດັ່ງກ່າວນີ້ສາມາດເຄື່ອນໄຫວໄດ້ດີໃນໄລຍະທຳອິດ ຂອງການດຳເນີນການກວດກາ ແມ່ນຍັງຕ້ອງການຄວາມຊ່ວຍ ເຫລືອທັງທາງດ້ານວິຊາການ, ງົບປະມານຈາກພາກສ່ວນກ່ຽວຂ້ອງເຊັ່ນ: ແຂວງ , ເມືອງ, ກຸ່ມບ້ານ ຕະຫລອດຮອດໂຄງ ການທີ່ກ່ຽວຂ້ອງ.

# ເອກະສານອ້າງອີງ


1. ກົດໝາຍວ່າດ້ວຍທີ່ດິນ, ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019
2. ກົດໝາຍວ່າດ້ວຍທາງຫຼວງ ເລກທີ 04/99ສພຊ, ລົງວັນທີ 3 ເມສາ 1999
3. ກົດໝາຍ ວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ ສະບັບປັບປຸງ, ເລກທີ 23/ສພຊ, ລົງວັນທີ 11 ພຶດ ສະພາ 2017, 2020 ແລະ 2022
4. ກົດໝາຍວ່າດ້ວຍປ່າໄມ້, ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019
5. ດຳລັດວ່າດ້ວຍປ່າສະຫງວນ, ສະບັບເລກທີ 219/ລບ, ລົງວັນທີ 20 ມິຖຸນາ 2023.
6. ດຳລັດວ່າດ້ວຍ ທີ່ດິນບໍລິເວນນໍ້າ ສະບັບເລກທີ 350/ລບ, ລົງວັນທີ 13 ພະຈິກ 2023
7. ແຈ້ງການຂອງກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ 1585/ພບ.ຫກ,ລົງວັນທີ 12 ມັງກອນ 2018
8. ຄູ່ມືແນະນຳກ່ຽວກັບສ້າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ, ສະບັບເລກທີ 2191/ກຊສ.ກທດ, ລົງວັນທີ 12 ພຶດສະພາ 2022

**ຈັດຕັ້ງປະຕິບັດໂດຍ:**

**ສະໜັບສະໜູນໂດຍ:**

ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານ
ລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ

The Intergrated Water Resource Management and Ecosystem-based Adaptation
in the Xe Bang Hieng River Basin and Luang Prabang City Project

ໂຄງການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນ

ອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງຫລວງພະບາງ

ຫນ່ວຍງານຄຸ້ມຄອງໂຄງການ, ກົມຊັບພະຍາກອນນໍ້າ (ກຊນ)

ກະຊວງກະສິກໍາ ແລະ ສິ່ງແວດລ້ອມ (ກກສ)

laoiwrm-eba.com

IWRM -EbA Knowledge Hub